| ໝວດຄວາມຮູ້ພື້ນຖານວິຊາສະເພາະ | ສາຍສ້າງຄູມັດທະຍົມ |
| --- | --- |

# ວິເຄາະຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ



ປີ 2023

# ວິເຄາະຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ

| ສາຍສ້າງຄູມັດທະຍົມ ລະບົບ 4 ປີ | ປີທີ 3 | ພາກຮຽນ1 |
|---|---|---|


**ຮຽບຮຽງໂດຍ:**

ບົວສະຫວັນ ຫອມສີສົມບັດ

**ກວດແກ້ໂດຍ:**

ຄໍາສະຫວັນ ຈັນສີຍະວົງ

ອໍລະວັນ ສີຫາຈັກ

ພູວົງ ຄໍາມະນີວົງ

# ຄຳນຳ

ປຶ້ມວິຊາວິເຄາະຫຼັກສູດພາສາລາວ-ວັນນະຄະດີຊັ້ນມັດທະຍົມປາຍຫົວນີ້ ແມ່ນໄດ້ລວມເອົາທິດສະດີ ແລະ ຫຼັກການຂອງການວິເຄາະຫຼັກສູດ, ຄວາມໝາຍຄວາມສຳຄັນຂອງການວິເຄາະຫຼັກສູດ. ພ້ອມດຽວກັນນັ້ນ, ກໍຍັງໄດ້ນຳສະເໜີກ່ຽວມາດຕະຖານການສອນກັບສະມັດຖະພາບການສອນ, ການວາງແຜນການສອນ.

ໃນປຶ້ມຫົວນີ້ກໍຍັງມີບົດສອນຕົວຢ່າງເຊິ່ງເປັນບົດສອນແບບໃໝ່ນັ້ນກໍຄືແບບ UBD (Understanding By Design) ທີ່ນຳມາປະກອບກັບປຶ້ມຫົວນີ້ ແລະ ຍັງມີການວິເຄາະປຶ້ມແບບຮຽນວິຊາພາສາລາວ-ວັນນະຄະດີຊັ້ນມັດທະຍົມປາຍ

ເຖິງຢ່າງໃດກໍຕາມ, ທ້າຍນີ້ກໍຢາກຝາກເຖິງຄູ-ອາຈານ ຫຼື ຜູ້ອ່ານທັງຫຼາຍທີ່ໄດ້ອ່ານຫຼືວ່າໄດ້ນຳໃຊ້ປຶ້ມຫົວນີ້ ຫາກວ່າມີຈຸດໃດຂາດຕົກບົກຜ່ອງຂ້າພະເຈົ້າກໍໂທດຫຼາຍໆ ແລະ ກໍພ້ອມທີ່ຈະຮັບຄຳຕຳໜິຕິຊົມຈາກທຸກໆທ່ານເພື່ອມາປັບປຸງເຮັດໃຫ້ປຶ້ມຫົວນີ້ສົມບູນຂຶ້ນຕື່ມ.

ບົວສະຫວັນ ທອມສີສົມບັດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

ເລກທີ .56.......ສພ.ວສ

# ໃບຮັບຮອງ

## ອະນຸມັດຜ່ານການຮັບຮອງການຄົ້ນຄວ້າຂຽນເອກະສານປະກອບການສອນ

## ຫົວຂໍ້: ວິເຄາະຫຼັກສູດມັດທະຍົມສຶກສາຕອນປາຍ

- **ອີງຕາມ:** ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະແຜນພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ.
- **ອີງຕາມ:** ແຜນປັບປຸງຄຸນນະພາບ QA ຂອງກະຊວງສຶກສາທິການ ແລະ ກິລາ, ໃນມາດຕະຖານທີ 10 ຕົວຊີ້ວັດທີ 48-50 ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການ.
- **ອີງຕາມ:** ຂໍ້ຕົກລົງວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ສະພາວິທະຍາສາດຂອງວິທະຍາໄລຄູສາລະວັນ ສະບັບເລກທີ 0640/ວຄວ, ລົງວັນທີ 17 ກຸມພາ 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດຄົ້ນຄວ້າຂຽນເອກະສານປະກອບການສອນມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປຶ້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| **ຄະນະກຳມະການກວດສອບ** | **ລາຍເຊັນ** |
|---|---|
| ທ່ານ ອຈ ປທ ນ. ຂົງຄຳ ຈັນທະວົງສັກ | ........................ |
| ທ່ານ ຊອ ປທ ມອນໄຊ ຂັນທະຈັກ | ........................ |
| ທ່ານ ຊອ ປອ ໂພທອງ ພົງສົງຄາມ | ........................ |

**ທີ່ສາລະວັນ, ວັນທີ** 23 MAR 2023

**ປະທານສະພາວິທະຍາສາດ**

ອຈ. ນ ສົມປອງ ແສນທະວິສຸກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ

ຫ້ອງການວິທະຍາສາດສັງຄົມ

ເລກທີ.023.... ສຄ

# ໃບຮັບຮອງການກວດແກ້ການຄົ້ນຄວ້າຂຽນເອກະສານປະກອບການສອນ
# ຫົວຂໍ້: ວິເຄາະຫຼັກສູດມັດທະຍົມສຶກສາຕອນປາຍ

**ຫ້ອງການ**: ວິທະຍາສາດສັງຄົມ

**ຜູ້ຄົ້ນຄວ້າຂຽນເອກະສານປະກອບການສອນ:**

ທ່ານ ຊອ ປທ ນ. ບົວສະຫວັນ ທອມສິສົມບັດ

| **ຄະນະກຳມະການກວດແກ້ບົດ** | **ລາຍເຊັນ** |
| --- | --- |
| ທ່ານ ອຈ ນ. ຄຳສະຫວັນ ຈັນສີຍະວົງ | ................................ |
| ທ່ານ ຊອ ນ. ອໍລະວັນ ສີຫາຈັກ | ................................ |
| ທ່ານ ພູວົງ ຄຳມະນີວົງ | ................................ |

ທີ່ສາລະວັນ, ວັນທີ 22.3.2023

ຫ້ອງການວິທະຍາສາດສັງຄົມ

ນ. ຄຳຂີງ ຈັນທະວົງສັກ

ສາລະບານ

_ບົດທີ1ຄວາມຮູ້ພື້ນຖານກ່ຽວກັບການວິເຄາະຫຼັກສູດ ........................................ 1

1. ຄວາມໝາຍຂອງຫຼັກສູດ ........................................ 1

2.ຄວາມສຳຄັນຂອງຫຼັກສູດ ........................................ 2

3.ໂຄງປະກອບຂອງຫຼັກສູດ ........................................ 4

4. ລັກສະນະຫຼັກສູດທີ່ດີ ........................................ 4

5. ຂະບວນການພັດທະນາຫຼັກສູດ ........................................ 5

ບົດທີ1 (ຕໍ່) ຄວາມຮູ້ພື້ນຖານກ່ຽວກັບການວິເຄາະຫຼັກສູດ ........................................ 6

6.ຄວາມໝາຍຂອງການວິເຄາະຫຼັກສູດ ........................................ 6

7.ຈຸດປະສົງຂອງການວິເຄາະຫຼັກສູດ ........................................ 6

8.ຂັ້ນຕອນການວິເຄາະຫຼັກສູດ ........................................ 6

9.ຄຸນປະໂຫຍດຂອງການວິເຄາະຫຼັກສູດ ........................................ 7

ບົດທີ2ມາດຕະຖານການສອນ ........................................ 8

1.ຄວາມໝາຍຂອງມາດຕະຖານການສອນ ........................................ 8

2.ຈຸດປະສົງຂອງມາດຕະຖານການສອນ ........................................ 8

3.ສາຍພົວພັນລະຫວ່າງມາດຕະຖານການສອນ ແລະ ສະມັດຖະພາບ ........................................ 8

4.ການນຳໃຊ້ມາດຕະຖານການສອນເພື່ອເປັນທິດທາງໃນການປັບປຸງການ ປະຕິບັດການສອນຂອງຄູ ........................................ 9

ບົດທີ3ແຜນການສອນ ........................................ 48

1. ຄວາມໝາຍຂອງການວາງແຜນການສອນ ........................................ 48

2.ຄວາມສຳຄັນຂອງການວາງແຜນການສອນ ........................................ 48

3.ລັກສະນະຂອງການວາງແຜນການສອນ ........................................ 49

4.ວິທີແຕ່ງບົດສອນ ແລະ ການສອນທົດລອງ ........................................ 51

ເອກະສານອ້າງອີງ ........................................ 76

# ບົດທີ1
# ຄວາມຮູ້ພື້ນຖານກ່ຽວກັບການວິເຄາະຫຼັກສູດ

## 1. ຄວາມໝາຍຂອງຫຼັກສູດ

ຄໍາວ່າຫຼັກສູດ ແປມາຈາກພາສາອັງກິດວ່າ Curri-culum ເຊິ່ງໃຈທິບເຊື້ອ ລັດຕະນະວົງ (2359) ໃຫ້ຄໍາອະທິບາຍ ໂດຍອ້າງຈາກໜັງສືຂອງ Amstrong Course ເມື່ອປີ ຄສ 1989 ຄໍາວ່າ Curri-culumມີຮາກສັບມາຈາກພາສາລາຕິນວ່າ Currere ເຊິ່ງໝາຍເຖິງ running Course ຫຼື ເສັ້ນທາງທີ່ໃຊ້ແລ່ນແຂ່ງກັນຕໍ່ມາໄດ້ຄໍາສັບນີ້ມາໃຊ້ໃນທາງການສຶກສາວ່າ “running sequence of course or Learning experiences’’ ການປຽບທຽບຫຼັກສູດກັບສະໜາມ ຫຼື ເສັ້ນທາງທີ່ໃຊ້ໄວ້ແລ່ນແຂ່ງກັນອາດຈະເນື່ອງມາຈາກຜູ້ຮຽນຈະຕ້ອງສໍາເລັດການສຶກສາໃນລະດັບໃດ ຫຼື ຫຼັກສູດໃດກໍຕາມຜູ້ຮຽນຈະຕ້ອງອົດທົນຮຽນຫຼາຍວິຊາ ຫຼື ປະສົບຕໍ່ການຮຽນຮູ້ຕ່າງໆຕາມລໍາດັບຂັ້ນໄວ້ໃນຫຼັກສູດກໍຄືກັນກັບນັກແລ່ນທີ່ຈະຕ້ອງແລ່ນ ແລະ ອົດທົນຕໍ່ອຸປະສັກເພື່ອໄປສູ່ເສັ້ນໄຊຊະ ແລະ ຄວາມສໍາເລັດໃຫ້ໄດ້.

ນັກການສຶກສາໄດ້ໃຫ້ຄວາມໝາຍຂອງຫຼັກສູດ (Curriculum) ໄວ້ຢ່າງຫຼວງຫຼາຍທັງທີ່ໃຫ້ຄວາມໝາຍທີ່ຄ້າຍຄືກັນ ແລະ ແຕກຕ່າງກັນອອກໄປ, ໂດຍຂຶ້ນຢູ່ກັບຄວາມຄິດເຫັນ ຫຼື ປະສົບການຂອງບຸກຄົນນັ້ນໆທີ່ມີຕໍ່ຫຼັກສູດ

- ທາບາ (Taba, 1962:11) ເວົ້າວ່າຫຼັກສູດຄືແຜນສໍາລັບການຮຽນ.
- ທໍາລົງ ບົວສີ ໃຫ້ຄວາມໝາຍຂອງຫຼັກສູດວ່າ ຫຼັກສູດແມ່ນແຜນເຊິ່ງໄດ້ອອກແບບສ້າງຂຶ້ນເພື່ອສະແດງຈຸດໝາຍການຈັດເນື້ອໃນກິດຈະກໍາ ແລະ ລວມປະສົບການໃນແຕ່ລະໂປຣແກຣມການສຶກສາເພື່ອໃຫ້ຜູ້ຮຽນມີພັດທະນາການດ້ານຕ່າງໆຕາມທີ່ຈຸດຫມາຍໄດ້ກໍານົດ.
- ນີເກລ ແລະ ອີວານ (Neagley and EVANS, 1967:2) ໄດ້ກ່າວວ່າຫຼັກສູດແມ່ນປະສົບການທີ່ໂຮງຮຽນຈັດຂຶ້ນເພື່ອຊ່ວຍໃຫ້ນັກຮຽນໄດ້ບັນລຸເປົ້າຫມາຍທີ່ກໍານົດໄວ້ຕາມຄວາມສາມາດຂອງຜູ້ຮຽນ.
- ບອບບິດ (BOBBIT, 191 8:42) ໄດ້ກ່າວວ່າ ຫຼັກສູດແມ່ນລາຍການຂອງສິ່ງຕ່າງໆທີ່ເດັກນ້ອຍ ແລະ ເຍົາວະຊົນຕ້ອງເຮັດພ້ອມມີປະສົບການດ້ວຍການພັດທະນາຄວາມສາມາດໃນການກະທໍາສິ່ງຕ່າງໆດັ່ງກ່າວໃຫ້ດີເພື່ອດໍາລົງຊີວິດໃນໄວຜູ້ໃຫຍ່ໄດ້.
- ວີເລີ (Wheeler, 1974:11) ໄດ້ກ່າວວ່າຫຼັກສູດແມ່ນບັນດາປະສົບການການຮຽນຮູ້ທີ່ໂຮງຮຽນ ຫຼື ສະຖານທີ່ສຶກສາໄດ້ຈັດໄວ້ສໍາລັບຜູ້ຮຽນ.
- ສະງັດ ອຸທານັ້ນໄດ້ຮອບຮວມຄວາມໝາຍຂອງຫຼັກສູດໄວ້ດັ່ງນີ້:

1) ຫຼັກສູດແມ່ນ ລາຍວິຊາ ຫຼື ເນື້ອໃນທີ່ໃຊ້ສອນ
2) ຫຼັກສູດແມ່ນ ປະສົບການທີ່ໂຮງຮຽນຈັດໃຫ້ແກ່ເດັກ
3) ຫຼັກສູດແມ່ນ ກິດຈະກໍາການຮຽນການສອນ
4) ຫຼັກສູດແມ່ນ ສິ່ງທີ່ສັງຄົມຄາດໝາຍ ຫຼື ຄວາມຫວັງທີ່ຈະໃຫ້ເດັກໄດ້ຮັບ
5) ຫຼັກສູດແມ່ນ ສື່ກາງ ຫຼື ວິທີການທີ່ນໍາເດັກໄປສູ່ຈຸດປະສົງປາຍທາງ
6) ຫຼັກສູດແມ່ນ ສິ່ງຜູກພັນລະຫ່ວາງນັກຮຽນ ແລະ ຄູ ແລະ ສິ່ງແວ້ດລ້ອມທາງການຮຽນ
7) ຫຼັກສູດແມ່ນ ຂະບວນການສໍາພັນລະຫ່ວາງນັກຮຽນຄູ ແລະ ສິ່ງແວດລ້ອມທາງການຮຽນ

ຜ່ານຄວາມໝາຍຂອງຫຼັກສູດຂ້າງເທິງນັ້ນສາມາດສະຫຼຸບໄດ້ວ່າ: ຫຼັກສູດແມ່ນແບບແຜນຂອງປະສົບການເຊິ່ງໄດ້ອອກແບບສ້າງຂຶ້ນ. ເພື່ອສະແດງຈຸດມຸ້ງໝາຍໃຫ້ແກ່ຜູ້ຮຽນ ຫຼື ແມ່ນຂະບວນການພັດທະນາຄົນໃນສັງຄົມທີ່ມີຈຸດປະສົງ ແລະ ເປົ້າໝາຍຂອງແຕ່ລະສັງຄົມດັ່ງນີ້:

### 1.1 ຫຼັກສູດແມ່ນລາຍວິຊາເນື້ອໃນທີ່ຈັດໃຫ້ກັບຜູ້ຮຽນ

ຫຼັກສູດໃນຖານະທີ່ເປັນລາຍວິຊາ ຫຼື ເນື້ອໃນທີ່ໃຫ້ແກ່ຜູ້ຮຽນສຳລັດຊັ້ນມັດທະຍົມຕົ້ນໝາຍເຖິງລາຍວິ ຊາ ຫຼື ເນື້ອໃນທີ່ກຳນົດໄວ້ໃຫ້ຜູ້ຮຽນຕ້ອງຮຽນໃນຫຼັກສູດເຊັ່ນ: ພາສາລາວ - ວັນນະຄະດີ, ຄະນິດສາດ, ວິທະ ຍາສາດທຳມະຊາດ, ພູມສາດ, ປະຫວັດສາດ, ສຶກສາພົນລະເມືອງ, ເຕັກໂນໂລຊີ, ສິລະປະ, ພະລະສຶກສາ ແລະ ພາສາຕ່າງປະເທດເປັນຕົ້ນ.

### 1.2 ຫຼັກສູດແມ່ນແຜນການຮຽນຮູ້ທີ່ຈັດໃຫ້ກັບຜູ້ຮຽນ

ຫຼັກສູດໃນຖານະທີ່ເປັນແຜນການຈັດການຮຽນໃຫ້ກັບຜູ້ຮຽນນີ້ໝາຍເຖິງຜູ້ທີ່ນຳໄປໃຊ້ໃນການຈັດການສຶກສາເຊິ່ງປະກອບດ້ວຍຈຸດໝາຍຂອງຫຼັກສູດ, ເນື້ອໃນ, ແນວທາງການຈັດການຮຽນການສອນ ແລະ ການວັດປະເມີນຜົນການຮຽນຮູ້ເພື່ອເປັນແນວທາງໃຫ້ຜູ້ທີ່ກ່ຽວຂ້ອງໃນການຈັດການສຶກສາໄດ້ປະຕິບັດ ຫຼື ນຳໄປໃຊ້ໃນການຈັດການສຶກສາເພື່ອໃຫ້ຮຽນເຮັດໄດ້ຕາມຄວາມໝາຍຂອງຫຼັກສູດທີ່ກຳໄວ້.

### 1.3 ຫຼັກສູດແມ່ນກິດຈະກຳທາງການສຶກສາທີ່ຈັດໃຫ້ກັບຜູ້ຮຽນ

ຫຼັກສູດໃນຖານະທີ່ເປັນກິດຈະກຳທາງການສຶກສາທີ່ຈັດໃຫ້ກັບຜູ້ຮຽນມາເຖິງກິດຈະກຳລວມຕ່າງໆທີ່ຈັດໃຫ້ກັບຜູ້ຮຽນທັງໃນ ແລະ ນອກຫ້ອງຮຽນ ເຊັ່ນ: ກິດຈະກຳການຮຽນ - ການສອນກິດຈະກຳແນະແນວກິດຈະກຳກິລາ , ກິດຈະກຳການແຂ່ງຂັນທາງວິຊາການ, ກິດຈະກຳການໄປທັດສະນະສຶກສາ, ກິດຈະກຳເພື່ອສັງຄົມເປັນຕົ້ນ. ເພື່ອໃຫ້ຜູ້ຮຽນໄດ້ຮັບຄວາມຮູ້ປະສົບການເກີດການຮຽນຮູ້ມີຄຸນລັກສະນະອັນມີຈຸດປະສົງ ແລະ ບັນລຸຕາມຈຸດປະສົງຂອງຫຼັກສູດທີ່ກຳນົດໄວ້.

### 1.4 ຫຼັກສູດເປັນການມວນປະສົບການທັງຫຼາຍໂຮງຮຽນຈັດໃຫ້ກັບຜູ້ຮຽນ

ຫຼັກສູດທີ່ເປັນຖານະທີ່ເປັນປະສົບການທັງປວງ, ທີ່ໂຮງຮຽນຈັດໃຫ້ແກ່ຜູ້ຮຽນນັ້ນໄດ້ມາຈາກແນວຄິດກວ່າການຈັດການຮຽນຮູ້, ທີ່ເນັ້ນເນື້ອໃນລາຍວິຊາໃນປຶ້ມແບບຮຽນຢ່າງດຽວສິ່ງຜົນໃຫ້ການຈັດການສຶກສາບໍ່ປະສົບຄວາມສຳເລັດ ດັ່ງນັ້ນ, ຈຶ່ງມີແນວຄິດວ່າຫຼັກສູດຄວນປະກອບດ້ວຍປະສົບການທັງໝົດທີ່ໂຮງຮຽນຈັດໃຫ້ກັບຜູ້ຮຽນເປັນປະສົບການທີ່ນັກຮຽນໄດ້ຮັບທັງພາຍໃນ ແລະ ພາຍນອກໂຮງຮຽນ, ການຈັດກິດຈະກຳຄວນຈັດໃຫ້ສົມຄວາມຕ້ອງການ ແລະ ຄວາມສົນໃຈຂອງຜູ້ຮຽນເພື່ອໃຫ້ຜູ້ຮຽນໄດ້ຮັບການພັດທະນາທັງໃນດ້ານຮ່າງກາຍຈິດໃຈອາລົມ, ສັງຄົມ ແລະ ສະຕິປັນຍາອັນຈະສິ່ງຜົນໃຫ້ບັນລຸຕາມຈຸດປະສົງຂອງຫຼັກສູດທີ່ກຳນົດໄວ້.

## 2.ຄວາມສຳຄັນຂອງຫຼັກສູດ

ຫຼັກສູດມີຄວາມສຳຄັນຢ່າງຫຼວງຫຼາຍທີ່ໃຊ້ໃນການສຶກສາໃນສະຖານທີ່ສຶກສາເພື່ອໃຫ້ສະຫຼຸບຕາມຈຸດປະສົງທີ່ຕັ້ງໄວ້ຄວາມສຳຄັນຂອງຫຼັກສູດສະຫຼຸບໄດ້ດັ່ງນີ້:

1) ຫຼັກສູດເປັນຫຼັກການໃນການຈັດການສຶກສາ

ຜູ້ທີ່ກ່ຽວຂ້ອງກັບການຈັດການສຶກສາທຸກລະບົບສາມາດໃຊ້ຫຼັກສູດເປັນເຄື່ອງມືສຳລັບໃນການຈັດການສຶກສາການນິເທດກຳກັບຕິດຕາມ ແລະ ປະເມີນຜົນການຈັດການສຶກສາເພື່ອໃຫ້ສະຫຼຸບຕາມຈຸດປະສົງຂອງການຈັດການສຶກສາທີ່ກຳນົດໄວ້.



2) ຫຼັກສູດເປັນເຄື່ອງມືໃນການພັດທະນາສັງຄົມ ແລະປະເທດຊາດໃນການຈັດການສຶກສາຈຳເປັນຕ້ອງມີຫຼັກສູດເພື່ອໃຊ້ເປັນແນວທາງໃນການຈັດການສຶກສາເພື່ອພັດທະນາຜູ້ຮຽນໃນທຸກໆດ້ານ ເຊິ່ງຈະສົ່ງຜົນໃຫ້ຜູ້ຮຽນໄດ້ນຳຄວາມຮູ້ທີ່ໄດ້ຮັບໄປໃຊ້ໃນການພັດທະນາ.

3) ຫຼັກສູດເປັນເຄື່ອງມືທຳນາຍອະນາຄົດຂອງການສຶກສາ ແລະ ຂອງຊາດອະນາຄົດຂອງການສຶກສາ ແລະຂອງຊາດກໍລ້ວນແຕ່ມາຈາກຫຼັກສູດທີ່ມີວິໄສທັດ, ດັ່ງນັ້ນ, ຖ້າຫຼັກສູດຂອງຊາດທີ່ມີຄຸນນະພາບ, ມີຄວາມເໝາະສົມ , ທັນສະໄໝ ແລະ ມີປະສິດທິພາບກໍຈະສົ່ງຜົນໃຫ້ການສຶກສາຂອງຊາດມີຄຸນນະພາບ.

4) ຫຼັກສູດເປັນເຄື່ອງມືບົ່ງບອກເຖິງຄວາມຈະເລີນຂອງປະເທດ

ເນື່ອງຈາກວ່າຫຼັກສູດເປັນເຄື່ອງມືສຳຄັນໃນການຈັດການສຶກສາເພື່ອພັດທະນາຄົນດັ່ງນັ້ນ ຫຼັກສູດທີ່ມີຄຸນນະພາບກໍຈະນຳໄປສູ່ການພັດທະນາຄົນໃຫ້ມີຄຸນນະພາບເພື່ອໃຫ້ຄົນໃນຊາດນຳຄວາມຮູ້ທີ່ໄດ້ຮັບໄປໃຊ້ໃນການພັດທະນາປະເທດໃຫ້ມີຄວາມຈະເລີນຮຸ່ງເຮືອງຕໍ່ໄປ.

5) ຫຼັກສູດເປັນຕົວກຳນົດລັກສະນະຂອງສັງຄົມໃນອະນາຄົດວ່າຈະເປັນໄປໃນຮູບແບບໃດ

ເພາະຫຼັກສູດຈະກຳນົດວິໄສທັດສະວ່າ ຫຼັງຈາກຜູ້ຮຽນທີ່ຈະສຳເລັດການສຶກສາໃນແຕ່ລະລະດັບການສຶກສາແລ້ວຈະມີຄຸນສົມບັດຄຸນລັກສະນະຢ່າງໃດເຊິ່ງສະແດງເຖິງລັກສະນະຂອງຄົນ ແລະ ສັງຄົມໃນອະນາຄົດ.

6) ຫຼັກສູດເປັນເຄື່ອງມືໃນການພັດທະນາເສດຖະກິດ

ຈາກກະແສການປຽນແປງທາງດ້ານເສດຖະກິດທີ່ເປັນໄປຢ່າງວ່ອງໄວສົ່ງຜົນໃຫ້ມີການແຂ່ງຂັນດ້ານເສດຖະກິດຂອງຫຼາຍໆປະເທດ. ດັ່ງນັ້ນ; ຫຼັກສູດ ແລະ ການຈັດການສຶກສາຈະຕ້ອງໄດພັດທະນາຜູ້ຮຽນສາມາດສ້າງອາຊີບ ແລະ ລາຍໄດ້ເພື່ອໃຫ້ເສດຖະກິດຂອງປະເທດຊາດສາມາດແຂ່ງຂັນກັບຫຼາຍໆປະເທດໄດ້.

7) ຫຼັກສູດເປັນແນວທາງໃນການຈັດການຮຽນຮູ້ຂອງຄູຜູ້ສອນ.

ຫຼັກສູດ ແລະ ການຈັດການຮຽນຮູ້ມີຄວາມສຳພັນກັນ. ດັ່ງນັ້ນ; ໃນການຈັດການຮຽນຮູ້ຄູຜູ້ສອນຈະຕ້ອງປະຕິບັດຕາມຫຼັກສູດທີ່ກຳນົດໄວ້ເພື່ອພັດທະນາຜູ້ຮຽນໃຫ້ບັນລຸຕາມຈຸດປະສົງຂອງຫຼັກສູດທີ່ກຳນົດໄວ້.

8) ຫຼັກສູດເປັນເກນມາດຕະຖານຂອງການສຶກສາ

ຫຼັກສູດຈະເປັນຕົວກຳນົດທິດທາງເປົ້າໝາຍໃນການຈັດການສຶກສາຂອງສະຖາບັນການສຶກສາຂອງປະເທດ. ດັ່ງນັ້ນ, ການກຳນົດໃຫ້ສະຖາບັນການສຶກສາຈັດການສຶກສາໂດຍໃຫ້ຫຼັກສູດດຽວກັນທົ່ວປະເທດກໍຈະສົ່ງຜົນສະທ້ອນໃຫ້ມີມາດຕະຖານການສຶກສາດຽວກັນ.

9) ຫຼັກສູດຄືເປັນບ່ອນເຝິກຝົນຫຼໍ່ຫຼອມຄົນໃຫ້ກາຍເປັນຜູ້ທີ່ມີຄຸນະພາບ

10) ຫຼັກສູດເປັນມາດຖານຂອງການຈັດການສຶກສາ

11) ຫຼັກສູດເປັນໂຄງການ ແລະ ແນວທາງໃນການໃຫ້ການສຶກສາ

12) ໃນໂຮງຮຽນຫຼັກສູດຈະໃຫ້ທິດທາງປະຕິບັດແກ່ຄູ



13) ເປັນແນວທາງໃນການສົ່ງເສີມຄວາມຈະເລີນ ແລະ ພັດທະນາການຂອງເດັກຕາມຈຸດມຸ່ງໝາຍຂອງການສຶກສາ.

14) ຫຼັກສູດເປັນເຄື່ອງກຳນົດທິດທາງໃນການຈັດປະສົບການວ່າຜູ້ຮຽນ ແລະ ສັງຄົມຄວນຈະໄດ້ຮັບສິ່ງໃດທີ່ເປັນປະໂຫຍດແກ່ເດັກໂດຍກົງ

15) ຫຼັກສູດຈະບອກຫຼວງໜ້າລັກສະນະຂອງສັງຄົມວ່າຈະເປັນແບບໃດ.

16) ຫຼັກສູດຈະກຳນົດແນວຄວາມຮູ້, ຄວາມ

ສາມາດ, ຄວາມປະພຶດ, ທັກສະ ແລະ ເຈຕະນາຂອງຜູ້ຮຽນໃນສິ່ງທີ່ຈະຢູ່ຮ່ວມກັນໃນສັງຄົມ ແລະ ສ້າງຕົນໃຫ້ເປັນປະໂຫຍດແກ່ສັງຄົມ.

## 3. ໂຄງປະກອບຂອງຫຼັກສູດ

ນັກພັດທະນາຫຼັກສູດຫຼາຍທ່ານໄດ້ກ່າວເຖິງອົງປະກອບຂອງຫຼັກສູດທົ່ວໄປໄວ້ດັ່ງນີ້:

- ສຸມິດ ຄຸນນານຸກອນ (2520:9) ກ່າວວ່າອົງປະກອບຂອງຫຼັກສູດມີ 4 ອົງປະກອບຄື: ຈຸດປະສົງເນື້ອໃນ, ການນໍາຫຼັກສູດໄປໃຊ້ ແລະ ການປະເມີນຜົນ.

- ທໍາລົງ ບົວສີ (2532:8) ສໍາລັບຫຼັກສູດນັ້ນມີອົງປະກອບທີ່ສໍາຄັນຢ່າງໜ້ອຍ 6 ຢ່າງຄື:ຈຸດປະສົງຂອງຫຼັກສູດ, ຈຸດປະສົງຂອງການຮຽນ ການສອນ, ເນື້ອໃນ ແລະ ປະສົບການ, ຍຸດທະສາດການຮຽນ-ການສອນ, ວັດຖຸອຸປະກອນ ແລະ ສື່ການຮຽນ - ການສອນ ແລະ ການປະເມີນ.

- ທາບາ (Hilda Taba, 1962:9) ໄດ້ກ່າວວ່າຫຼັກສູດຄວນມີອົງປະກອບ 4 ຢ່າງຄື: ຈຸດປະສົງທົ່ວໄປ ແລະ ຈຸດປະສົງສະເພາະ, ເນື້ອໃນ ແລະ ຈໍານວນຊົ່ວໂມງສອນແຕ່ລະລາຍວິຊາ, ຂະບວນການຮຽນ - ການສອນ ຫຼື ການນໍາຫຼັກສູດໄປໃຊ້ ແລະ ໂຄງການປະເມີນຜົນການຮຽນການສອນຕາມຫຼັກສູດ.

- ຜ່ານຄໍາເຫັນຂອງຫຼາຍທ່ານ ສາມາດສະຫຼຸບໄດ້ ມີ 4 ອົງປະກອບທີ່ສໍາຄັນຄື: ຈຸດປະສົງຂອງຫຼັກສູດ ເນື້ອໃນ, ການນໍາຫຼັກສູດໄປໃຊ້ ແລະ ການປະເມີນຜົນຫຼັກສູດ.

ໂຄງປະກອບຂອງຫຼັກສູດທີ່ໃຊ້ໃນການສຶກສາຂອງລາວປະກອບມີດັ່ງນີ້:

- ຫຼັກສູດລວມມີຄື: ຫຼັກການ, ຈຸດໝາຍຫຼັກການ, ໂຄງສ້າງຫຼັກສູດ (ກໍານົດເວລາ, ວິຊາຮຽນ, ກິດຈະກໍາ), ການຈັດການຮຽນ - ການສອນ, ຫຼັກສູດທ້ອງຖິ່ນ ແລະ ການປະເມີນຜົນການຮຽນ.
- ຫຼັກສູດລາຍວິຊາມີຄື: ຈຸດປະສົງ, ເນື້ອໃນ, ວິທີສອນ, ສື່ການສອນ ແລະ ການວັດ ແລະ ປະເມີນຜົນ

## 4. ລັກສະນະຫຼັກສູດທີ່ດີ

- ຈຸດປະສົງກົງກັບຈຸດໝາຍຂອງການສຶກສາ
- ຖືກຕ້ອງຕາມລັກສະນະວັດທະນະທໍາ, ຮີດຄອງປະເພນີ ແລະ ເອກະລັກຂອງຊາດ
- ມີເນື້ອໃນທີ່ຈະສອນສົມບູນພຽງພໍ ເພື່ອຊ່ວຍໃຫ້ຜູ້ຮຽນມີການພັດທະນາທຸກດ້ານ
- ເນື້ອໃນ: ສໍາຄັນ, ມີປະໂຫຍດ, ສອດຄ່ອງ, ຕໍ່ເນື່ອງ, ຖືກຕ້ອງ, ທັນສະໄໝ, ເປັນໜ້າສົນໃຈ ແລະ ສາມາດຈັດຕັ້ງການຮຽນ - ການສອນຕົວຈິງ
- ການຈັດຕັ້ງປະຕິບັດສາມາດປັບໄດ້
- ບອກທິດທາງວິທີສອນ ແລະ ການນໍາໃຊ້ສື່ການສອນ
- ບອກທິດທາງໃນການວັດ ແລະ ປະເມີນຜົນ
- ຫຼັກສູດທີ່ດີຄວນສໍາເລັດຂຶ້ນດ້ວຍຄວາມຮ່ວມມືຂອງທຸກຝ່າຍທີ່ກ່ຽວຂ້ອງ
- ຫຼັກສູດທີ່ດີຈະຕ້ອງເປັນປະສົບການທີ່ກ່ຽວກັບຊີວິດປະຈໍາວັນຂອງຜູ້ຮຽນ
- ຫຼັກສູດທີ່ດີຈະຕ້ອງເພີ່ມພູນປະສົບການ ແລະ ທັກສະຕ່າງໆຂອງຜູ້ຮຽນ
- ຫຼັກສູດທີ່ດີຈະຕ້ອງສົ່ງເສີມໃຫ້ຜູ້ຮຽນເກີດມີຄວາມຮູ້, ທັກສະ, ທັດສະນະຄະຕິ ແລະ ມີແນວຄິດສ້າງສັນໃນການດໍາລົງຊີວິດ
- ຫຼັກສູດທີ່ດີຈະຕ້ອງສົ່ງເສີມໃຫ້ຜູ້ຮຽນຮູ້ຈັກການເຮັດວຽກດ້ວຍຕົວເອງ ແລະ ເຮັດຮ່ວມກັບໝູ່ຄະນະ
- ຫຼັກສູດທີ່ດີຈະຕ້ອງຈັດປະສົບການໃຫ້ຜູ້ຮຽນເກີດຄວາມຮູ້, ຄວາມເຂົ້າໃຈ ແລະ ມີໂອກາດແກ້ໄຂບັນຫາຕ່າງໆ
- ຫຼັກສູດທີ່ດີຈະຕ້ອງສົ່ງເສີມໃຫ້ຜູ້ຮຽນຮູ້ຈັກແກ້ໄຂບັນຫາໃນທາງທີ່ດີ
- ຫຼັກສູດທີ່ດີຈະຕ້ອງຈັດປະສົບການທີ່ມີຄວາມໝາຍຕໍ່ຊີວິດຂອງຜູ້ຮຽນ
- ຫຼັກສູດທີ່ດີຕ້ອງຈັດປະສົບການ ແລະ ກິດຈະກໍາຫຼາຍໆຢ່າງ

- ຫຼັກສູດທີ່ດີຈະຕ້ອງວາງກົດເກນໄວ້ຢ່າງເໝາະສົມແກ່ການນຳໄປປະຕິບັດ

## 5. ຂະບວນການພັດທະນາຫຼັກສູດ

ຂະບວນການພັດທະນາຫຼັກສູດແມ່ນມີຫຼາຍຮູບແບບເຊິ່ງນັກພັດທະນາຫຼັກສູດຫຼາຍທ່ານໄດ້ສະເໜີຮູບແບບໄວ້ດັ່ງນີ້:

ຂະບວນການພັດທະນາຫຼັກສູດຕາມຮູບແບບຂອງເຊເລີ ແລະ ອະເລັກຊານເດີ (Galen L. Saylor and Willian M. Alexander) ໄດ້ສະໜີຂັ້ນຕອນດັ່ງນີ້:




+ ກຳນົດຈຸດປະສົງ ແລະ ຂອບເຂດໃນທີ່ນີ້ເພິ່ນໄດ້ສະເໜີ 4 ຂອບເຂດທີ່ສຳຄັນທີ່ຄວນໃຫ້ຄວາມສົນໃຈຄື: ການພັດທະນາສ່ວນບຸກຄົນ, ມະນຸດສຳພັດ, ທັກສະການຮຽນຮູ້ທີ່ຕໍ່ເນື່ອງແລະຄວາມຊ່ຽວ ຊານຊະເພາະດ້ານນອກນີ້, ຍັງມີອີກຫຼາຍໆດ້ານທີ່ນັກພັດທະນາຫຼັກສູດຈະຕ້ອງໄດ້ພິຈາລະນາໃຫ້ ເໝາະສົມກັບຜູ້ຮຽນ ແລະ ລັກສະນະຂອງສັງຄົມ.

+ ການອອກແບບຫຼັກສູດນັກພັດທະນາຫຼັກສູດຈະຕ້ອງໄດ້ຕັດສິນໃຈກ່ຽວກັບການເລືອກ ແລະ ຈັດເນື້ອໃນເພື່ອໃຫ້ສອດຄອງກັບຈຸດປະສົງຂອງຫຼັກສູດ, ຄວາມຕ້ອງການຂອງຜູ້ຮຽນ ແລະ ລັກສະນະຂອງສັງຄົມອີກດ້ວຍ.

+ ການໃຊ້ຫຼັກສູດ ແມ່ນຂັ້ນຕອນທີ່ຄູສອນຄວນວາງແຜນ ແລະ ແຕ່ງບົດສອນໃນຮູບແບບຕ່າງໆ. ຄູຜູ້ສອນຈະເລືອກວິທີການສອນ ແລະ ວັດຖຸສື່ການຮຽນ - ການສອນເພື່ອຊ່ວຍໃຫ້ຜູ້ຮຽນບັນລຸຕາຈຸດປະສົງຂອງບົດສອນທີ່ວາງໄວ້

+ ການປະເມີນຫຼັກສູດ ແມ່ນການວັດປະເມີນຜົນຂອງຫຼັກສູດທີ່ໄດ້ໃຊ້ໃນການຈັດການຮຽນ - ການສອນເພື່ອເປັນການປັບປຸງ, ສືບຕໍ່ຫຼັກສູດ ຫຼື ປ່ຽນແປງຫຼັກສູດຕາມຄວາມເໝາະສົມ.

- ຂະບວນການພັດທະນາຫຼັກສູດຕາມຮູບແບບຂອງກູດແລັດ ແລະ ຣິກເທີ(Good_lad and Richter) ໄດ້ສະເໜີແນວຄິດກ່ຽວກັບການສ້າງຫຼັກສູດ ຫຼື ຂະບວນການພັດທະນາຫຼັກສູດມີດັ່ງນີ້: ຄ່ານິຍົມຕ່າງໆຈະເປັນຕົວກຳນົດຈຸດປະສົງຂອງການສຶກສາ ແລະ ຈຸດປະສົງຂອງການສຶກສາຈະຖືກປ່ຽນເປັນຈຸດປະສົງໃນແງ່ພຶດຕິກຳທົ່ວໄປຂອງການສຶກສາ ເຊິ່ງປະກອບດ້ວຍ 2 ອົງປະກອບໃຫຍ່ຄື: ເນື້ອໃນເພື່ອເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ພາຍໃນຕົວ ແລະ ພຶດຕິກຳທີ່ຕ້ອງການປູກຝັງໃຫ້ແກ່ນັກຮຽນ.

- ຂະບວນການພັດທະນາຫຼັກສູດຕາມຮູບແບບຂອງຟອກ (Robert S. Fox) ໄດ້ສະເໜີຮູບແບບການສ້າງ ຫຼື ພັດທະນາຫຼັກສູດດັ່ງນີ້: ນັກພັດທະນາຫຼັກສູດຈະກຳນົດຈຸດປະສົງຂອງຫຼັກສູດຈາກຄ່ານິຍົມຕ່າງໆຂອງສັງຄົມ ແລະ ຈຸດປະສົງຂອງຫຼັກສູດຈະຊ່ວຍໃນການຕັດສິນໃຈເລືອກສິ່ງທີ່ເປັນຄວາມຮູບກ່ຽວກັບການພັດທະນາ ແລະ ການຮຽນຮູ້ຂອງຜູ້ສຶກສາ, ຄວາມຕ້ອງການທາງສັງຄົມ ແລະ ຄວາມຮູ້ໃນສາຂາວິຊາຕ່າງໆ ຄວາມຮູ້ທັງ 3 ປະເພດນີ້ເປັນແນວທາງໃຫ້ແກ່ການພັດທະນາຫຼັກສູດໃນການຄັດເລືອກເນື້ອໃນຂອງຫຼັກສູດ, ສື່ການຮຽນການສອນ, ຮູບແບບຂອງຫຼັກສູດ ແລະ ວິທີສິດສອນເຊິ່ງຈະເປັນປະໂຫຍດໃນການເຮັດຫຼັກສູດນັ້ນເອງ.

- ເມື່ອພິຈາລະນາຮູບແບບການພັດທະນາຫຼັກສູດ ເຫັນໄດ້ວ່າການພັດທະນາຫຼັກສູດມີຢູ່ 5 ຂັ້ນຕອນ ທີ່ສຳຄັນຄື: ການກຳນົດຈຸດປະສົງຂອງຫຼັກສູດ, ການຈັດເນື້ອໃນຂອງຫຼັກສູດ, ການນຳຫຼັກສູດໄປໃຊ້, ການປະ ເມີນຜົນຫຼັກສູດ ແລະ ການປັບປຸງ ຫຼື ປ່ຽນແປງຫຼັກສູດ.

# ບົດທີ1 (ຕໍ່)

# ຄວາມຮູ້ພື້ນຖານກ່ຽວກັບການວິເຄາະຫຼັກສູດ

## 6.ຄວາມໝາຍຂອງການວິເຄາະຫຼັກສູດ

ການວິເຄາະຫຼັກສູດໝາຍເຖິງການໄຈແຍກໂຄງຮ່າງຂອງຫຼັກສູດເພື່ອໃຫ້ເຫັນເຖິງອົງປະກອບທີ່ແທ້ຈິງຂອງຫຼັກສູດວ່າປະກອບມີເນື້ອໃນອັນໃດແດ່, ມີຂອບເຂດໜ້າທີ່ ແລະ ຄວາມສຳຄັນພຽງໃດ, ມີຄວາມສຳພັນກັບຫຍັງແດ່. ສຳລັບແນວທາງການວິເຄາະໂດຍທົ່ວໄປແລ້ວຈະຢຶດຫຼັກການພິຈາລະນາອົງປະກອບສຳຄັນຂອງຫຼັກກາສູດ 3 ປະການ:

- ພິຈາລະນາຈຸດປະສົງຂອງຫຼັກສູດ
- ພິຈາລະນາເນື້ອໃນຂອງຫຼັກສູດ
- ພິຈາລະນາຄວາມສຳພັນລະຫວ່າງເນື້ອໃນ ແລະ ຈຸດປະສົງຂອງຫຼັກສູດ

ສະຫຼູບລວມແລ້ວການວິເຄາະຫຼັດສູດກໍຄືການໄຈແຍກຫຼັກສູດອອກໃຫ້ເຫັນອົງປະກອບຍ່ອຍໆເພື່ອແນໃສ່ໃຫ້ເຫັນຄວາມສຳພັນລະຫວ່າງເນື້ອໃນວິຊາ ແລະ ພຶດຕິກຳທີ່ເປັນຈຸດໝາຍປາຍທາງຂອງຫຼັກສູດໃນແຕ່ລະວິຊາ ຫຼື ກຸ່ມວິຊາ. ດັ່ງນັ້ນບັນຫາສຳຄັນໃນການວິເຄາະຫຼັກສູດຈິ່ງຂຶ້ນກັບອົງປະກອບ 2 ປະການຄື: ເນື້ອໃນວິຊາທີ່ກຳນົດໄວ້ໃນຫຼັກສູດ ແລະ ພຶດຕິກຳທີ່ຕ້ອງການໃຫ້ເກີດຂຶ້ນໃນແຕ່ລະລາຍວິຊາ.

## 7.ຈຸດປະສົງຂອງການວິເຄາະຫຼັກສູດ

- ເພື່ອໃຫ້ເກີດມີຄວາມຄິດ ແລະ ຄວາມເຂົ້າໃຈໃນຈຸດປະສົງ ຫຼື ຈຸດມຸ້ງໝາຍແທ້ຈິງຂອງຫຼັກສູດ
- ເພື່ອໃຫ້ເກີດຄວາມເຂົ້າໃຈໃນຈຸດໝາຍປາຍທາງຂອງການຮຽນ - ການສອນເຊິ່ງຈະຕ້ອງດຳເນີນໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ - ລັດລວມທັງການພັດທະນາຂອງປະເທດອີກດ້ວຍ.
- ເພື່ອໃຫ້ຮູ້ຂອບເຂດທາງດ້ານເນື້ອໃນລາຍວິຊາ
- ເພື່ອເປັນແນວທາງ ແລະ ມາດຕະການໃນການກຳນົດຂະບວນການຮຽນ-ການສອນຂອງແຕ່ລະວິຊາ
- ເພື່ອຊອກ ແລະ ຈັດຫາເນື້ອໃນ ຫຼື ປະສົບການສຳລັບຜູ້ຮຽນໃຫ້ເປັນໄປຕາມຫຼັກສູດ, ແຕ່ສາມາດປັບປ່ຽນໃຫ້ສອດຄ່ອງກັບສະພາບຄວາມເປັນຈິງກໍ່ຄືສະພາບຄວາມຕ້ອງການຂອງຜູ້ຮຽນ, ຊຸມຊົນ ແຕ່ຕ້ອງຄຳນຶງເຖິງສະພາບຂອງໂຮງຮຽນແຕ່ລະແຫ່ງທີ່ມີຄວາມແຕກຕ່າງກັນ.
- ເພື່ອເລືອກເຟັ້ນວິທີສິດສອນ, ເທັກນິກ ແລະ ຍຸດທະວິທີໃນການສິດສອນໃຫ້ສອດຄ່ອງ ແລະ ເໝາະສົມກັບເນື້ອໃນ ແລະ ຄວາມພ້ອມຂອງນັກຮຽນ.

## 8.ຂັ້ນຕອນການວິເຄາະຫຼັກສູດ

ເພື່ອໃຫ້ການວິເຄາະຫຼັກສູດດຳເນີນໄປຢ່າງຖືກຕ້ອງ ແລະ ເປັນລະບົບນັ້ນນັກສຶກສາຕ້ອງເອົາໃຈໃສ່ຂັ້ນຕອນການວິເຄາະຫຼັກສູດໄວ້ດັ່ງນີ້:

- ຜູ້ດຳເນີນການວິເຄາະຫຼັກສູດທຳອິດຈະຕ້ອງສຶກສາ ແລະ ພິຈາລະນາໂຄງສ້າງຫຼັກສູດແບບລວມໆເສຍກ່ອນ
- ຕ້ອງພິຈາລະນາໄຈແຍກອົງປະກອບຂອງຫຼັກສູດອອກເປັນແຕ່ລະສ່ວນຄື: ຈຸດປະສົງ, ເນື້ອໃນ, ຈຳນວນຊົ່ວໂມງທັງໝົດ ແລະ ຈຳນວນຊົ່ວໂມງຕໍ່ອາທິດ.
- ຕ້ອງສຶກສາຫຼັກສູດໃຫ້ລະອຽດ, ເລິກເຊິ່ງ. ຕ້ອງຄຳນຶງສະເໝີວ່າຈຸດປະສົງເປັນອົງປະກອບສຳຄັນຂອງຫຼັກສູດ, ເພາະຈຸດປະສົງເປັນຕົວກຳນົດແນວທາງໃນການບັນຈຸເນື້ອໃນ ແລະ ຕ້ອງພິຈາລະນາເຖິງຄວາມສຳຄັນຂອງອົງປະກອບທັງສອງຢ່າງ.

- ຕ້ອງສຶກສາເນື້ອໃນເພື່ອໃຫ້ຮູ້ລະອຽດ ແລະ ຂອບເຂດເພື່ອເປັນແນວທາງໃນການກຳນົດຫຼັກສູດເຊັ່ນ: ກຳນົດຫົວຂໍ້ເລື່ອງ, ຫົວຂໍ້ຍ່ອຍ, ເນື້ອໃນທີ່ບັນຈຸໃນແຕ່ລະຫົວຂໍ້ຈັດວາງຕາມລຳດັບ, ຕອນ, ພາກ ແລະ ບົດ.
- ຈັດວາງ ແລະ ເຮັດໂຄງຮ່າງການສອນ
- ເຮັດຕາຕະລາງວິເຄາະຫຼັກສູດ ( ເນື້ອໃນ ) ເປັນແຕ່ລະລາຍວິຊາ
- ການນຳໄປປະຕິບັດສອນຕົວຈິງ
- ຕິດຕາມຜົນເພື່ອແກ້ໄຂ - ປັບປຸງ ແລະ ໃຊ້ເພື່ອເປັນແນວທາງໃນການພັດທະນາຫຼັກສູດ ແລະ ພັດທະນາການຮຽນ-ການສອນໃນໄລຍະຕໍ່ໄປ

## 9.ຄຸນປະໂຫຍດຂອງການວິເຄາະຫຼັກສູດ

- ເຮັດໃຫ້ເຮົາຮູ້ວ່າຈະສອນຫຍັງ, ສອບຫຍັງ ແນວລະເທົ່າໃດ
- ເປັນແນວທາງໃນການກຳນົດພຶດຕິກຳແກ່ຜູ້ຮຽນ
- ເປັນເຄື່ອງມືໃນການເລືອກກິດຈະກຳ ແລະ ວິທີການຈັດການຮຽນຮູ້
- ຊ່ວຍໃຫ້ຜູ້ສອນບໍລິຫານເວລາໃນການສອນ ແລະ ການສອບໄດ້ຢ່າງມີປະສິດທິພາບ
- ຊ່ວຍໃຫ້ຂໍ້ສອບມີຄວາມທ່ຽງຕົງຕາມເນື້ອໃນ
- ຊ່ວຍໃຫ້ການຮຽນການສອນມີຄຸນນະພາບ ແລະ ມາດຕະຖານຍິ່ງຂຶ້ນ
- ຊ່ວຍໃຫ້ຜູ້ສອນແຕ່ງບົດສອນໄດ້ດີຂຶ້ນ ແລະ ຮູ້ວ່າຄວນຈະເນັ້ນພຶດຕິກາທາງດ້ານໃດແດ່ເພາະວ່າການສອນບໍ່ພຽງແຕ່ເຮັດໃຫ້ນັກຮຽນມີຄວາມສາມາດສອບເສັງໄດ້ພຽງຢ່າງດຽວ
- ພຶດຕິກາດ້ານຈິດຕະພິໄສ ແລະ ດ້ານທັກສະພິໄສ ບໍ່ສາມາດໃຊ້ຂໍ້ສອບວັດໄດ້ ຄູຈະຕ້ອງເລືອກວິທີວັດໃຫ້ເໝາະສົມບາງເທື່ອຕ້ອງໃຊ້ເວລາວັດຜົນຕະຫຼອດພາກຮຽນ ຫຼື ຕະຫຼອດປີ.
- ຊ່ວຍໃນການການົດຈານວນຂໍ້ສອບເປັນແຕ່ລະວິຊາ ຫຼື ແຕ່ລະບົດໃຫ້ສອດຄ່ອງກັບພຶດຕິກາ, ດ້ານສະຕິປັນຍາ ແລະ ຈະເຮັດໃຫ້ເຮົາສາມາດອອກຂໍ້ສອບໄດ້ຄວບຄຸມກັບທຸກເນືອໃນຂອງບົດ ແລະ ເຮັດໃຫ້ຂໍ້ສອບມີຄຸນະພາບດີ.

## 10.ວິທີວິເຄາະຂໍ້ມູນ

### 1.ບາດກ້າວການວິເຄາະຫຼັກສູດ

**ບາດກ້າວທີ1**

ແຕ່ງຕັ້ງຄະນະກຳມະການວິເຄາະຫຼັກສູດຄວນຈະມີ 6-9 ຄົນ, ເພື່ອໃຫ້ການໃຊ້ຫຼັກສູດມີປະສິດທິພາບຜູ້ເຮັດການວິເຄາະຕ້ອງແມ່ນຜູ້ເຄີຍສອນວິຊານັ້ນໆ, ຄວນມີນັກວັດຜົນ ແລະ ນັກພັດທະນາຫຼັກສູດວິຊາລະ 1 ຄົນ.

**ບາດກ້າວທີ2**

ໃຫ້ຄະນະກຳມະການຮ່ວມກັນຄົ້ນຄວ້າພິຈາລະນາເບິ່ງຈຸດປະສົງຂອງວິຊານັ້ນໆວ່າມີຈຸດປະສົງຫຍັງແດ່ໃນການຮຽນ-ການສອນເນັ້ນໃຫ້ເກີດພຶດຕິກຳທາງດ້ານໃດແດ່ ເຊັ່ນ ດ້ານສະຕິປັນຍາ, ຈິດພິໄສ ແລະ ດ້ານທັກສະພິໄສ. ໂດຍສະເພາະດ້ານສະຕິປັນຍາເນັ້ນພຶດຕິກຳຍ່ອຍດ້ານໃດແດ່ ເຊັ່ນ: ຄວາມຮູ້ - ຄວາມຈື່ຈາ, ຄວາມເຂົ້າໃຈ, ການນຳໄປໃຊ້, ການວິເຄາະ, ການສັງເຄາະ ແລະ ການປະເມີນຜົນ.

**ບາດກ້າວທີ3**

ເອົາຂໍ້ມູນທາງດ້ານສະຕິປັນຍາມາພິຈາລະນາເບິ່ງວ່າຖ້າຈະສ້າງຂໍ້ສອບຂອງແຕ່ລະບົດນັ້ນຄວນເນັ້ນພຶດຕິກຳຍ່ອຍທາງດ້ານໃດແດ່ໜ້ອຍຫຼາຍປານໃດ ແລະ ສະແດງອອກໃນຮູບຂອງຄະແນນ ( ຄະແນນເຕັມ 10) ຂໍ້ໃດມີຄວາມສຳຄັນຫຼາຍກໍ່ໃຫ້ຄະແນນຫຼາຍ ແລະ ຫຼຸດລົງມາຕາມລຳດັບ.

# ບົດທີ2

# ມາດຕະຖານການສອນ

## 1.ຄວາມໝາຍຂອງມາດຕະຖານການສອນ

ມາດຕະຖານການສອນແມ່ນການກຳນົດລະດັບຕ່ຳຂອງການເຝິກປະຕິບັດທີ່ຄາດຫັວງຈາກຄູສອນ ມາດຕະຖານການສອນແມ່ນບອກໃຫ້ພວກເຮົາຮູ້ວ່າຄູຄວນເຮັດຫຍັງແດ່, ທັກສະອັນໃດແດ່ທີ່ຄູຄວນມີ, ຄຸນຄ່າອັນໃດແດ່ທີ່ຄູຄວນມີ.

## 2.ຈຸດປະສົງຂອງມາດຕະຖານການສອນ

- ເພື່ອວາງວິໃສທັດໃນພາບລວມວ່າເຮົາຈະດຳເນີນການໄປໃນທິດທາງໃດ
- ເພື່ອເປັນພື້ນຖານສຳລັບວິທີທາງໃນການສ້າງຄູ ແລະ ການເຝິກອົບຮົມຄູ
- ເພື່ອອະທິບາຍການສອນທີ່ມີປະສິດທິພາບ ແລະ ການສອນທີ່ມີປະສິດທິພາບແມ່ນການສອນທີ່ນຳໄປການປັບປຸງຜົນສຳເລັດທາງການຮຽນຂອງຜູ້ຮຽນ
- ເພື່ອນຳໃຊ້ເປັນທິດທາງໃນການປັບປຸງຈັດຕັ້ງປະຕິບັດການສອນຂອງຄູ
- ເພື່ອນຳໃຊ້ເຂົ້າໃນການປະເມີນການປະຕິບັດການສອນຂອງຄູ

## 3.ສາຍພົວພັນລະຫວ່າງມາດຕະຖານການສອນ ແລະ ສະມັດຖະພາບ

ມາດຕະຖານການສອນຕອບສະໜອງໄດ້ພຽງແຕ່ການປັບປຸງຜົນສຳເລັດທາງດ້ານການຮຽນຂອງຜູ້ຮຽນເທົ່ານັ້ນຖ້າວ່າມາດຕະຖານນຳໃຊ້ຜົນສຳເລັດທາງການຮຽນຂອງນັກຮຽນເປັນຈຸດເລີ່ມຕົ້ນ, ມາດຕະຖານການສອນແມ່ນອີງໃສ່ນິຍາມທີ່ກຳນົດໄວ້ວ່າຜູ້ຮຽນແນຮູ້ຫຍັງແດ່, ທັກສະຄັນໃດແດ່ທີ່ຜູ້ຮຽນຄວນມີ ແລະ ຄຸນຄ່າໃດແດ່ທີ່ຢູ່ຮຽນຄວນມີໃນແຕ່ລະວິຊາ ແລະ ລະດັບຂັ້ນຂອງຊັ້ນມັດທະຍົມສຶກສາ. ສິ່ງເຫຼົ່ານີ້ແມ່ນສະມັດຖະພາບດ້ານການຮຽນຂອງຜູ້ຮຽນ ແລະ ຈາກນັ້ນເຮົາຈິ່ງສາມາດຈັດຮູບແບບພື້ນຖານສຳລັບການພັດທະນາໂຄງສ້າງຂອງຫຼັກສູດຊັ້ນມັດຕະຍົມສຶກສາ ແລະ ຈາກນັ້ນຈິ່ງພັດທະນາຫຼັກສູດມັດທະຍົມໃນທຸກລາຍວິຊາ ແລະ ໃນທຸກລະດັບການຮຽນ.

ເມື່ອເວລາເຮົາຕັດໃຈໄດ້ແລ້ວວ່າຜູ້ຮຽນຄວນຮູ້ຫຍັງ. ຈາກນັ້ນພວກເຂົາຈິ່ງສາມາດກຳນົດວ່າຄູຕ້ອງຮູ້ຫຍັງ, ທັກສະໃດທີ່ຄູ່ຕ້ອງການ ແລະ ຄູຕ້ອງມີທັດສະນະຄະຕິອັນໃດເພື່ອໃຫ້ການສະໜັບສະໜູນຜູ້ຮຽນ, ເພື່ອໃຫ້ບັນລຸຜົນສຳເລັດທາງການການຮຽນຂອງຜູ້ຮຽນຈາກນັ້ນ, ມາດຕະຖານ ແລະ ສະມັດທະພາບຂອງຄູເຫຼົ່ານີ້ສາມາດຖືກນຳໃຊ້ເພື່ອມາພັດທະນາໂຄງສ້າງຫຼັກສູດທັງນີ້ເພື່ອຂໍ້ປະກັນຄວາມສອດຄ່ອງກັນລະຫວ່າງຫຼັກສູດມັດທະຍົມກັບນັກສ້າງສາມັດທະສົມໃຫ້ມີຄວາມໜັກແໜ້ນ.




ຮູບພາບທີ 1 ການສະຫຼຸບສັງລວມມາດຕະຖານການສອນ ແລະ ຜົນສຳເລັດທາງການຮຽນຂອງຜູ້ຮຽນ

## 4.ການນຳໃຊ້ມາດຕະຖານການສອນເພື່ອເປັນທິດທາງໃນການປັບປຸງການ ປະຕິບັດການສອນຂອງຄູ

ມາດຕະຖານການສອນສາມາດນຳໃຊ້ເຂົ້າໃນການສ້າງຄູ, ການເປັນຄູໃໝ່, ນັບທັງການແນະນຳຄູໃໝ່ (induction), ການບຳລຸງຄູ, ການຍົກລະດັບຄູສຶກສານິເທດ ແລະ ຍົກລະດັບຄູສອນໃນຊັ້ນຕ່າງໆ, ແຕ່ເພື່ອເຮັດໃຫ້ໄດ້ຄືແນວນັ້ນພວກເຮົາຕ້ອງດັດປັບບັນດາມາດຕະຖານທີ່ມີຄວາມຄ້າຍຄືກັນໂດຍອີງໃສ່ຜົນສຳເລັດທາງດ້ານການຮຽນຂອງຜູ້ຮຽນເປັນຫຼັກ.

ຄວາມຄາດຫວັງສູງຕໍ່ການບັນລຸມາດຕະຖານຕ້ອງອີງໃສ່ຜູ້ທີ່ຢູ່ໃນລະດັບສູງຂອງລະບົບການສຶກສາໂດຍສະເພາະຄວາມຄາດຫວັງຕໍ່ຄູສຶກສານິເທດກໍຄືບັນລຸມາດຕະຖານໃນລະດັບສູງກວ່າຄູສອນເຊິ່ງໄດ້ສັງລວມເປັນຮູບພາບດັ່ງຕໍ່ໄປນີ້




ຮູບພາບທີ3 ການນໍາໃຊ້ມາດຕະຖານການສອນເພື່ອເປັນທິດທາງໃນການປັບປຸງການປະຕິບັດການສອນ

## ວິຊາ ພາສາລາວ

### I. ມາດຕະຖານຜົນສໍາເລັດ

#### 1. ມາດຕະຖານຜົນສໍາເລັດແຕ່ລະຂັ້ນຮຽນ

| **ຊັ້ນອະນຸບານ-ປ.3** | **ຊັ້ນປະຖົມສຶກສາ ປີທີ 4-5** | **ຊັ້ນມັດທະຍົມສຶກສາ ປີທີ 1-4** | **ຊັ້ນມັດທະຍົມສຶກສາ ປີທີ 5-7** |
|---|---|---|---|
| - ມີຄວາມຮູ້ໃນການຟັງ,ເບິ່ງ ແລະ ເວົ້າເພື່ອສື່ສານ ໃນຊີວິດປະຈໍາວັນ ເໝາະສົມກັບໄວອາຍຸ.<br>- ມີຄວາມຮູ້ໃນການອ່ານອອກສຽງພະຍັນຊະນະ, | - ມີຄວາມຮູ້ກ່ຽວກັບການຟັງ-ເວົ້າພາ ສາທີ່ໃຊ້ໃນການດໍາລົງຊີວິດປະຈໍາວັນ.<br>- ມີຄວາມຮູ້ກ່ຽວກັບອ່ານອອກສຽງ ແລະ ອ່ານໃນໃຈ.<br>- ມີຄວາມຮູ້ກ່ຽວກັບ | - ມີຄວາມຮູ້ພື້ນຖານໃນການຟັງ ແລະ ເວົ້າທີ່ຊັດເຈນ.<br>- ມີຄວາມຮູ້ກ່ຽວກັບການອ່ານ, ການອະທິບາຍ, ໂຕ້ວາທີ,ເວົ້າໃນທີ່ | - ມີຄວາມຮູ້ພື້ນຖານໃນການຟັງ ແລະ ເວົ້າທີ່ມີປະສິດທິພາບ.<br>- ມີຄວາມຮູ້ກ່ຽວກັບການອ່ານ, ການເກັບກໍາຂໍ້ມູນ, ຕີຄວາມ,ຈັບໃຈຄວາມ ແລະ ການວິເຄາະວິຈານ.<br>- ມີຄວາມຮູ້ກ່ຽວກັບການ |

| | | | |
|---|---|---|---|
| ສະຫຼະ, ຄຳທີ່ມີວັນນະຍຸດ ແລະ ຕົວສະກົດແບບງ່າຍໆ.<br>- ມີທັກສະໃນການຂຽນເຊັ່ນ: ຂີດທັບຮອຍຈ້ຳເມັດ, ຂຽນຕົວອັກສອນ ແລະ ຄຳສັບແບບງ່າຍໆ. | ການສະກົດຄຳ,ແຕ່ງປະໂຫຍກ ແລະ ໃຊ້ເຄື່ອງໝາຍວັກຕອນທີ່ເປັນພື້ນຖານ.<br>- ມີຄວາມຮູ້ໃນການນຳໃຊ້ພາສາລາວ ໄປສະໜັບສະໜຸນການຮຽນຮູ້ ແລະທັກສະ ເພື່ອເສີມຂະຫຍາຍການຄົ້ນຄິດ, ການແກ້ບັນຫາ, ການສື່ສານ, ການພົວ ພັນ ແລະ ທັກສະດ້ານ ICT. | ປະຊຸມ ແລະ ເວົ້າໃນນາມພິທີກອນ.<br>- ມີຄວາມຮູ້ໃນຫຼັກການອ່ານບົດຮ້ອຍແກ້ວ ແລະ ບົດຮ້ອຍກອງ.<br>- ມີຄວາມຮູ້ໃນການຂຽນຈົດໝາຍ,ບັນທຶກກອງປະຊຸມ, ອະທິບາຍ,ວິເຄາະວິຈານ ແລະ ຂຽນໂຄງການແບບງ່າຍໆ.<br>- ມີຄວາມຮູ້ກ່ຽວກັບການປະສົມຄຳ ອະລິ ແລະ ປະໂຫຍກ.<br>- ມີຄວາມຮູ້ໃນການນຳໃຊ້ພາສາລາວ ໄປສະໜັບສະໜຸນການຮຽນຮູ້ແລະທັກສະ ເພື່ອເສີມຂະຫຍາຍການຄົ້ນຄິດ, ການແກ້ບັນຫາ, ການສື່ສານ, ການພົວພັນ ແລະ ທັກສະດ້ານ ICT | ຂຽນເພື່ອການສື່ສານໃຊ້ສຳນວນທີ່ເປັນທາງການ ແລະ ບໍ່ເປັນທາງການ, ການຂຽນຫຍໍ້ຄວາມ ຂະຫຍາຍ ຄວາມ ການອະທິບາຍ ພິສູດ ວິຈານ, ການຂຽນບົດລະຄອນ ເລື່ອງສັ້ນ ນິທານ ນະວະນິຍາຍ ວິເຄາະ ວິຈານ ບົດລາຍງານວິຊາການ ແລະ ການຂຽນໂຄງການ.<br>- ມີຄວາມຮູ້ພື້ນຖານດ້ານຫຼັກພາສາລາວ ແລະ ການແຕ່ງກາບກອນ<br>- ມີຄວາມຮູ້ພື້ນຖານໃນການອ່ານແລະ ຂຽນອັກສອນທຳ.<br>- ມີຄວາມຮູ້ໃນການນຳໃຊ້ພາສາລາວ ໄປສະໜັບສະໜຸນການຮຽນຮູ້ແລະທັກສະ ເພື່ອເສີມຂະຫຍາຍການຄົ້ນຄິດ, ການແກ້ບັນຫາ, ການສື່ສານ, ການພົວພັນ ແລະ ທັກສະດ້ານ ICT. |

## 2.ມາດຕະຖານຜົນສຳເລັດແຕ່ລະຊັ້ນຮຽນ

| ຊັ້ນຮຽນ | ມາດຕະຖານຜົນສຳເລັດແຕ່ລະຊັ້ນຮຽນ |
|---|---|
| ຊັ້ນ ມ.5 | - ມີຄວາມຮູ້ໃນການເກັບກຳຂໍ້ມູນຈາກການອ່ານ.<br>- ມີຄວາມຮູ້ກ່ຽວກັບສຳນວນການຂຽນທີ່ເປັນທາງການ ແລະ ເຄິ່ງທາງການ, ການຂຽນຈົດໝາຍ, ຂຽນຫຍໍ້ຄວາມ, ຂະຫຍາຍຄວາມ, ຂຽນບັນທຶກລາຍງານການປະຊຸມ ແລະ ຂຽນລາຍງານຂ່າວ.<br>- ມີຄວາມຮູ້ກ່ຽວກັບການຟັງ-ເວົ້າທີ່ມີປະສິດທິພາບ ແລະໃຊ້ວິຈາລະນະຍານໃນການຟັງ.<br>- ມີຄວາມຮູ້ກ່ຽວກັບປະຫວັດອັກສອນລາວ, ຮູ້ວິທີຂຽນທີ່ຖືກຕ້ອງ, ຮູ້ຄຳ ວະລີ ແລະ ປະໂຫຍກ, ຮູ້ຫຼັກການສຶກສາຄຳສັບ, ຫຼັກການແຕ່ງກອນປະເພດຕ່າງໆ ແລະ ຮູ້ອ່ານ-ຂຽນອັກສອນທຳໃນຂັ້ນພື້ນຖານ.<br>- ມີຄວາມຮູ້ໃນການນຳໃຊ້ພາສາລາວ ໄປສະໜັບສະໜູນການຮຽນຮູ້ແລະທັກສະ  ເພື່ອເສີມຂະຫຍາຍການຄົ້ນຄິດ, ການແກ້ບັນຫາ, ການສື່ສານ, ການພົວພັນ ແລະ ທັກສະດ້ານ ICT. |
| ຊັ້ນ ມ.6 | - ມີຄວາມຮູ້ກ່ຽວກັບການອ່ານ ແລະ ວິເຄາະວິຈານຢ່າງມີວິຈາລະນະຍານ.<br>- ມີຄວາມຮູ້ໃນການຂຽນບົດອະທິບາຍ, ພິສູດ, ວິຈານ, ບົດລະຄອນ, ເລື່ອງສັ້ນ, ນິທານ ແລະ ນິຍາຍ.<br>- ມີຄວາມຮູ້ໃນການຟັງ-ເວົ້າ ຮູ້ໃຫ້ການສຳພາດທີ່ດີມີອາທະສົນໃນການເວົ້າແຕ່ລະໂອກາດ.<br>- ມີຄວາມຮູ້ໃນການການສຶກສາຄຳສັບ, ການແປງຄຳທີ່ໄດ້ເຄົ້າຈາກພາສາອື່ນ, ການສ້າງຄຳໃນພາສາລາວ, ຊະນິດຂອງຄຳ, ຄຳລາຊາສັບ, ການກຳນົດກາລະຕ່າງໆ, ຫຼັກການແຕ່ງກອນ ແລະ ອ່ານຂຽນອັກສອນທຳ.<br>- ມີຄວາມຮູ້ໃນການນຳໃຊ້ພາສາລາວ ໄປສະໜັບສະໜູນການຮຽນຮູ້ແລະທັກສະ ເພື່ອເສີມຂະຫຍາຍການຄົ້ນຄິດ, ການແກ້ບັນຫາ, ການສື່ສານ, ການພົວພັນ ແລະ ທັກສະດ້ານ ICT. |
| ຊັ້ນ ມ.7 | - ມີຄວາມຮູ້ໃນການອ່ານຈັບໃຈຄວາມ ແລະ ຫຍໍ້ຄວາມ ແລະ ອ່ານເພື່ອພັດທະນາຄວາມຮູ້ຕົນເອງ.<br>- ມີຄວາມຮູ້ໃນການຂຽນບົດວິເຄາະ ບົດຄວາມ, ບົດລາຍງານວິຊາການ ແລະ ການຂຽນໂຄງການ.<br>- ມີຄວາມຮູ້ກ່ຽວກັບການອະພິປາຍ, ປະເພດການອະພິປາຍ, ການໂຕ້ວາທີ, ການເປັນພິທີກອນ ແລະ ໂຄສົກ.<br>- ມີຄວາມຮູ້ກ່ຽວກັບຕະກູນພາສາໃນລາວ, ຄຳຢືມຕ່າງໆ, ພື້ນຖານການໃຊ້ວັດຈະນານຸກົມ, ພາກສ່ວນຂອງປະໂຫຍກ, ຫຼັກການ ແລະ ວິທີແຕ່ງກອນລຳ.<br>- ມີຄວາມຮູ້ໃນການນຳໃຊ້ພາສາລາວ ໄປສະໜັບສະໜູນການຮຽນຮູ້ແລະທັກສະ ເພື່ອເສີມຂະຫຍາຍການຄົ້ນຄິດ, ການແກ້ບັນຫາ, ການສື່ສານ, ການພົວພັນ ແລະ ທັກສະດ້ານ ICT. |

## 3.ເວລາ

| | | | |
|---|---|---|---|
| ຂັ້ນຮຽນ | ມ.5 | ມ.6 | ມ.7 |
| ຊົ່ວໂມງ/ອາທິດ | 4 ຊົ່ວໂມງ/ອາທິດ | 4 ຊົ່ວໂມງ/ອາທິດ | 4 ຊົ່ວໂມງ/ອາທິດ |
| ລວມຊົ່ວໂມງ/ປີ | 34 ອາທິດ/136 ຊົ່ວໂມງ | 34 ອາທິດ/136 ຊົ່ວໂມງ | 34 ອາທິດ/136 ຊົ່ວໂມງ |

## IIມາດຕະຖານການຮຽນຮູ້

## ຊັ້ນມັດທະຍົມສຶກສາ ປີທີ 5

| **CONTENT**<br>**ຫົວຂໍ້ບົດ** | **CONTENT STANDRAD**<br>**ມາດຕະຖານດ້ານເນື້ອໃນ** | **PERPORMANCE STANDRAD**<br>**ມາດຕະຖານດ້ານການປະຕິບັດ** | **LEARNING COMPETENCIES**<br>**ສະມັດຖະພາບດ້ານການຮຽນ** |
|---|---|---|---|
| **ພາກຮຽນທີ I** | | | |
| **ພາກທີ I ການອ່ານ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ...** | **ນັກຮຽນມີຄວາມສາມາດ...** | **ນັກຮຽນ...** |
| **ບົດທີ 1 ຄວາມຮູ້ພື້ນຖານກ່ຽວກັບການອ່ານ** | 1.ຄວາມໝາຍຂອງການອ່ານ<br>2.ຄວາມສໍາຄັນຂອງການອ່ານ<br>3.ປະເພດຂອງການອ່ານ<br>3.1 ການອ່ານເພື່ອການສຶກສາຄົ້ນຄວ້າ<br>3.2 ອ່ານເພື່ອບັນເທີງ<br>3.3ອ່ານເພື່ອຄວາມຕ້ອງການອື່ນໆ<br>4.ລະດັບຂອງການອ່ານ<br>4.1 ອ່ານອອກສຽງ<br>4.2 ອ່ານມີປະສິດທິພາບ<br>5.ວິທີອ່ານປຶ້ມ<br>5.1ວິທີອ່ານເພື່ອຕ້ອງການສຶກສາຄົ້ນຄວ້າ<br>5.2ວິທີອ່ານເພື່ອຄວາມບັນເທີງ<br>5.3ວິທີອ່ານເພື່ອຄວາມຕ້ອງການອື່ນ | -ເຂົ້າໃຈຄວາມໝາຍ, ຄວາມສໍາຄັນ,ປະເພດ,ລະດັບ ແລະ ວິທີການອ່ານປຶ້ມແລ້ວຕອບຄໍາຖາມຕາມບົດທີ່ກ່ຽວຂ້ອງ.<br>-ອ່ານເລື່ອງລາວຕ່າງໆ, ສະຫຼຸບຫຍໍ້ ແລະ ບອກຈຸດປະສົງຂອງເລື່ອງຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການອ່ານບົດຕາມແຕ່ລະປະເພດ | -ອະທິບາຍຄວາມໝາຍ, ຄວາມສໍາຄັນ ໂດຍຈໍາແນກໃຫ້ເຫັນຄວາມແຕກຕ່າງດ້ານ ຄວາມໝາຍ, ຄວາມສໍາຄັນ ແລະ ບອກປະເພດການອ່ານຕາມຈຸດປະສົງໄດ້.<br>-ບອກລະດັບຂອງການອ່ານເຊັ່ນ: ອ່ານອອກສຽງ ແລະ ອ່ານມີປະສິທິພາບໄດ້.<br>-ບອກວິທີອ່ານປຶ້ມ ເພື່ອຄວາມຕ້ອງການຄົ້ນຄວ້າ, ຄວາມບັນເທີງ ແລະ ອື່ນໆໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິຄາະ ແລະ ການຄົ້ນຄິດທີ່ສໍາຄັນຂອງການຕັດສິນໃຈໃນຊີວິດຕົວຈິງ |

| | | | |
|---|---|---|---|
| | | | ໄດ້. |
| **ບົດທີ2 ວິທີເກັບກຳຂໍ້ມູນຈາກການອ່ານ** | 1. ຄຸນສົມບັດຂອງຜູ້ອ່ານ<br>2.ການອ່ານເພື່ອຈັບໃຈຄວາມ ລວມ<br>3.ການອ່ານເພື່ອຈັບໃຈຄວາມສຳຄັນ<br>3.1ລັກສະນະຂອໃຈຄວາມສຳຄັນ<br>3.2ວິທີການເກັບໃຈຄວາມສຳຄັນ | -ເຂົ້າໃຈຄຸນສົມບັດຂອງຜູ້ອ່ານ, ການອ່ານເພື່ອຈັບໃຈຄວາມລວມ ແລະ ການອ່ານເພື່ອຈັບໃຈຄວາມສຳຄັນ. ແລ້ວຕອບຄຳຖາມຕາມບົດທີ່ໄດ້ອ່ານມານັ້ນ.<br>-ອ່ານຈາກຄຸນສົມບັດຂອງຜູ້ອ່ານ, ອ່ານປຶ້ມແລະ ສິ່ງພິມຕ່າງໆແລ້ວສະຫຼຸບໃຈຄວາມສຳຄັນຂອງບົດ..<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບຄຸນສົມບັດຜູ້ອ່ານ ແລະ ການເກັບກຳໃຈຄວາມສຳຄັນຈາກການອ່ານແຕ່ລະບົດ. | -ບອກຄຸນສົມບັດຂອງຜູ້ອ່ານ ແລະ ອ່ານເລື່ອງໃດໜຶ່ງແລ້ວສະຫຼຸບໃຈຄວາມລວມໄດ້.<br>-ອ່ານຂໍ້ຄວາມໃນຕອນໃດໜຶ່ງແລ້ວ ຈັບໃຈຄວາມສຳຄັນ ອາດຈະເປັນປະໂຫຍກຫຼືຜູ້ອ່ານສະຫຼຸບເອງໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຕົວຈິງໄດ້. |
| **ພາກທີ II ການຂຽນ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ...** | **ນັກຮຽນມີຄວາມສາມາດ...** | **ນັກຮຽນ...** |
| **ບົດທີ 3 ຄວາມຮູ້ພື້ນຖານກ່ຽວກັບການຂຽນ** | 1. ຄວາມຮູ້ກ່ຽວກັບການຂຽນ<br>2. ການສະກົດຄຳ<br>3. ລະດັບຂອງພາສາ<br>3.1 ພາສາທາງການ ຫຼື ພາສາແບບແຜນ<br>3.2 ພາສາເຄິ່ງທາງການ ຫຼື ເຄິ່ງພາສາແບບແຜນ<br>3.3 ພາສາເວົ້າ ຫຼື ພາສາສົນທະນາ<br>4. ການເລືອກຄຳ ແລະ ປະໂຫຍກ<br>4.1 ການໃຊ້ຄຳ<br>4.2 ປະໂຫຍກ<br>5. ສຳນວນໃນການຂຽນ | -ເຂົ້າໃຈກ່ຽວກັບການຂຽນ ເຊັ່ນ: ການສະ ກົດຄຳຖືກຕ້ອງ, ເລືອກໃຊ້ຄຳ,ສຳນວນ ແລະ ປະໂຫຍກ ເໝາະສົມ, ຂຽນຄຳຮ້ອຍແກ້ວ ແລະ ຮ້ອຍກອງ<br>-ເຂົ້າໃຈລະດັບຂອງພາສາທີ່ຈະໃຊ້ ໃຫ້ ເໝາະສົມກັບກາລະ, ເທສະ, ບຸກຄົນ ແລະ ສະຖານະການໄດ້ແກ່ ພາສາທາງການ, ເຄິ່ງທາງການ ແລະ ພາສາເວົ້າສົນທະນາທົ່ວໄປ.<br>-ເຂົ້າໃຈເລືອກໃຊ້ຄຳສັບ, ປະໂຫຍກ ແລະ ສຳນວນ | -ອະທິບາຍກ່ຽວກັບການສະກົດຄຳ, ການເລືອກໃຊ້ຄຳ, ສຳນວນ, ປະໂຫຍກ ແລະ ຂຽນຄຳຮ້ອຍແກ້ວຮ້ອຍກອງແບບງ່າຍໆໄດ້.<br>-ສະກົດຄຳຖືກຕ້ອງຕາມຫຼັກການຂຽນ, ນຳໃຊ້ພາສາທັງທີ່ເປັນທາງການ, ເຄິ່ງທາງການ ແລະ ພາສາເວົ້າທຳມະດາ ເໝາະສົມກັບກາລະ, ເທສະ, ບຸກຄົນ ແລະສະຖານະການໄດ້.<br>-ເລືອກໃຊ້ຄຳສັບ, ປະໂຫຍກ ແລະ ສຳນວນຕ່າງໆໃນການຂຽນໄດ້. |

| | | | |
|---|---|---|---|
| | 5.1 ແບບບັນຍາຍສຳນວນ<br>5.2 ແບບພັນລະນາສຳນວນ<br>5.3 ແບບເທດສະໜາສຳນວນ<br>5.4 ແບບຍົກຕົວຢ່າງສຳນວນ<br>5.5 ແບບປຽບທຽບສຳນວນ | ຕ່າງໆໃນການຂຽນ ແລ້ວຕອບຄຳຖາມຕາມຄວາມຮູ້ພື້ນຖານທີ່ໄດ້ຂຽນມານັ້ນ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການຂຽນຈາກຄວາມຮູ້ພື້ນຖານກ່ຽວກັບການຂຽນ .. | -ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະ ນາທັກສະການວິຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຕົວຈິງໄດ້. |
| **ບົດທີ 4 ຄຳ ແລະ ສຳນວນທາງທຸລະກິດ** | **1**. ຄວາມສຳຄັນຂອງການໃຊ້ພາສາໃນທາງທຸລະກິດ<br>2. ຄຳສັບທາງທຸລະກິດ<br>3. ສຳນວນທາງທຸລະກິດ<br>4. ຫຼັກການສ້າງສຳນວນທາງທຸລະກິດ | -ເຂົ້າໃຈຄວາມໝາຍ ແລະ ຄວາມສຳຄັນຂອງການໃຊ້ພາສາໃນທາງທຸລະກິດ, ຄຳສັບ ສຳນວນທາງທຸລະກິດ ແລະ ຫຼັກການໃນການສ້າງສຳນວນທາງທຸລະກິດ ແລ້ວຕອບຄຳຖາມທີ່ກ່ຽວກັບສຳນວນພາສາໃນທາງທຸລະກິດ.<br>-ຂຽນຄຳສັບ, ສຳນວນທຸລະກິດທົ່ວໄປ ແລະ ບອກຫຼັກການຂອງການສ້າງສຳນວນທຸລະກິດແບບງ່າຍໆ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບສັບ,ສຳນວນ ແລະ ຫຼັກການສ້າງສຳນວນທາງທຸລະກິດຈາກການອ່ານແຕ່ລະປະເພດໃນບົດ. | -ອະທິບາຍຄວາມໝາຍ ແລະ ຄວາມສຳຄັນຂອງການໃຊ້ພາສາທີ່ເໝາະສົມໃນທາງທຸລະກິດໄດ້.<br>-ບອກຄຳສັບ, ສຳນວນ ແລະ ຫຼັກການສ້າງສຳນວນທາງທຸລະກິດໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາ<br>-ພັດທະນາທັກສະການວິຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຕົວຈິງໄດ້. |
| **ບົດທີ 5 ການຂຽນເພື່ອການສື່ສານ** | **1**. ຄວາມໝາຍ ແລະ ຄວາມສຳຄັນ ຂອງການຂຽນເພື່ອການສື່ສານ<br>1.1 ຄວາມໝາຍຂອງການຂຽເພື່ອ ການສື່ສານ<br>1.2 ຄວາມສຳຄັນຂອງການຂຽນເພື່ອການສື່ສານ | -ເຂົ້າໃຈຄວາມໝາຍ ແລະ ຄວາມສຳຄັນ ຂອງການຂຽນເພື່ອການສື່ສານ ແລະ ຕອບຄຳຖາມຕາມບົດທີ່ໄດ້ຂຽນມານັ້ນ.<br>-ຈຳແນກການຂຽນກັບການສື່ສານ, ບອກຈຸດໝາຍໃນ | -ອະທິບາຍ ແລະ ຈຳແນກໃຫ້ເຫັນຄວາມໝາຍ ຄວາມສຳຄັນຂອງການຂຽນເພື່ອການສື່ສານໄດ້.<br>-ອະທິບາຍການຂຽນກັບການສື່ສານ ແລະ ຂຽນຂໍ້ຄວາມຕ່າງໆ ເພື່ອຈຸດມຸ່ງໝ |

| | | | |
|---|---|---|---|
| | 2. ການຂຽນກັບການສື່ສານ<br>3. ຈຸດມຸ່ງໝາຍຂອງການຂຽນ<br>3.1 ການຂຽນເພື່ອເລົ່າເລື່ອງ<br>3.2ການຂຽນເພື່ອອະທິບາຍ<br>3.3 ການຂຽນເພື່ອໂຄສະນາ<br>3.4 ການຂຽນເພື່ອປຸກໃຈ<br>3.5 ການຂຽນເພື່ອສະແດງຄວາມຄິດເຫັນ<br>3.6 ການຂຽນເພື່ອສ້າງຈິນຕະນາການ<br>3.7 ການຂຽນແບບສຽດສີ<br>3.8 ການຂຽນແບບສ້າງສັນ | ການຂຽນເຊັ່ນ: ຂຽນເພື່ອເລົ່າເລື່ອງ, ອະທິບາຍ, ໂຄສະນາ, ປຸກໃຈ, ສະແດງຄວາມຄິດເຫັນ, ສ້າງຈິນຕະນາການ, ສຽດສີ ແລະ ສ້າງສັນຕາມຈຸດທີ່ຍົກຂຶ້ນໃນບົດ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການຂຽນຕາມທີ່ໄດ້ຮຽນໃນບົດ. | າຍຂອງຮູບແບບການຂຽນທີ່ກຳນົດໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະ ນາທັກສະການວິຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຕົວຈິງໄດ້. |
| **ບົດທີ 6 ວິທີຂຽນຫຍໍ້ຄວາມ** | 1. ຄວາມໝາຍຂອງການຂຽນຫຍໍ້ຄວາມ<br>2. ຫຼັກການຂຽນຫຍໍ້ຄວາມ<br>3. ວິທີປະຕິບັດຂອງຜູ້ຂຽນຫຍໍ້ຄວາມ<br>3.1 ຫຍໍ້ຄວາມຈາກການຟັງ<br>3.2 ຫຍໍ້ຄວາມຈາກການອ່ານ<br>4. ວິທີປະຕິບັດໃນການຂຽນຫຍໍ້ຄວາມ<br>5. ຮູບແບບຂຶ້ນຕົ້ນຂອງການຂຽນຫຍໍ້ຄວາມ<br>5.1 ການຂຽນຫຍໍ້ຄວາມຮ້ອຍແກ້ວ ແລະ ຮ້ອຍກອງ<br>5.2 ການຫຍໍ້ຈົດໝາຍ<br>5.3 ການຫຍໍ້ຈົດໝາຍຕອບຮັບ<br>5.4 ການຫຍໍ້ຈົດໝາຍທາງລັດຖະການ | -ເຂົ້າໃຈຄວາມໝາຍ ແລະ ຫຼັກ ການຂຽນຫຍໍ້ຄວາມ ແລະ ຕອບ ຄຳຖາມຕາມບົດທີ່ໄດ້ອ່ານມານັ້ນ.<br>-ບອກວິທີປະຕິບັດຂອງຜູ້ຂຽນຫຍໍ້ຄວາມ ແລະ ການຂຽນຫຍໍ້ຄວາມສັ້ນໆຈາກບົດທີ່ອ່ານ.<br>-ຂຽນຫໍ້ຄວາມຄຳຮ້ອຍແກ້ວ ແລະ ຄຳຮ້ອຍກອງສັ້ນໆ ແລະ ການຂຽນຫຍໍ້ຈົດໝາຍຕິດຕໍ່ທາງການຕາມຮູບແບບທີ່ຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບວິທີຂຽນຫຍໍ້ຄວາມຕາມແຕ່ລະປະເພດໃນບົດ. | -ອະທິບາຍ ແລະ ຈຳແນກໃຫ້ເຫັນຄວາມ ໝາຍ, ຫຼັກການ ແລະ ວິທີປະຕິບັດຂອງການຂຽນຫຍໍ້ຄວາມໄດ້.<br>-ຂຽນຫຍໍ້ຄວາມຈາກບົດທີ່ອ່ານເຊັ່ນ ບົດຄຳຮ້ອຍແກ້ວ ແລະ ຮ້ອຍກອງໄດ້.<br>-ປະຕິບັດຫຼັກການຂຽນ ແລະ ຮູບແບບການຂຶ້ນຕົ້ນຂອງການຂຽນຫຍໍ້ຄວາມໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະ ນາທັກສະການວິຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຕົວຈິງ |

| | | | |
|---|---|---|---|
| | | | ໄດ້. |
| **ບົດທີ 7 ການຂຽນລາຍງານການປະຊຸມ** | 1.ຄວາມໝາຍຂອງການຂຽນລາຍງານການປະຊຸມ<br>2.ຫຼັກການການຂຽນລາຍງານການປະຊຸມ<br>3.ຮູບແບບການຂຽນລາຍງານການປະຊຸມ | -ເຂົ້າໃຈຄວາມໝາຍຂອງບົດລາຍງານການປະຊຸມ, ບອກຫຼັກການ ແລະ ຮູບແບບຂອງການຂຽນລາຍງານການປະຊຸມ ແລະ ຕອບຄໍາຖາມກ່ຽວກັບບົດທີ່ໄດ້ອ່ານມານັ້ນ.<br>-ຂຽນບົດລາຍງານການປະຊຸມໂດຍໃຊ້ຮູບແບບ ແລະ ໂຄງຮ່າງລາຍງານການປະຊຸມທີ່ຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບເນື້ອໃນແຕ່ລະປະເພດໃນບົດ. | -ອະທິບາຍຄວາມໝາຍ, ຄວາມສໍາຄັນຂອງການຂຽນບົດລາຍງານກອງປະຊຸມໄດ້.<br>-ບອກຫຼັກການການ ແລະ ຮູບແບບການຂຽນບົດລາຍງານກອງປະຊຸມໄດ້.<br>-ຂຽນບົດລາຍງານການປະຊຸມ ຕາມຮູບແບບ ແລະ ໂຄງຮ່າງຂອງການຂຽນລາຍງານທີ່ຖືກຕ້ອງໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະ ນາທັກສະການວິຄາະ ແລະ ການຄົ້ນຄິດທີ່ສໍາຄັນຂອງການຕັດສິນໃຈໃນຊີວິດຕົວຈິງໄດ້. |
| **ບົດທີ 8 ການຂຽນຂ່າວ** | 1. ຄວາມໝາຍຂອງຂ່າວ<br>2. ການຂຽນຂ່າວ<br>2.1 ຫຼັກການຂຽນຂ່າວ<br>2.2 ລາຍລະອຽດໃນການຂຽນຂ່າວ<br>2.3 ຄໍາແນະນໍາໃນການຂຽນຂ່າວ | -ເຂົ້າໃຈຄວາມໝາຍ, ຄວາມສໍາຄັນ ແລະຫຼັກການຂອງການຂຽນຂ່າວແລະ ຕອບຄໍາຖາມຕາມບົດທີ່ໄດ້ອ່ານມານັ້ນ.<br>-ຂຽນຂ່າວໂດຍໃຊ້ຮູບແບບ ແລະ ຫຼັກການຂອງການຂຽນຂ່າວທີ່ຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການຂຽນຂ່າວຈາກການອ່ານແຕ່ລະປະເພດໃນບົດ. | -ອະທິບາຍ, ຈໍາແນກໃຫ້ເຫັນຄວາມໝາຍ, ຄວາມສໍາຄັນ ແລະຫຼັກການຂອງການຂຽນຂ່າວໄດ້.<br>-ຂຽນຂ່າວໂດຍໃຊ້ຮູບແບບ ແລະ ຫຼັກການຂຽນຂ່າວທີ່ຖືກຕ້ອງໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີຄວາມຄິດສ້າງສັນໃນການເຮັດກິດຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິຄາະ ແລະ ການ |

| | | | |
|---|---|---|---|
| | | | ຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຊີວິດຕົວຈິງໄດ້ |
| **ພາກທີ III ການຟັງ - ການເວົ້າ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ...** | **ນັກຮຽນມີຄວາມສາມາດ...** | **ນັກຮຽນ...** |
| **ບົດທີ2 ປະສິດທິພາບຂອງການຟັງ ແລະ ການເວົ້າ** | 1.ການຟັງ<br>1.1 ຄວາມໝາຍຂອງການຟັງ<br>1.2 ປະສິດທິພາບໃນການຟັງ<br>1.3 ຈຸດປະສົງຂອງການຟັງ<br>1.4 ຂໍ້ທີ່ຄວນປະຕິບັດໃນການຟັງ<br>1.5 ການຟັງທີ່ບໍ່ໄດ້ຮັບປະສິດທິຜົນ<br>2. ການເວົ້າ<br>2.1 ຄວາມໝາຍຄວາມສຳຄັນຂອງການເວົ້າ<br>2.2 ຈຸດປະສົງຂອງການເວົ້າ<br>2.3 ການຈັດຊະນິດການເວົ້າ<br>2.4 ການເວົ້າທີ່ດີ<br>2.5 ການກຽມເນື້ອໃນຂອງການເວົ້າ<br>3. ການໃຊ້ພາສາໃນການເວົ້າ<br>3.1 ສ້າງຖ້ອຍຄຳສັ້ນໃຫ້ກົງກັບຄວາມໝາຍທີ່ຕ້ອງການ<br>3.2 ຮູ້ເລືອກໃຊ້ຄຳ<br>3.3 ໃຊ້ຖ້ອຍຄຳໃຫ້ມີຊີວິດຊີວາ<br>3.4 ໃຊ້ພາສາໃຫ້ເໝາະກັບກາ ລະເທສະ ແລະ ການຟັງ<br>3.5 ໃຊ້ພາສາໃຫ້ສຸພາບ<br>4. ການກຽມຕົວຂອງຜູ້ເວົ້າ<br>4.1 ສ້າງຄວາມເຊື່ອໝັ້ນຕົນ | -ເຂົ້າໃຈຄວາມໝາຍ, ປະສິດທິ ພາບ, ຈຸດປະສົງ ແລະ ຂໍ້ຄວນປະຕິບັດໃນການຟັງແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຄວາມໝາຍຄວາມສຳຄັນ, ຈຸດປະສົງ, ຊະນິດການເວົ້າ, ການເວົ້າທີ່ດີ, ການໃຊ້ພາສາໃນການເວົ້າ ແລະ ການກຽມຕົວຂອງຜູ້ເວົ້າ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ<br>-ເວົ້າຕໍ່ໜ້າຜູ້ຊົມຢ່າງຖືກຕ້ອງໂດຍໃຊ້ທິດສະດີທີ່ໄດ້ຮຽນມາ.<br>-ສະແດງອາລົມໃນການເວົ້າຢ່າງຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາແລະຕິດຕາມການຮຽນຮູ້ກ່ຽວກັບປະສິດທິພາບຂອງການຟັງ ແລະ ການເວົ້າ. | - ການໃຊ້ພາສາໃນການເວົ້າ ແລະ ການກຽມຕົວຂອງຜູ້ເວົ້າໄດ້.<br>-ເວົ້າມີປະສິດທິພາບ ແລະເປັນໜ້າເຊື່ອຖື ຕໍ່ໜ້າຜູ້ຟັງໄດ້.<br>-ສະແດງອາລົມໃນການເວົ້າສຸພາບອ່ອນໂຍນຢູ່ໃນກຸ່ມຫຼື ຊຸມຊົນໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |

| | | | |
|---|---|---|---|
| | ເອງ<br>4.3 ຄຸນນະທຳໃນການເວົ້າ | | |
| **ບົດທີ 10 ການຟັງໂດຍໃຊ້ວິຈາລະນະຍານ** | 1. ຄວາມໝາຍຂອງວິຈາລະນະ ຍານ<br>2. ການໃຊ້ວິຈາລະນະຍານໃນການຟັງ<br>3. ຂະບວນການຟັງ ໂດຍໃຊ້ວິຈາ ລະນະຍານວິທີຝຶກຟັງໃຫ້ສຳເລັດຜົນ. | -ເຂົ້າໃຈຄວາມໝາຍຂອງວິຈາລະ ນະຍານ ແລະ ການໃຊ້ວິຈາລະນະ ຍານໃນການຟັງ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຂະບວນການຟັງໂດຍໃຊ້ວິຈາລະນະຍານ ແລະການຝຶກຟັງໃຫ້ສຳເລັດຜົນ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ຂຽນບົດສະຫຼຸບໂດຍອີງໃສ່ເລື່ອງທີ່ໄດ້ຟັງແລ້ວ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການຟັງໂດຍໃຊ້ວິຈາລະນະຍານ. | -ອະທິບາຍຄວາມໝາຍຂອງວິຈາລະ ນະຍານ ແລະ ການໃຊ້ວິຈາລະນະຍານໃນການຟັງໄດ້.<br>-ບອກຂະບວນການຟັງໂດຍໃຊ້ວິຈາລະນະຍານ ແລະ ການຝຶກຟັງໃຫ້ສຳເລັດຜົນໄດ້.<br>-ຂຽນບົດສະຫຼຸບໂດຍອີງໃສ່ເລື່ອງທີ່ຟັງແລ້ວໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ພາກຮຽນທີ II** | | | |
| **ພາກທີ IV ຫຼັກພາສາລາວ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ...** | **ນັກຮຽນມີຄວາມສາມາດ...** | **ນັກຮຽນ...** |
| **ບົດທີ 11 ຄວາມເປັນມາຂອງພາສາລາວ ແລະ ຕົວອັກສອນລາວ** | 1. ຄວາມເປັນມາຂອງພາສາລາວ<br>2. ກ່ຽວກັບຕົວອັກສອນ<br>3.ກ່ຽວກັບສຳນຽງທ້ອງຖິ່ນ<br>4. ປະຫວັດຫຍໍ້ກ່ຽວກັບອັກສອນລາວ | -ເຂົ້າໃຈ ແລະ ຮຽນຮູ້ຄວາມເປັນມາຂອງພາສາລາວ ແລະ ອັກສອນລາວແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈພາສາທ້ອງຖິ່ນ ແລະ ປະ ຫວັດຂອງອັກສອນລາວ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ ກ່ຽວ | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມເປັນມາຂອງພາສາລາວ ແລະ ອັກສອນລາວໄດ້.<br>-ອະທິບາຍ ແລະ ສະແດງໃຫ້ເຫັນສຳນຽງທ້ອງຖິ່ນ ແລະ ປະຫວັດຫຍໍ້ຂອງອັກສອນລາວໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດ |

| | | | |
|---|---|---|---|
| | | ກັບຄວາມເປັນມາຂອງພາສາ ແລະ ອັກສອນລາວ. | ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 12 ຫຼັກການບາງອັນໃນການຂຽນພາສາລາວທີ່ຖືກຕ້ອງ** | ຫຼັກການຂຽນພາສາລາວທີ່ຖືກຕ້ອງ ມີດັ່ງນີ້:<br>1. ຫຼັກຕົວອັກສອນ<br>2. ຫຼັກໄມ້ເອກ, ໄມ້ໂທ<br>3. ຫຼັກຄວາມໝາຍຂອງພາສາບາລີ-ສັນສະກິດ<br>4. ຫຼັກເຄື່ອງໝາຍວັກຕອນ<br>5. ຫຼັກການໃຊ້ຄຳຕໍ່<br>6. ຫຼັກການໃຊ້ຕົວອັກສອນ ຣ ແລະ ລ<br>7. ຫຼັກການເຊື່ອມຄຳ ແລະ ຮຽງຄຳໃນປະໂຫຍກ | -ເຂົ້າໃຈ ແລະ ຮຽນຮູ້ຫຼັກການຕ່າງໆໃນການຂຽນພາສາລາວຢ່າງຖືກຕ້ອງ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ຈຳແນກຄຳທີ່ສະກົດຜິດຕາມບົດຂຽນຕ່າງໆ.<br>-ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາ ແລະ ຕິດຕາມການຮຽນຮູ້ຫຼັກການບາງອັນໃນການຂຽນພາສາລາວທີ່ຖືກຕ້ອງ. | -ອະທິບາຍ ແລະ ສະແດງໃຫ້ເຫັນຫຼັກການຕ່າງໆໃນການຂຽນພາສາລາວໄດ້.<br>-ຈຳແນກຄຳທີ່ສະກົດຜິດຕາມບົດຂຽນຕ່າງໆໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 13 ລັກສະນະຄຳ, ອະລີ ແລະ ປະໂຫຍກ** | 1. ຄຳ<br>1.1 ຄວາມໝາຍຂອງຄຳ<br>1.2 ອົງປະກອບຂອງຄຳ<br>2. ອະລີ<br>2.1 ຄວາມໝາຍຂອງອະລີ<br>2.2. ປະເພດຂອງອະລີ<br>3. ປະໂຫຍກ<br>3.1ຄວາມໝາຍຂອງປະໂຫຍກ<br>3.2ພາກສ່ວນຂອງປະໂຫຍກ | -ເຂົ້າໃຈຄວາມໝາຍ ແລະ ສ່ວນປະກອບຂອງຄຳ; ຄວາມໝາຍ ແລະປະເພດຂອງອະລີ; ຄວາມໝາຍ ແລະພາກສ່ວນຂອງປະໂຫຍກ ແລ້ວຕອບ ຄຳຖາມທີ່ກ່ຽວຂ້ອງ.<br>-ຈຳແນກຄຳ, ອະລີ ແລະ ປະໂຫຍກຢູ່ໃນຂໍ້ຄວາມໃດໜຶ່ງ.<br>-ແຕ່ງປະໂຫຍກສອງພາກສ່ວນ ແລະສາມພາກສ່ວນຢ່າງຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງຄຳ, ອະລີ ແລະປະໂຫຍກໄດ້.<br>-ຈຳແນກອົງປະກອບຂອງຄຳ, ອະລີ ແລະ ປະໂຫຍກໄດ້.<br>-ແຕ່ງປະໂຫຍກສອງພາກສ່ວນ ແລະສາມພາກສ່ວນໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກ |

| | | | |
|---|---|---|---|
| | | ກ່ຽວກັບຄຳ, ວະລີ ແລະ ປະ ໂຫຍກ. | ສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 14ການສຶກສາຄຳສັບ** | 1. ຄວາມໝາຍຂອງການສຶກສາຄຳສັບ<br>2. ຄວາມສຳຄັນຂອງການສຶກສາຄຳສັບ<br>3. ລັກສະນະສະເພາະຂອງຄຳ<br>4. ປະເພດຄວາມໝາຍຂອງຄຳ<br>4.1 ຄວາມໝາຍທີ່ເປັນຮູບປະທຳ<br>4.2 ຄວາມໝາຍທີ່ເປັນນາມທຳ<br>5. ການກະຈາຍຄວາມໝາຍຂອງຄຳ<br>6. ຄຳທີ່ມີຫຼາຍຄວາມໝາຍ<br>7. ຄຳທີ່ມີຄວາມໝາຍກົງກັນຂ້າມ<br>8. ຄຳທີ່ມີຄວາມໝາຍໃກ້ກັນ<br>9. ວັດຈະນານຸກົມ<br>9.1 ຄວາມໝາຍຂອງວັດຈະ ນານຸກົມ<br>9.2ການປະກອບຄຳຫຼັກໃນວັດຈະນານຸກົມ<br>9.3ການຈັດໝວດຂອງຄຳ, ລຳດັບອັກສອນ ແລະ ລຳດັບຄຳ<br>9.4ອັກສອນຫຍໍ້ທີ່ໃຊ້ໃນວັດຈະນານຸກົມລາວ | -ເຂົ້າໃຈຄວາມໝາຍ ຄວາມສຳຄັນຂອງການສຶກສາຄຳສັບ; ລັກສະນະສະເພາະ, ປະເພດຄວາມໝາຍ ແລະ ການກະຈາຍຄວາມໝາຍຂອງຄຳ ແລ້ວຕອບຄຳຖາມທີ່ກ່ຽວ ຂ້ອງ.<br>- ຈາແນກຄາທີ່ມີຫຼາຍຄວາມໝາຍ, ຄວາມໝາຍໃກ້ຄຽງກັນ ແລະ ຄວາມໝາຍກົງກັນຂ້າມກັນຢູ່ໃນຂໍ້ຄວາມຖືກຕ້ອງ.<br>- ເຂົ້າໃຈຄວາມໝາຍ, ການປະກອບຄຳຫຼັກ, ການຈັດໝວດຄຳ, ການຮຽງລຳດັບຄຳ ແລະ ຕົວອັກສອນຫຍໍ້ໃນວັດຈະນານຸກົມແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ໃຊ້ປຶ້ມວັດຈະນານຸກົມພາສາລາວ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ ກຽວກັບການສຶກສາຄຳສັບ. | - ອະທິບາຍຄວາມ ໝາຍ ຄວາມສຳຄັນ ຂອງການສຶກສາຄຳສັບໄດ້.<br>- ຈຳແນກຄຳທີ່ມີຫຼາຍຄວາມໝາຍ, ຄວາມໝາຍກົງຂ້າມກັນ ແລະ ຄວາມໝາຍໃກ້ຄຽງກັນໄດ້.<br>- ອະທິບາຍຄວາມໝາຍ ແລະ ຮູ້ການຮຽງຄຳ, ອັກສອນຫຍໍ້ ແລະ ວິທີການໃຊ້ວັດຈະນານຸກົມພາສາລາວໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 15 ຫຼັກການ** | 1. ກອນຮ່າຍ | -ເຂົ້າໃຈຄວາມໝາຍກອນ | -ອະທິບາຍ ແລະ ສະແດງ |

| | | | |
|---|---|---|---|
| **ແຕ່ງກອນລາວ** | 1.1 ຄວາມໝາຍຂອງກອນຮ່າຍ<br>1.2 ວິທີການແຕ່ງກອນຮ່າຍ<br>2. ກອນໂຄງ<br>2.1 ຄວາມໝາຍຂອງກອນໂຄງ<br>2.2 ຕົວຢ່າງກອນໂຄງ | ຮ່າຍ ; ກອນໂຄງ ແລະ ວິທີການແຕ່ງກອນຮ່າຍແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ອ່ານກອນຮ່າຍ ແລະ ກອນໂຄງຊະນິດຕ່າງໆ ຖືກຕ້ອງຕາມຮູບແບບການອ່ານຂອງມັນ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ ກ່ຽວກັບກອນຮ່າຍ ແລະ ໂຄງ. | ໃຫ້ເຫັນຄວາມ ໝາຍຂອງກອນຮ່າຍ ແລະກອນໂຄງໄດ້.<br>-ຈຳແນກກອນຮ່າຍກັບກອນໂຄງໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 16**<br>**ອັກສອນທຳ** | 1. ປະຫວັດ ແລະ ຄວາມໝາຍ<br>2. ສາຍພົວພັນລະຫວ່າງອັກສອນທຳ ແລະ ອັກສອນລາວ.<br>3. ອັກສອນທຳ<br>3.1 ພະຍັນຊະນະປ່ຽວ<br>3.2 ພະຍັນຊະນະປະສົມ<br>3.3 ພະຍັນຊະນະເຟື້ອງ<br>4. ສະຫຼະ<br>5. ການປະກອບຄຳ | -ເຂົ້າໃຈຄວາມໝາຍ ແລະ ປະຫວັດຂອງອັກສອນທຳ; ສາຍພົວພັນກັບອັກສອນລາວ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ອ່ານ ແລະ ຂຽນ ພະຍັນຊະນະ, ສະຫຼະ, ວັນນະຍຸດອັກສອນທຳຢ່າງຖືກຕ້ອງແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບອັກສອນທຳ. | -ອະທິບາຍປະຫວັດ, ຄວາມໝາຍຂອງອັກສອນທຳ ແລະ ສາຍພົວພັນກັບອັກສອນລາວໄດ້.<br>-ອ່ານ ແລະ ຂຽນ ອັກສອນທຳ ພ້ອມຕອບຄຳຖາມທີ່ກ່ຽວຂ້ອງໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |

**ຊັ້ນມັດທະຍົມສຶກສາ ປີທີ 6**

| **CONTENT**<br>**ຫົວຂໍ້ບົດ** | **CONTENT STANDARD**<br>**ມາດຕະຖານດ້ານເນື້ອໃນ** | **PERFORMANCE STANDARD**<br>**ມາດຕະຖານດ້ານການປະຕິບັດ** | **LEARNING COMPETENCIES**<br>**ສະມັດຖະພາບດ້ານການຮຽນ** |
|---|---|---|---|
| **ພາກຮຽນທີ I** | | | |
| **ພາກທີ I ການອ່ານ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ…** | **ນັກຮຽນມີຄວາມສາມາດ ...** | **ນັກຮຽນ...** |
| **ບົດທີ 1 ການອ່ານຕີຄວາມໝາຍ** | 1. ຄວາມໝາຍຂອງການອ່ານຕີຄວາມໝາຍ<br>2. ປະເພດຂອງການອ່ານຕີຄວາມໝາຍ<br>3. ຫຼັກການອ່ານຕີຄວາມ | -ເຂົ້າໃຈຄວາມໝາຍ, ປະເພດ, ຫຼັກການອ່ານຕີຄວາມໝາຍ ແລະ ຕອບຄໍາຖາມທີ່ກ່ຽວຂ້ອງ.<br>-ອ່ານບົດກອນ, ບົດຄວາມໃດໜຶ່ງແລ້ວຕີຄວາມໝາຍຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ, ຕິດຕາມການຮຽນຮູ້ກ່ຽວກັບການອ່ານຕີຄວາມໝາຍ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງການອ່ານຕີຄວາມໝາຍໄດ້.<br>-ບອກປະເພດ ແລະ ບອກຫຼັກການອ່ານຕີຄວາມໝາຍໄດ້.<br>-ອ່ານບົດກອນ ຫຼື ບົດຄວາມແລ້ວຕີຄວາມໝາຍໄດ້<br>-ສະແດງການເຮັດວຽກແບບເປັນກຸ່ມ ແລະ ມີແນວຄິດສ້າງສັນໂດຍຜ່ານການເຮັດກິດ ຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສໍາຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 2 ການອ່ານວິເຄາະວິຈານຢ່າງມີວິຈາລະນະ ຍານ** | 1. ຄວາມໝາຍຂອງການອ່ານວິ ເຄາະ ວິຈານຢ່າງມີວິຈາລະນະວິຍານ<br>2. ຄວາມສາມາດພື້ນຖານຂອງການອ່ານວິເຄາະວິຈານຢ່າງມີວິຈາລະນະຍານ<br>**3.** ວິທີອ່ານວິເຄາະວິຈານຢ່າງມີວິຈາລະນະຍານ | -ເຂົ້າໃຈຄວາມໝາຍ, ຄວາມສາມາດພື້ນຖານ, ວິທີອ່ານວິເຄາະວິຈານຢ່າງມີວິຈາລະນະຍານ ແລະ ຕອບຄໍາຖາມທີ່ກ່ຽວຂ້ອງ.<br>-ອ່ານບົດຄວາມໃດໜຶ່ງແລ້ວວິເຄາະວິຈານຢ່າງມີວິຈາລະນະຍານຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນ | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມ ໝາຍຂອງການອ່ານວິເຄາະວິຈານຢ່າງມີວິຈາລະນະຍານໄດ້.<br>-ບອກຄວາມສາມາດພື້ນຖານ ແລະ ວິທີອ່ານວິເຄາະວິຈານຢ່າງມີວິຈາລະນະຍານໄດ້. |

| | | | |
|---|---|---|---|
| | | ເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບການອ່ານວິເຄາະວິຈານຢ່າງມີວິຈາລະນະ ຍານ. | -ອ່ານວິເຄາະວິຈານບົດຄວາມຢ່າງມີວິຈາລະຍານໄດ້.<br>-ສະແດງການເຮັດວຽກແບບເປັນກຸ່ມ ແລະ ມີແນວຄິດສ້າງສັນໂດຍຜ່ານການເຮັດກິດຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສໍາຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ພາກທີ II ການຂຽນ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ...** | **ນັກຮຽນມີຄວາມສາມາດ ...** | **ນັກຮຽນ...** |
| **ບົດທີ 3 ບົດອະທິບາຍ** | 1. ຄວາມໝາຍຂອງບົດອະທິບາຍ<br>2. ລະດັບຄາດໝາຍຂອງບົດອະທິບາຍ<br>3. ສິລະປະແຫ່ງການຄົ້ນຄິດຕຶກຕອງຂອງບົດ<br>3.1ວິທີຕຶກຕອງແບບອ້າງອີງຫຼັກຖານ<br>3.2ການຄິດຕຶກຕອງດ້ວຍວິທີ ຕັ້ງຄໍາຖາມ<br>3.3ການຄົ້ນຄິດຕຶກຕອງແບບຕ່ອງໂສ້<br>3.4ການຄົ້ນຄິດດ້ວຍວິທີປຽບທຽບກັບສິ່ງກົງກັນຂ້າມ<br>3.5ການຄົ້ນຄິດຕຶກຕອງແບບໄມ້ງັດ<br>4.ຂັ້ນຕອນໃນການແຕ່ງບົດອະທິບາຍ<br>4.1ຊອກຮູ້ລະດັບຄາດ | -ເຂົ້າໃຈຄວາມໝາຍ, ລະດັບຄາດໝາຍ, ສິລະປະແຫ່ງການຄົ້ນຄິດຕຶກຕອງຂອງບົດ ແລະ ຕອບຄໍາຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຂັ້ນຕອນ, ໂຄງຮ່າງການແຕ່ງບົດອະທິບາຍ ແລະ ຕອບຄໍາຖາມທີ່ກ່ຽວ ຂ້ອງ.<br>-ແຕ່ງບົດອະທິບາຍຕາມໂຄງຮ່າງຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບບົດອະທິບາຍ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງບົດອະທິບາຍໄດ້.<br>-ບອກລະດັບຄາດໝາຍ, ສິລະປະ ແລະ ຂັ້ນຕອນໃນການຂຽນບົດອະທິບາຍໄດ້.<br>-ແຕ່ງບົດອະທິບາຍຕາມໂຄງຮ່າງໄດ້.<br>-ສະແດງການເຮັດວຽກແບບເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສໍາຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |

| | | | |
|---|---|---|---|
| | ໝາຍຂອງຫົວບົດ<br>4.2ສ້າງໂຄງຮ່າງຂອງບົດອະທິບາຍການແຕ່ງຕົວຈິງ. | | |
| **ບົດທີ 4 ການຂຽນບົດພິສູດ** | 1. ຄວາມໝາຍຂອງບົດພິສູດ<br>2. ການແຕ່ງບົດພິສູດ<br>2.1ຊອກເນື້ອໃນ ແລະ ລະດັບຄາດໝາຍຂອງບັນຫາທີ່ຈະເອົາມາພິສູດ<br>2.2ຊອກຫຼັກຖານມາອ້າງອີງ<br>2.3ພາກສ່ວນຕ່າງໆຂອງບົດພິສູດ | -ເຂົ້າໃຈຄວາມໝາຍ, ການແຕ່ງບົດພິສູດ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈພາກສ່ວນຕ່າງໆຂອງບົດພິສູດ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ແຕ່ງບົດພິສູດຕົວຈິງຖືກຕາມຂັ້ນຕອນ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບບົດພິສູດ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງບົດພິສູດໄດ້.<br>-ບອກຂັ້ນຕອນຕ່າງໆໃນການແຕ່ງບົດພິສູດໄດ້.<br>-ແຕ່ງບົດພິສູດຄຳສຸພາສິດໃດໜຶ່ງໄດ້.<br>-ສະແດງການເຮັດວຽກແບບເປັນກຸ່ມ ແລະ ມີແນວຄິດສ້າງສັນໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 5 ການຂຽນບົດວິຈານ** | 1.ຄວາມໝາຍຂອງບົດວິຈານ<br>2.ລັກສະນະຂອງບົດວິຈານ<br>2.1ວິຈານບັນຫາໃດໜຶ່ງທີ່ຖືກຕ້ອງສົມບູນ<br>2.2ວິຈານບັນຫາໃດໜຶ່ງທີ່ຖືກແຕ່ຜິດແດ່<br>2.3ວິຈານບັນຫາໃດໜຶ່ງທີ່ຜິດໝົດ.<br>3.ການຂຽນບົດວິຈານ<br>4.ການສົມທຽບລະຫວ່າງບົດອະທິບາຍ,ບົດພິສູດ ແລະ ບົດວິຈານ<br>4.1 ຈຸດຄືກັນ<br>4.2 ຈຸດຕ່າງກັນ | -ເຂົ້າໃຈຄວາມໝາຍ, ລັກສະນະຂອງບົດວິຈານ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຂັ້ນຕອນຂອງການຂຽນບົດວິຈານ, ການສົມທຽບລະຫວ່າງບົດອະ ທິບາຍ , ບົດພິສູດ, ບົດວິຈານ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ແຕ່ງບົດວິຈານຖືກຕ້ອງຕາມໂຄງຮ່າງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບບົດວິຈານ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງບົດວິຈານໄດ້.<br>-ບອກລັກສະນະ ແລະ ຂັ້ນຕອນໃນການແຕ່ງບົດວິຈານໄດ້.<br>- ສົມທຽບຈຸດຄືກັນ ແລະ ຕ່າງກັນລະຫວ່າງບົດອະທິບາຍ, ພິສູດ ແລະ ບົດວິຈານໄດ້.<br>- ແຕ່ງບົດວິຈານສຸພາສິດໃດໜຶ່ງໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນໂດຍຜ່ານການເຮັດກິດຈະກຳຂອງກຸ່ມ |

| | | | |
|---|---|---|---|
| | | | ໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສໍາຄັນຂອງການຕັດສິນໃຈໃນຊີວິດຈິງ. |
| **ບົດທີ 6 ການຂຽນບົດລະ ຄອນ** | 1. ຄວາມໝາຍຂອງບົດລະຄອນ<br>2. ປະເພດບົດລະຄອນ<br>2.1 ລະຄອນໂສກ<br>2.2 ລະຄອນຕະຫຼົກ<br>2.3 ລະຄອນປະສົມ<br>3 ລັກສະນະຂອງບົດລະຄອນ<br>4 ສ່ວນປະກອບຂອງບົດລະຄອນ<br>4.2 ແນວຄິດ ແລະ ສາລະ<br>4.3 ໂຄງເລື່ອງ ແລະ ເນື້ອເລື່ອງ<br>4.4 ຕົວລະຄອນ<br>4.5 ບົດສົນທະນາ<br>4.6 ສາກ<br>5 ວິທີຂຽນບົດລະຄອນ | -ເຂົ້າໃຈຄວາມໝາຍ, ປະເພດຂອງບົດລະຄອນ ແລະ ຕອບຄໍາຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈລັກສະນະ, ສ່ວນປະກອບຂອງບົດລະຄອນ, ວິທີຂຽນບົດລະຄອນ ແລະ ຕອບຄໍາຖາມທີ່ກ່ຽວ ຂ້ອງ.<br>-ຂຽນບົດລະຄອນໃດໜຶ່ງຖືກຕ້ອງຕາມວິທີ.<br>- ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບການແຕ່ງບົດລະຄອນ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມ ໝາຍຂອງບົດລະຄອນໄດ້.<br>-ບອກປະເພດ, ລັກສະນະຕ່າງໆ, ສ່ວນປະກອບ ແລະ ວິທີຂຽນບົດລະຄອນໄດ້.<br>-ຂຽນບົດລະຄອນໃດໜຶ່ງຖືກຕ້ອງຕາມວິທີໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄວ້າທີ່ສໍາຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 7 ການຂຽນເລື່ອງສັ້ນ** | 1. ຄວາມໝາຍຂອງເລື່ອງສັ້ນ<br>2. ລັກສະນະຂອງເລື່ອງສັ້ນ<br>3. ອົງປະກອບຂອງເລື່ອງສັ້ນ<br>3.1 ໂຄງເລື່ອງ ແລະ ເນື້ອເລື່ອງ<br>3.2 ຕົວລະຄອນ<br>3.3 ຄວາມສົມບູນ | -ເຂົ້າໃຈຄວາມໝາຍ, ລັກສະນະ, ອົງປະກອບຂອງເລື່ອງສັ້ນ ແລະ ຕອບຄໍາຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຂັ້ນຕອນ, ວິທີຂຽນບົດເລື່ອງສັ້ນ ແລະ ຕອບຄໍາຖາມທີ່ກ່ຽວຂ້ອງ<br>-ຂຽນບົດເລື່ອງສັ້ນຖືກຕ້ອງຕາມຂັ້ນຕອນແລະ ວິທີ.<br>-ຕອບບົດຝຶກຫັດໃນບົດຮຽນ | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງເລື່ອງສັ້ນໄດ້.<br>-ບອກລັກສະນະ, ອົງປະກອບ, ຂັ້ນຕອນ ແລະ ວິທີຂອງການຂຽນເລື່ອງສັ້ນໄດ້.<br>-ຂຽນເລື່ອງສັ້ນຖືກຕາມຂັ້ນຕອນ ແລະ ວິທີໄດ້.<br>-ສະແດງການເຮັດວຽກ |

| | | | |
|---|---|---|---|
| | 3.4 ຄຸນຄ່າ ແລະ ສາລະ<br>3.5 ບົດສົນທະນາ<br>4. ຂັ້ນຕອນການຂຽນເລື່ອງສັ້ນ<br>4.1 ເລືອກຫົວເລື່ອງທີ່ຈະຂຽນ<br>4.2 ຈຸດປະສົງ ແລະ ເປົ້າໝາຍ<br>4.3 ຊອກຫາຂໍ້ມູນ<br>4.4 ສ້າງໂຄງເລື່ອງ<br>5. ວິທີຂຽນບົດເລື່ອງສັ້ນ<br>5.1 ຈຸດສຳຄັນຂອງເລື່ອງ<br>5.2 ການສ້າງຕົວລະຄອນ<br>5.3 ການດຳເນີນເລື່ອງ<br>5.4 ການບັນຍາຍສາກ<br>5.5 ການຈົບເລື່ອງ<br>5.6 ການໃຊ້ພາສາ | ເພື່ອກວດ ກາ, ຕິດຕາມການຮຽນຮູ້ກ່ຽວກັບການຂຽນເລື່ອງສັ້ນ. | ເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຊີວິດຈິງໄດ້. |
| **ບົດທີ 8 ການຂຽນນິທານ** | 1. ຄວາມໝາຍຂອງນິທານ<br>2. ອົງປະກອບຂອງນິທານ<br>2.1 ແນວຄິດ ຫຼື ກະທູ້ຂອງເລື່ອງ<br>2.2 ໂຄງເລື່ອງ<br>2.3 ຕົວລະຄອນສຳຄັນ ແລະ ຕົວລະຄອນປະກອບ<br>2.4 ສາກ<br>2.5 ບົດສົນທະນາ<br>2.6 ຄະຕິເຕືອນໃຈ ຫຼື "ສາລະ" ທີ່ໄດ້ຈາກເລື່ອງ<br>3. ຂໍ້ຄວນຄຳນຶງການໃຊ້ | -ເຂົ້າໃຈຄວາມໝາຍ, ອົງປະກອບຂອງນິທານ, ຂໍ້ຄວນຄຳນຶງການໃຊ້ພາສາໃນນິທານ ແລະ ຕອບ ຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຂັ້ນຕອນ, ວິທີຂຽນນິທານ ແລະຕອບຄຳຖາມທີ່ກ່ຽວຂ້ອງ.<br>-ຂຽນນິທານຖືກຕ້ອງຕາມຂັ້ນຕອນ ແລະ ວິທີ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບການຂຽນນິທານ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງນິທານໄດ້.<br>-ບອກອົງປະກອບຂອງນິທານ, ຂໍ້ຄວນຄຳນຶງການໃຊ້ພາສາໃນນິທານໄດ້.<br>-ບອກຂັ້ນຕອນ ແລະ ວິທີໃນການຂຽນນິທານໄດ້.<br>-ຂຽນນິທານຕາມຂັ້ນຕອນ ແລະ ວິທີໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນໂດຍຜ່ານ |

| | | | |
|---|---|---|---|
| | ພາສາໃນນິທານ<br>4. ຂັ້ນຕອນໃນການຂຽນນິທານ<br>4.1 ກຳນົດຈຸດປະສົງ<br>4.2 ສ້າງຕົວລະຄອນ<br>4.3 ວາງໂຄງເລື່ອງ<br>4.4 ລົງມືຂຽນຖືກຕ້ອງຕາມຫຼັກພາສາ<br>4.5 ສະຫຼຸບຂໍ້ຄິດທີ່ໄດ້ຈາກນິທານ<br>5. ວິທີການຂຽນນິທານ | | ການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດ ທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 9 ນະວະນິຍາຍ** | 1. ຄວາມໝາຍຂອງນະວະນິຍາຍ<br>2. ລັກສະນະທົ່ວໄປຂອງນະວະນິຍາຍ<br>3. ປະເພດຂອງນະວະນິຍາຍ<br>3.1 ປະເພດແຕ່ງຕາມຄວາມຈິງ<br>3.2 ປະເພດແຕ່ງຕາມຈິນຕະນາ ການ<br>4. ອົງປະກອບຂອງນະວະນິຍາຍ<br>5. ການວິເຄາະນະວະນິຍາຍ<br>5.1 ເນື້ອເລື່ອງ ແລະ ສາລະ<br>5.2 ໂຄງເລື່ອງ ແລະ ເນື້ອເລື່ອງ<br>5.3 ວິທີແຕ່ງ<br>5.4 ຕົວລະຄອນ<br>5.5 ບັນຍາກາດ<br>5.6 ສາກ<br>5.7 ບົດສົນທະນາ ແລະ ສຳນວນ | -ເຂົ້າໃຈຄວາມໝາຍ, ລັກສະນະທົ່ວໄປ, ປະເພດຂອງນະວະນິຍາຍ ແລະ ຕອບ ຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈອົງປະກອບ, ການວິເຄາະນະວະນິຍາຍ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ຂຽນນະວະນິຍາຍຖືກຕ້ອງຕາມຂັ້ນຕອນ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບນະວະນິຍາຍ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງນະວະນິຍາຍໄດ້.<br>-ບອກລັກສະນະທົ່ວໄປ, ປະເພດ ແລະ ອົງປະກອບຂອງນະວະນິຍາຍໄດ້.<br>-ຂຽນນະວະນິຍາຍຕາມຂັ້ນຕອນໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດ ທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |

| | | | |
|---|---|---|---|
| | ພາສາ<br>5.8 ທັດສະນະຂອງຜູ້ຂຽນ | | |
| **ພາກທີ III ການຟັງ ແລະ ການເວົ້າ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ...** | **ນັກຮຽນມີຄວາມສາມາດ ...** | **ນັກຮຽນ...** |
| **ບົດທີ 10 ຈະລິຍະທຳ ແລະ ຄຸນນະທຳໃນການເວົ້າ** | 1. ຈະລິຍະທຳໃນການເວົ້າ<br>2. ຄຸນນະທຳໃນການເວົ້າ<br>3. ມາລະຍາດໃນການເວົ້າ<br>4. ຈະລິຍະທຳທີ່ສຳຄັນເປັນພິເສດຂອງຜູ້ເວົ້າ<br>5. ອົງປະກອບຂອງການເວົ້າ (ຜູ້ເວົ້າ, ຜູ້ຟັງ, ໂອກາດ ແລະ ເນື້ອໃນ)<br>6. ປະເພດຂອງການເວົ້າ<br>6.1 ການເວົ້າແບບບໍ່ກຽມຕົວ<br>6.2 ການເວົ້າແບບອ່ານຈາກຕົ້ນເລື່ອງ<br>6.3 ການເວົ້າແບບຈື່ຈຳ<br>6.4 ການເວົ້າແບບມີການບັນທຶກ<br>7. ການກຽມເລື່ອງທີ່ຈະເວົ້າ<br>8. ກຽມການໃຊ້ພາສາ | -ເຂົ້າໃຈຈະລິຍະທຳ, ຄຸນນະທຳ, ມາ ລະຍາດ, ຈະລິຍະທຳທີ່ສຳຄັນເປັນພິເສດຂອງຜູ້ເວົ້າ ແລະ ຕອບຄຳຖາມທີ່ກ່ຽວ ຂ້ອງ.<br>-ເຂົ້າໃຈອົງປະກອບ, ປະເພດຂອງການເວົ້າ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈການກຽມເລື່ອງທີ່ຈະເວົ້າ, ກຽມການໃຊ້ພາສາ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ກຽມເລື່ອງທີ່ຈະເວົ້າ ໂດຍປະຕິບັດຕາມຂັ້ນຕອນຕ່າງໆຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບຈະລິຍະທຳ ແລະ ຄຸນນະທຳໃນການເວົ້າ. | -ອະທິບາຍຄວາມໝາຍຈະລິຍະທຳ ແລະ ຄຸນນະທຳໃນການເວົ້າໄດ້.<br>-ບອກມາລະຍາດ ແລະ ຈະລິຍະທຳທີ່ສຳຄັນເປັນພິ ເສດຂອງຜູ້ເວົ້າໄດ້.<br>-ບອກອົງປະກອບ ແລະ ປະເພດຂອງການເວົ້າໄດ້.<br>-ກຽມເລື່ອງກ່ອນເວົ້າ ແລະ ເວົ້າຢ່າງສະຫງ່າຜ່າເຜີຍເວົ້າໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 11 ວາທະສິນ** | 1. ການໃຊ້ພາສາ<br>1.1ອອກສຽງໃຫ້ຖືກຕ້ອງ ແລະຊັດເຈນ<br>1.2ເວົ້າໃຫ້ຖືກຕ້ອງຕາມຫຼັກພາສາລາວ<br>1.3ໃຊ້ຄຳ ຫຼື ປະໂຫຍກທີ່ສັ້ນ, ກະທັດຮັດແຕ່ໄດ້ຄວາມ ໝາຍ<br>1.4ໃຊ້ສັບໃຫ້ກົງກັບຄວາມ | -ເຂົ້າໃຈການໃຊ້ພາສາ, ຈັງຫວະການ ເວົ້າ, ການໃຊ້ສຽງ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈລີລາການເວົ້າ, ບຸກຄະລິກກະພາບຂອງຜູ້ເວົ້າ, ການສ້າງຄວາມເຊື່ອໝັ້ນຕົນເອງໃນການເວົ້າ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ. | -ບອກການໃຊ້ພາສາ, ຈັງຫວະ ແລະ ການໃຊ້ສຽງໃນເວລາເວົ້າໄດ້.<br>-ບອກລີລາ, ບຸກຄະລິກກະພາບ ແລະ ສ້າງຄວາມເຊື່ອໝັ້ນຕົນເອງໃນເວລາເວົ້າໄດ້.<br>-ເວົ້າຫົວຂໍ້ໃດໜຶ່ງຖືກຕ້ອງຕາມຈັງຫວະ, |

| | | | |
|---|---|---|---|
| | ໝາຍ<br>1.5ໃຊ້ຄຳສັບທີ່ເຂົ້າໃຈງ່າຍ<br>1.6ໃຊ້ພາສາທີ່ເໝາະສົມໃນການເວົ້າ<br>2. ຈັງຫວະການເວົ້າ<br>3. ການໃຊ້ສຽງ<br>4. ລີລາການເວົ້າ<br>5. ບຸກຄະລິກກະພາບຂອງຜູ້ເວົ້າ<br>6. ການສ້າງຄວາມເຊື່ອໝັ້ນຕົນເອງໃນການເວົ້າ | -ເວົ້າຫົວຂໍ້ໃດໜຶ່ງ ຖືກຕ້ອງຕາມຈັງ ຫວະ, ລີລາ ແລະ ມີຄວາມເຊື່ອ ໝັ້ນຕົນເອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບວາທະສິນ. | ລີລາ ແລະ ມີຄວາມເຊື່ອໝັ້ນຕົນເອງໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ພາກຮຽນທີ** II | | | |
| **ບົດທີ 12 ການສຳພາດ** | 1. ຄວາມໝາຍຂອງການສຳພາດ<br>2. ຮູບແບບຂອງການສຳພາດ<br>3. ຄຸນສົມບັດຂອງຜູ້ສຳພາດ<br>4. ຄຸນສົມບັດຂອງຜູ້ໃຫ້ສຳພາດ<br>5. ການກຽມຕົວສຳພາດ<br>6. ການສຳພາດເພື່ອສະໝັກເຂົ້າເຮັດວຽກ<br>6.1 ຜູ້ສະໝັກ<br>6.2 ຜູ້ສຳພາດ | -ເຂົ້າໃຈຄວາມໝາຍ, ຮູບແບບຂອງການສຳພາດ ແລະຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຄຸນສົມບັດຂອງຜູ້ສຳພາດ, ຜູ້ໃຫ້ສຳພາດ, ການກຽມຕົວສຳພາດ, ການສຳພາດເພື່ອສະໝັກເຂົ້າເຮັດວຽກ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ສຳພາດ ແລະ ໃຫ້ສຳພາດຖືກຕາມກະຕິກາຂອງການສຳພາດ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ, ຕິດຕາມການຮຽນຮູ້ກ່ຽວກັບການສຳພາດ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍແລະ ຮູບແບບຂອງການສຳພາດໄດ້.<br>-ບອກຄຸນສົມບັດຂອງຜູ້ສຳພາດ, ຜູ້ໃຫ້ສຳພາດ,ການກຽມຕົວສຳພາດແລະ ການສຳພາດໄດ້.<br>-ບອກການກຽມຕົວສຳພາດ ແລະ ການສຳພາດເພື່ອສະໝັກເຂົ້າເຮັດວຽກໄດ້.<br>-ສຳພາດ ແລະ ໃຫ້ສຳພາດໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດ ທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງ |

| | | | |
|---|---|---|---|
| | | | ການຕັດສິນໃຈໃນຊີວິດຈິງໄດ້. |
| **ພາກທີ IV ຫຼັກພາສາລາວ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ…** | **ນັກຮຽນມີຄວາມສາມາດ …** | **ນັກຮຽນ…** |
| **ບົດທີ 13 ການສຶກສາຄຳສັບ** | 1. ຄວາມໝາຍ ແລະ ຄວາມສຳຄັນຂອງການສຶກສາຄຳ<br>2. ຄຳ ແລະ ຄວາມສຳນຶກ<br>3. ຄວາມໝາຍຂອງຄຳ<br>3.1ຄວາມໝາຍຂອງຄຳແມ່ນຫຍັງ ?<br>3.2 ຄຳທີ່ບອກຄວາມໝາຍໄດ້ໂດຍກົງ<br>3.3ຄຳທີ່ບອກຄວາມໝາຍໄດ້ ໂດຍທາງອ້ອມ<br>3.4ຄຳທີ່ມີຄວາມໝາຍແຈ້ງ , ຄວາມໝາຍນາມທຳ, ຄວາມໝາຍປຽບທຽບ | -ເຂົ້າໃຈຄວາມໝາຍ, ຄວາມສຳຄັນຂອງການສຶກສາຄຳ, ຄຳກັບຄວາມສຳນຶກ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈຊະນິດຄວາມໝາຍຂອງຄຳ ແລະຕອບຄຳຖາມທີ່ກ່ຽວຂ້ອງ.<br>- ບອກຊະນິດຄວາມໝາຍຂອງຄຳຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບການສຶກສາຄຳສັບ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍ, ຄວາມສຳຄັນຂອງການສຶກສາຄຳສັບໄດ້.<br>-ບອກຄວາມແຕກຕ່າງລະຫວ່າງຄຳ, ພາສາ ແລະ ຄວາມສຳນຶກໄດ້.<br>-ບອກຊະນິດຄວາມໝາຍຕ່າງໆຂອງຄຳໄດ້.<br>-ສະແດງອອກເຖິງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດ ທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 14 ການແປງອັກສອນ ແລະ ແປງຄຳ** | 1. ຄວາມໝາຍຂອງການແປງອັກສອນ<br>2. ວິທີແປງອັກສອນ<br>2.1 ການແປງສະຫຼະ<br>2.2 ການແປງພະຍັນຊະນະ<br>2.3 ການແປງສຽງ<br>2.4 ການແປງຄຳ<br>3. ຫຼັກການພິເສດ | -ເຂົ້າໃຈຄວາມໝາຍ, ວິທີແປງອັກສອນ, ຫຼັກການພິເສດໃນການແປງອັກສອນບາລີ-ສັນສະກິດ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ບອກຄຳທີ່ແປງມາຈາກພາສາບາລີ-ສັນສະກິດ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ, ຕິດຕາມການຮຽນຮູ້ກ່ຽວກັບການແປງອັກສອນ ແລະ ແປງຄຳ. | -ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງການແປງອັກສອນໄດ້.<br>-ບອກວິທີແປງອັກສອນ, ແປງຄຳ ແລະ ຫຼັກການພິເສດໃນການແປງອັກສອນຈາກບາລີ-ສັນສະກິດມາເປັນຄຳລາວໄດ້.<br>-ບອກຄຳທີ່ແປງມາຈາກພາສາບາລີ-ສັນສະກິດໄດ້. |

| | | | |
|---|---|---|---|
| | | | -ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດ ທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 15 ການສ້າງຄຳໃນພາສາລາວ** | ການສ້າງຄຳໃໝ່ດ້ວຍການປະສົມຄຳ<br>1. ການຮັບຄຳຈາກພາສາອື່ນ<br>1.1 ຄາທີ່ຮັບຈາກພາສາຈີນ<br>1.2ຄຳທີ່ຮັບຈາກພາສາມອນ<br>1.3 ຄຳທີ່ຮັບຈາກພາສາປາລີ-ສັນສະກິດ<br>1.4 ຄຳທີ່ຮັບຈາກພາສາຂະແມ<br>1.5 ຄຳທີ່ຮັບຈາກພາສາລາແຕັງ<br>1.6ຄຳທີ່ ຮັບ ຈາກພາສາຝຣັ່ງ<br>1.7 ຄຳທີ່ຮັບຈາກພາສາອັງກິດ<br>2 ການຈັດກຸ່ມຄຳຕ່າງໆ<br>2.1ການຈັດຄຳຕາມຍຸກການສ້າງຄຳນັ້ນຂຶ້ນ<br>2.2ການຈັດຄຳຕາມການໃຊ້ | -ເຂົ້າໃຈການສ້າງຄຳໃໝ່ດ້ວຍການປະສົມຄຳ , ການຮັບຄຳມາຈາກພາສາອື່ນ, ການຈັດກຸ່ມຄຳຕ່າງໆ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>-ບອກຄຳທີ່ຢືມມາຈາກພາສາອື່ນຢ່າງຖືກຕ້ອງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ, ຕິດຕາມການຮຽນຮູ້ກ່ຽວກັບການສ້າງຄຳໃນພາສາລາວ. | -ບອກວິທີການສ້າງຄຳ, ການຮັບເອົາຄຳຈາກພາສາອື່ນ ແລະ ການຈັດກຸ່ມຄຳຕ່າງໆໄດ້.<br>-ບອກຄຳສັບທີ່ຢືມມາຈາກພາສາອື່ນໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຊີວິຕົວໄດ້. |
| **ບົດທີ 16 ຊະນິດຂອງຄຳ** | 1. ຄຳເຄົ້າ<br>1.1 ຄວາມໝາຍຂອງຄຳເຄົ້າ<br>1.2 ລັກສະນະຂອງຄຳເຄົ້າ | - ເຂົ້າໃຈຄວາມໝາຍ, ລັກສະນະ, ຮູບແບບຂອງຄຳເຄົ້າ, ຄຳປະສົມ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ. | - ອະທິບາຍຄວາມໝາຍ, ລັກສະນະ, ຮູບແບບຂອງຄຳເຄົ້າ ແລະ ຄຳປະສົມໄດ້. |

| | | | |
|---|---|---|---|
| | 2. ຄຳປະສົມ<br>2.1ຄວາມໝາຍຂອງຄຳປະສົມ<br>2.2 ຮູບແບບຄຳປະສົມ<br>3. ຄຳສະໜາດ<br>4. ຄຳສົມທົບ<br>4.1 ສຳລັບຄຳທີ່ມີສະຫຼະໜ້າ ເປັນ xະ ຫຼື xາ<br>4.2 ສຳລັບຄຳທີ່ມີສະຫຼະໜ້າ ເປັນ xິ ຫຼື xີ<br>4.3 ສຳລັບຄຳທີ່ມີສະຫຼະໜ້າ ເປັນ xຸ ຫຼື xູ | - ບອກຄວາມໝາຍ, ຮູບແບບຂອງ ຄຳສະໜາດ, ຄຳສົມທົບ ແລະ ຕອບ ຄຳຖາມທີ່ກ່ຽວຂ້ອງ.<br>- ຈຳແນກຄຳສະໜາດກັບຄຳສົມທົບຖືກຕ້ອງ.<br>- ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບຊະນິດຂອງຄຳ. | - ບອກລັກສະນະຂອງຄຳສະໜາດ ແລະ ຄຳສົມທົບໄດ້.<br>- ຈຳແນກຄຳສະໜາດກັບ ຄຳສົມທົບໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 17 ກາລະໃນພາສາລາວ** | 1. ກາລະປັດຈຸບັນ<br>1.1 ກາລະປັດຈຸບັນແທ້<br>1.2 ກາລະປັດຈຸບັນໃກ້ອະດີດ<br>1.3 ກາລະປັດຈຸບັນໃກ້ອະນາຄົດ<br>2. ກາລະອະດີດ<br>3. ກາລະອະນາຄົດ<br>3.1 ກາລະອະນາຄົດແທ້<br>3.2 ກາລະອະນາຄົດໃກ້ອະດີດ<br>4. ກາລະບໍ່ມີກຳນົດ | - ເຂົ້າໃຈຄວາມໝາຍຂອງກາລະ, ກາລະປັດຈຸບັນ, ກາລະອະດີດ, ກາ ລະອະນາຄົດ, ກາລະບໍ່ມີກຳນົດ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>- ແຕ່ງປະໂຫຍກຕາມກາລະຕ່າງໆຖືກຕ້ອງ.<br>- ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບກາລະໃນພາສາລາວ. | - ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງກາລະຕ່າງໆໃນພາສາລາວໄດ້.<br>- ແຕ່ງປະໂຫຍກຕາມກາລະຕ່າງໆໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ບົດທີ 18 ຄຳລາຊາສັບ** | 1. ຄວາມໝາຍຂອງຄຳລາຊາສັບ<br>2. ຄວາມສຳຄັນຂອງຄຳລາຊາສັບ | - ເຂົ້າໃຈຄວາມໝາຍຄວາມສຳຄັນ, ຜົນປະໂຫຍດຂອງການຮຽນຄຳລາຊາສັບ ແລະ ຕອບຄຳຖາມທີ່ | - ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຄວາມສຳຄັນ ແລະ ຜົນປະໂຫຍດ |

| | | | |
|---|---|---|---|
| | 3. ຜົນປະໂຫຍດຂອງການຮຽນຄຳລາຊາສັບ<br>3.1 ຜົນປະໂຫຍດທາງກົງ<br>3.2 ຜົນປະໂຫຍດທາງອ້ອມ<br>4. ການໃຊ້ຄຳສັບສຳລັບເຈົ້າຊີວິດ<br>4.1 ໝວດເຄື່ອງອຸປະໂພກ ແລະ ບໍລິໂພກ<br>4.2 ເຄື່ອງອຸປະໂພກທົ່ວໄປ ແລະ ຄຳນາມສາມັນ<br>4.3 ໝວດອະໄວຍະວະ<br>4.4 ໝວດເຄືອຍາດ<br>4.5 ໝວດຄາກິລິຍາສາມັນ<br>5. ການໃຊ້ຄຳລາຊາສັບສຳລັບພະສົງ | ກ່ຽວຂ້ອງ.<br>- ເຂົ້າໃຈລາຊາສັບທີ່ໃຊ້ໃນຂອບເຂດຕ່າງໆ, ລາຊາສັບທີ່ພະສົງໃຊ້ ແລະ ຕອບຄຳຖາມທີ່ກ່ຽວຂ້ອງ.<br>- ເຂົ້າໃຈລາຊາສັບທີ່ໃຊ້ໃນຂົງເຂດຕ່າງໆ.<br>- ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດ ກາ, ຕິດຕາມການຮຽນຮູ້ກ່ຽວກັບຄຳລາຊາສັບ. | ຂອງຄຳລາຊາສັບໄດ້.<br>- ບອກຄຳລາຊາສັບທີ່ໃຊ້ກ່ຽວກັບລາຊາ ແລະ ພະສົງໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດ ທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |
| **ພາກທີ V ຫຼັກການແຕ່ງກອນ ແລະ ອັກສອນທຳ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ…** | **ນັກຮຽນມີຄວາມສາມາດ …** | **ນັກຮຽນ…** |
| **ບົດທີ 19 ຫຼັກການແຕ່ງກອນ** | 1. ສັນທະລັກສະນະ<br>2. ພາກສ່ວນຕ່າງໆຂອງກາບກອນ<br>2.1 ຄຳ<br>2.2 ຕອນ<br>2.3 ວັກ<br>2.4 ເພື້ອງ<br>2.5 ບາດ<br>2.6 ບົດ<br>2.7 ຄຳບຸບພະບົດ<br>3. ຄຳປະຈຳບ່ອນ | - ເຂົ້າໃຈຄວາມໝາຍສັນທະລັກສະ ນະ, ພາກສ່ວນຕ່າງໆຂອງກາບກອນ ,ຄຳປະຈຳບ່ອນ ແລະ ຕອບ ຄຳຖາມທີ່ກ່ຽວຂ້ອງ.<br>- ແຕ່ງກອນຖືກຕ້ອງຕາມຮ່າງຫຼັກຄຳປະຈຳບ່ອນ.<br>- ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບຫຼັກການແຕ່ງກອນ. | - ອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍຂອງສັນທະລັກສະນະໄດ້.<br>- ບອກພາກສ່ວນຕ່າງໆ ແລະ ຄຳປະຈຳບ່ອນໃນກາບ ກອນໄດ້.<br>- ແຕ່ງກອນຕາມຮ່າງຫຼັກຄຳປະຈຳບ່ອນໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດ ທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳ |

| | | | |
|---|---|---|---|
| | | | ຄັນຂອງການຕັດ ສິນໃຈໃນຊີວິດຈິງໄດ້. |
| **ບົດທີ 20 ອັກສອນທຳ** | 1. ປະກອບຄຳທີ່ໃຊ້ (ກ) ສະກົດ<br>2. ປະກອບຄຳທີ່ມີ "ງ" ສະກົດ<br>3. ປະກອບຄຳທີ່ໃຊ້ "ນ ຫຼື ຣ" ສະກົດ | - ເຂົ້າໃຈຫຼັກການປະກອບຄຳທີ່ໃຊ້ (ກ) ປະກອບຄຳທີ່ມີ ,ສະກົດ ສະກົດ "ງ"<br>- ແລະ ປະກອບຄຳທີ່ໃຊ້ ສະກົດ ແລະ "ນ ຫຼື ຣ" .ຕອບຄຳຖາມທີ່ກ່ຽວຂ້ອງ<br>- ອ່ານ ແລະ ຂຽນອັກສອນທຳບາງ ຄຳຖືກຕ້ອງ.<br>- ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາ, ຕິດຕາມການຮຽນຮູ້ກ່ຽວກັບອັກສອນທຳ. | - ບອກຫຼັກການປະກອບຄຳທີ່ໃຊ້ ນ ) ,(ງ) ,(ກ) ສະກົດໄດ້ໂດຍ (ຫຼື ຣ .ພື້ນຖານໄດ້<br>- ອ່ານ ແລະ ຂຽນອັກສອນທຳບາງຄຳທີ່ງ່າຍໆໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດທີ່ສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຊີວິດຈິງໄດ້. |

ຊັ້ນມັດທະຍົມສຶກສາ ປີທີ 7.

| CONTENT<br>ຫົວຂໍ້ບົດ | CONTENT STANDARD<br>ມາດຕະຖານດ້ານເນື້ອໃນ | PERFORMANCE STANDARD<br>ມາດຕະຖານດ້ານການປະຕິບັດ | LEARNING COMPETENCIES<br>ສະມັດຖະພາບດ້ານການຮຽນ |
|---|---|---|---|
| ພາກຮຽນທີ I | | | |
| ພາກທີ I ການອ່ານ | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ…** | **ນັກຮຽນມີຄວາມສາມາດ ...** | **ນັກຮຽນ...** |
| **ບົດທີ 1 ການອ່ານຈັບໃຈຄວາມສຳຄັນ ແລະ ການອ່ານຫຍໍ້ຄວາມ** | 1. ການອ່ານຈັບໃຈຄວາມສຳຄັນ<br>1.1ຄວາມໝາຍການອ່ານຈັບໃຈຄວາມສຳຄັນ<br>1.2ວິທີການອ່ານຈັບໃຈຄວາມສຳຄັນ<br>1.3ແນວທາງໃນການອ່ານຈັບໃຈຄວາມສຳຄັນ<br>1.4ຂັ້ນຕອນໃນການອ່ານຈັບໃຈຄວາມສຳຄັນ<br>1.5ຫຼັກການອ່ານຈັບໃຈຄວາມສຳຄັນ<br>1.6ປະເພດການອ່ານຈັບໃຈຄວາມສຳຄັນ<br>2. ການອ່ານຫຍໍ້ຄວາມ<br>2.1 ຄວາມໝາຍການອ່ານຫຍໍ້ຄວາມ<br>2.2 ຈຸດປະສົງຂອງການອ່ານຫຍໍ້ຄວາມ | -ເຂົ້າໃຈຄວາມໝາຍແນວ ,ວິທີ , ທາງຫຼັກການ ແລະ ,ຂັ້ນຕອນ, ປະ ເພດຂອງການອ່ານຈັບໃຈຄວາມສຳຄັນແລ້ວຕອບຄຳຖາມທີ່ກ່ຽວ ຂ້ອງ.<br>-ເຂົ້າໃຈຄວາມໝາຍ ແລະ ຈຸດປະ ສົງຂອງການອ່ານຫຍໍ້ຄວາມແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ອ່ານບົດເລື່ອງ ຫຼື ຂໍ້ຄວາມໃດໜຶ່ງ ພ້ອມຂຽນຫຍໍ້ຄວາມ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການອ່ານຈັບໃຈຄວາມສຳຄັນ ແລະ ການອ່ານຫຍໍ້ຄວາມ. | -ອະທິບາຍຄວາມໝາຍ , ຂັ້ນ ,ແນວ ທາງ ,ວິທີ ຫຼັກການ ແລະ ,ຕອນປະເພດຂອງການອ່ານ .ຈັບໃຈຄວາມສຳຄັນໄດ້<br>-ອະທິບາຍຄວາມໝາຍ ແລະ ຈຸດ ປະສົງຂອງການອ່ານຫຍໍ້ຄວາມໄດ້.<br>-ຈັບໃຈສຳຄັນຈາກການອ່ານ ແລະ ອ່ານຫຍໍ້ຄວາມໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງ ສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |

| | | | |
|---|---|---|---|
| **ບົດທີ 2 ການອ່ານເພື່ອພັດທະນາຄວາມຮູ້ຂອງຕົນເອງ** | 1. ຄວາມໝາຍຂອງການອ່ານເພື່ອພັດທະນາຄວາມຮູ້ຕົນເອງ<br>2. ຄວາມຮູ້ທີ່ໄດ້ຈາກການອ່ານ<br>2.1 ຄວາມຮູ້ກ່ຽວກັບເຫດການຊີວິດປະຈຳວັນ<br>2.2 ຄວາມຮູ້ເລື່ອງສຸຂານາໄມຄວາມຮູ້ທົ່ວໄປ | -ເຂົ້າໃຈຄວາມໝາຍຂອງການອ່ານເພື່ອພັດທະນາຄວາມຮູ້ຕົນເອງ ແລະ ຄວາມຮູ້ທີ່ໄດ້ຈາກການອ່ານ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ອ່ານຂໍ້ຄວາມ ຫຼື ບົດກອນໃດໜຶ່ງ ແລະສັງລວມຄວາມຮູ້ທີ່ໄດ້ຈາກການອ່ານ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການອ່ານເພື່ອພັດທະນາຄວາມຮູ້ຕົນເອງ. | -ອະທິບາຍຄວາມໝາຍຂອງການອ່ານເພື່ອພັດທະນາຄວາມຮູ້ຕົນເອງ ແລະ ຄວາມຮູ້ທີ່ໄດ້ຈາກການອ່ານໄດ້.<br>-ອ່ານຂໍ້ຄວາມ ຫຼື ບົດກອນໃດໜຶ່ງ ແລ້ວສັງລວມຄວາມຮູ້ຈາກການອ່ານໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ<br>-ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້ . |
| **ພາກທີ** II **ການຂຽນ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ…** | **ນັກຮຽນມີຄວາມສາມາດ …** | **ນັກຮຽນ…** |
| **ບົດທີ 3 ການຂຽນບົດວິເຄາະ** | 1. ຄວາມໝາຍຂອງບົດວິເຄາະ<br>2. ປະເພດບົດວິເຄາະ<br>3. ບາດກ້າວຕ່າງໆໃນການແຕ່ງບົດວິເຄາະຕົວລະຄອນ<br>4. ໂຄງຮ່າງໃນການແຕ່ງບົດວິເຄາະຕົວລະຄອນ | -ເຂົ້າໃຈຄວາມໝາຍ, ປະເພດບົດວິເຄາະ ແລະ ບາດກ້າວຕ່າງໆໃນການແຕ່ງບົດວິເຄາະຕົວລະຄອນ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ຂຽນບົດວິເຄາະຕົວລະຄອນຖືກຕາມໂຄງຮ່າງ.<br>-ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການຂຽນບົດວິເຄາະ. | -ອະທິບາຍຄວາມໝາຍຂອງບົດວິເຄາະໄດ້.<br>-ບອກປະເພດ ແລະບາດກ້າວຕ່າງໆໃນການແຕ່ງບົດວິເຄາະຕົວລະຄອນໄດ້.<br>-ແຕ່ງບົດວິເຄາະຕົວລະຄອນຕາມໂຄງຮ່າງໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນໂດຍຜ່ານການເຮັດກິດຈະກຳຂອງກຸ່ມ |

| | | | |
|---|---|---|---|
| | | | ໄດ້.<br>-ຈັດແນວຄວາມຄິດຂອງ ຕົນ ແລະ ພັດທະນາທັກ ສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງ ການຕັດ ສິນໃຈໃນຕົວຈິງ ໄດ້. |
| **ບົດທີ 4 ການຂຽນ ບົດຄວາມ** | 1. ຄວາມໝາຍຂອງບົດ ຄວາມ<br>2. ລັກສະນະຂອງບົດຄວາມ<br>3. ປະເພດຂອງບົດຄວາມ<br>3.1 ບົດຄວາມບັນຍາຍ<br>3.2 ບົດຄວາມສະແດງ ຄວາມຄິດເຫັນ<br>3.3 ບົດຄວາມວິເຄາະ<br>3.4 ບົດຄວາມວິຈານ<br>3.5 ບົດຄວາມສາລະ ຄະດີ<br>3.6 ບົດຄວາມວິຊາການ<br>4. ວິທີຂຽນບົດຄວາມ<br>4.1 ການເລືອກຫົວ ເລື່ອງທີ່ຈະຂຽນ<br>4.2 ຕັ້ງຈຸດປະສົງໃນ ການຂຽນ<br>4.3 ການສ້າງໂຄງເລື່ອງ | -ເຂົ້າໃຈຄວາມໝາຍ, ລັກສະນະ ແລະ ປະເພດຂອງບົດຄວາມ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>-ເຂົ້າໃຈວິທີຂຽນບົດຄວາມ ຖືກຕ້ອງ.<br>-ຂຽນບົດຄວາມໃນຫົວຂໍ້ໃດໜຶ່ງ ຖືກຕ້ອງ ຕາມຂັ້ນຕອນ.<br>-ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດ ກາ ແລະ ຕິດຕາມ ການຮຽນຮູ້ກ່ຽວກັບການຂຽນ ບົດວິເຄາະ. | -ອະທິບາຍຄວາມ ໝາຍ, ລັກສະນະ ແລະ ປະເພດຂອງບົດຄວາມ ໄດ້.<br>-ບອກວິທີຂຽນບົດຄວາມ ໄດ້.<br>-ຂຽນບົດຄວາມຕາມຂັ້ນ ຕອນໄດ້.<br>-ສະແດງການເຮັດວຽກ ເປັນກຸ່ມ ແລະ ມີແນວ ຄິດສ້າງສັນ ໂດຍຜ່ານ ການເຮັດກິດຈະກຳຂອງ ກຸ່ມໄດ້.<br>-ຈັດແນວຄວາມຄິດຂອງ ຕົນ ແລະ ພັດທະນາທັກ ສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງ ການຕັດ ສິນໃຈໃນຕົວຈິງ ໄດ້. |
| **ບົດທີ 5 ການຂຽນ ບົດລາຍງານວິຊາ ການ** | 1. ຄວາມໝາຍ ແລະ ຄວາມສຳຄັນຂອງບົດ ລາຍງານວິຊາການ<br>1.1 ຄວາມໝາຍຂອງ ບົດລາຍງານວິຊາ ການ<br>1.2 ຄວາມສຳຄັນຂອງ ການຂຽນບົດລາຍ ງານວິຊາການ | - ເຂົ້າໃຈຄວາມໝາຍ ແລະ ຄວາມສຳຄັນຂອງບົດລາຍງານ ວິຊາການ ແລ້ວຕອບຄຳຖາມ ທີ່ກ່ຽວຂ້ອງ.<br>- ເຂົ້າໃຈສ່ວນປະກອບ, ຂັ້ນ ຕອນ ແລະ ລັກສະນະຂອງ ບົດລາຍງານວິຊາການທີ່ດີ ແລ້ວຕອບຄຳຖາມທີ່ ກ່ຽວຂ້ອງ. | -ອະທິບາຍຄວາມ ໝາຍ ແລະ ຄວາມສຳຄັນ ຂອງບົດລາຍງານວິຊາ ການໄດ້.<br>-ບອກພາກສ່ວນປະກອບ , ຂັ້ນຕອນແລະ ລັກສະນະຂອງການຂຽນ ບົດລາຍງານວິຊາການທີ່ດີ ໄດ້. |

| | | | |
|---|---|---|---|
| | 2. ສ່ວນປະກອບຂອງບົດລາຍງານວິຊາການ<br>2.1 ພາກສ່ວນນໍາ ຫຼື ສ່ວນປະກອບຕອນຕົ້ນ<br>2.2 ພາກສ່ວນເນື້ອເລື່ອງ<br>2.3 ພາກສ່ວນທ້າຍ<br>3. ຂັ້ນຕອນຂອງການຂຽນບົດລາຍງານວິຊາການ<br>3.1 ຂັ້ນກະກຽມ<br>3.2 ຂັ້ນລົງມືຂຽນ<br>4. ລັກສະນະຂອງບົດລາຍງານວິຊາການທີ່ດີ<br>4.1 ການນໍາຫຼັກການ ຫຼື ທິດສະດີມາໃຊ້ຢ່າງເໝາະສົມ<br>4.2 ການສະແດງຄວາມຄິດລິເລີ່ມສ້າງສັນຢ່າງເໝາະສົມ<br>4.3 ຄວາມສົມບູນ ແລະ ຄວາມຖືກຕ້ອງຂອງເນື້ອໃນ<br>4.4 ຄວາມຊັດເຈນຂອງການຂຽນລາຍງານ<br>4.5 ຄວາມເໝາະສົມຂອງຮູບແບບການລາຍງານ | - ຂຽນບົດລາຍງານວິຊາການຖືກຕ້ອງຕາມຂັ້ນຕອນ ແລະ ລັກສະນະຂອງບົດລາຍງານວິຊາການທີ່ດີ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການຂຽນບົດລາຍງານວິຊາການ. | -ຂຽນບົດລາຍງານວິຊາການໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງ ສັນ ໂດຍຜ່ານການເຮັດກິດຈະກໍາຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສໍາຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ບົດທີ 6 ການຂຽນໂຄງ ການ** | 1. ຄວາມໝາຍຂອງໂຄງການ<br>2. ໂຄງປະກອບສ້າງຂອງໂຄງການ<br>3. ຂັ້ນຕອນການຂຽນ | - ເຂົ້າໃຈຄວາມໝາຍ ແລະ ໂຄງປະກອບສ້າງ ແລະ ຂັ້ນຕອນຂອງການຂຽນໂຄງ ການ ແລ້ວຕອບຄໍາຖາມທີ່ | -ອະທິບາຍຄວາມໝາຍ, ໂຄງປະກອບສ້າງ ແລະ ຂັ້ນຕອນຂອງການຂຽນໂຄງການໄດ້. |

| | | | |
|---|---|---|---|
| | ໂຄງການ<br>3.1 ຊື່ແຜນງານ<br>3.2 ຊື່ໂຄງການ<br>3.3 ຫຼັກການ ແລະ ເຫດຜົນ<br>3.4 ຈຸດປະສົງ<br>3.5 ເປົ້າໝາຍ<br>3.6 ວິທີດຳເນີນການ<br>3.7 ໄລຍະເວລາດຳເນີນໂຄງການ<br>3.8 ງົບປະມານ<br>3.9 ເຈົ້າຂອງໂຄງການ ຫຼື ຜູ້ຮັບ ຜິດຊອບໂຄງການ<br>3.10 ໜ່ວຍງານທີ່ໃຫ້ການສະ ໜັບສະໜູນ<br>3.11 ການປະເມີນໂຄງການ<br>3.12 ຜົນປະໂຍດທີ່ຄາດວ່າຈະໄດ້ຮັບ<br>3 ລັກສະນະຂອງໂຄງການ | ກ່ຽວຂ້ອງ.<br>- ເຂົ້າໃຈລັກສະນະຂອງໂຄງການ ແລ້ວຕອບຄຳຖາມ.<br>- ຂຽນໂຄງການໃດໜຶ່ງຖືກຕ້ອງຕາມໂຄງຮ່າງທີ່ກຳນົດ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການຂຽນບົດລາຍງານວິຊາການ. | -ບອກລັກສະນະຂອງໂຄງການໄດ້.<br>-ຂຽນໂຄງການໃດໜຶ່ງຖືກຕາມຮ່າງທີ່ກຳນົດໄດ້.<br>-ສະແດງການເຮັດວຽກເປັນກຸ່ມ ແລະມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>-ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ພາກທີ IIIການຟັງ ແລະ ການເວົ້າ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ…** | **ນັກຮຽນມີຄວາມສາມາດ ...** | **ນັກຮຽນ...** |
| **ບົດທີ 7 ການອະທິບາຍ** | 1. ການອະທິບາຍ<br>1.1 ຄວາມໝາຍຂອງການອະທິບາຍ<br>1.2 ຄວາມສຳຄັນຂອງການອະທິບາຍ<br>1.3 ຈຸດປະສົງຂອງການອະທິບາຍ<br>1.4 ອົງປະກອບຂອງການອະທິບາຍ<br>2. ປະເພດການອະທິບາຍ | - ເຂົ້າໃຈຄວາມໝາຍ , ຄວາມສຳຄັນ, ຈຸດປະສົງ ແລະ ອົງປະກອບຂອງການອະທິບາຍແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>- ເຂົ້າໃຈປະເພດ, ການຈັດການອະທິ ບາຍ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ<br>- ບອກໜ້າທີ່ຜູ້ຮັບຜິດຊອບ, ຜູ້ອະທິ ບາຍ ແລະ ຮູບແບບ | - ອະທິບາຍຄວາມໝາຍ, ຄວາມສຳຄັນ, ຈຸດປະສົງ ແລະ ອົງປະກອບຂອງການອະທິບາຍໄດ້.<br>- ບອກປະເພດ ແລະ ການຈັດອະທິບາຍໄດ້.<br>- ບອກໜ້າທີ່ ຜູ້ຮັບຜິດຊອບ, ຜູ້ອະທິບາຍ ແລະ ຮູບ |

| | | | |
|---|---|---|---|
| | 2.1 ການອະພິປາຍສະເພາະໃນກຸ່ມຂອງຕົນ<br>2.2 ການອະພິປາຍໃນທີ່ຊຸມນຸມ<br>3. ການຈັດການອະພິປາຍ<br>3.1 ການເລືອກບັນຫາ<br>3.2 ການກະກຽມການອະພິປາຍ<br>4. ໜ້າທີ່ຜູ້ຮັບຜິດຊອບການອະພິ ປາຍ<br>5. ໜ້າທີ່ຂອງຜູ້ອະພິປາຍ<br>6. ຮູບແບບການຈັດວາງທີ່ນັ່ງສໍາລັບການອະພິປາຍ | ການຈັດວາງທີ່ນັ່ງສໍາລັບການອະພິປາຍແລ້ວຕອບ ຄໍາຖາມທີ່ກ່ຽວຂ້ອງ.<br>- ຈັດການອະພິປາຍໃນກະທູ້ໃດໜຶ່ງຖືກຕາມຮູບແບບການຈັດການອະ ພິປາຍ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການອະພິປາຍ. | ແບບການຈັດວາງທີ່ນັ່ງສໍາລັບການອະພິປາຍໄດ້.<br>- ຈັດການອະພິປາຍກະທູ້ໃດໜຶ່ງໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກໍາຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສໍາຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ບົດທີ 8 ການໂຕ້ວາທີ** | 1. ຄວາມໝາຍຂອງການໂຕ້ວາທີ<br>2. ຫຼັກຂອງການໂຕ້ວາທີ<br>3. ອົງປະກອບການໂຕ້ວາທີ<br>4. ໜ້າທີ່ຂອງອົງປະກອບການໂຕ້ວາທີ<br>4.1 ໜ້າທີ່ຂອງປະທານ<br>4.2 ໜ້າທີ່ກໍາມະການ<br>4.3 ໜ້າທີ່ຂອງຜູ້ໂຕ້ວາທີ<br>5. ບາດກ້າວການໂຕ້ວາທີ<br>6. ມາລະຍາດການໂຕ້ວາທີ<br>7. ຄຸນສົມບັດຂອງນັກໂຕ້ວາທີ<br>8. ການກຽມທີມໂຕ້ວາທີ<br>9. ວິທີກຽມຕົວໂຕ້ວາທີ | - ເຂົ້າໃຈຄວາມໝາຍ , ຫຼັກການ, ອົງປະກອບ ແລະໜ້າທີ່ຂອງອົງປະ ກອບການໂຕ້ວາທີ ແລ້ວຕອບຄໍາຖາມທີ່ກ່ຽວຂ້ອງ.<br>- ເຂົ້າໃຈບາດກ້າວ, ມາລະຍາດ ແລະ ຄຸນສົມບັດຂອງນັກໂຕ້ວາທີ ແລ້ວຕອບຄໍາຖາມທີ່ກ່ຽວຂ້ອງ.<br>- ບອກການກຽມທີມ ແລະ ວິທີກຽມຕົວໂຕ້ວາທີ ແລ້ວຕອບຄໍາຖາມທີ່ກ່ຽວຂ້ອງ.<br>- ຈັດການໂຕ້ວາທີໃນຍັດຕິໃດໜຶ່ງຖືກຕ້ອງຕາມຫຼັກການ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບການໂຕ້ວາທີ. | - ອະທິບາຍຄວາມໝາຍ, ຫຼັກການ, ອົງປະກອບ ແລະ ໜ້າທີ່ຂອງອົງປະກອບການໂຕ້ວາທີໄດ້.<br>- ບອກບາດກ້າວ, ມາລະຍາດ, ຄຸນສົມບັດ, ການກຽມທີມ ແລະ ວິທີກຽມຕົວໂຕ້ວາທີໄດ້.<br>- ໂຕ້ວາທີໃນຍັດຕິໃດໜຶ່ງໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງ ສັນ ໂດຍຜ່ານການເຮັດກິດຈະກໍາຂອງກຸ່ມໄດ້.<br>- ຈັດແນວຄວາມຄິດ |

| | | | |
|---|---|---|---|
| | | | ຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ບົດທີ 9 ພິທີກອນ ແລະ ໂຄສົກ** | 1. ຄວາມໝາຍຂອງພິທີກອນ ແລະໂຄສົກ<br>1.1 ຄວາມໝາຍຂອງພິທີກອນ<br>1.2 ຄວາມໝາຍຂອງໂຄສົກ<br>2. ຄຸນສົມບັດຂອງພິທີກອນ ແລະ ໂຄສົກ<br>2.1 ຄຸນສົມບັດຂອງພິທີກອນ<br>2.2 ຄຸນສົມບັດຂອງໂຄສົກ<br>3. ໜ້າທີ່ຂອງພິທີກອນ ແລະ ໂຄສົກ<br>3.1 ໜ້າທີ່ຂອງພິທີກອນ<br>3.2 ໜ້າທີ່ຂອງໂຄສົກ | - ເຂົ້າໃຈຄວາມໝາຍ, ຄຸນສົມບັດ ແລະ ໜ້າທີ່ຂອງພິທີກອນ ແລະ ໂຄ ສົກ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>- ປະຕິບັດໜ້າທີ່ເປັນພິທີກອນ ຫຼື ໂຄສົກໃນງານໃດໜຶ່ງ.<br>- ຕອບບົດຝຶກຫັດໃນບົດຮຽນ ເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບພິທີກອນ ແລະ ໂຄສົກ. | - ອະທິບາຍຄວາມໝາຍ, ຄຸນສົມບັດ ແລະ ໜ້າທີ່ຂອງພິທີກອນ ແລະ ໂຄສົກໄດ້.<br>- ປະຕິບັດໜ້າທີ່ເປັນພິທີກອນ ແລະໂຄສົກໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະມີແນວຄິດສ້າງ ສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ພາກຮຽນທີ II** | | | |
| **ພາກທີ IV ຫຼັກພາສາລາວ** | **ນັກຮຽນສະແດງໃຫ້ເຫັນຄວາມເຂົ້າໃຈຢ່າງຊັດເຈນກ່ຽວກັບ…** | **ນັກຮຽນມີຄວາມສາມາດ…** | **ນັກຮຽນ…** |
| **ບົດທີ 10 ຕະກຸນພາສາຕ່າງໆໃນລາວ** | 1. ຄວາມໝາຍຂອງຕະກຸນພາສາ<br>2. ຕະກຸນພາສາໃນໂລກ<br>2.1 ຕະກຸນຈີນ-ຕິເບດ<br>2.2 ຕະກຸນອິດສະໂຕຣເນຊຽນ | - ເຂົ້າໃຈຄວາມໝາຍຂອງຕະກຸນພາສາ, ຕະກຸນພາສາໃນໂລກ, ຕະກຸນພາສາຕ່າງໆໃນອາຊຽນຕາເວັນອອກສຽງໃຕ້ ແລະ ຕະກຸນພາສາຕ່າງໆໃນລາວ ແລ້ວຕອບ ຄຳຖາມທີ່ | - ອະທິບາຍຄວາມໝາຍຂອງຕະກຸນພາສາໄດ້.<br>- ບອກຕະກຸນພາສາໃນໂລກ, ຕະກຸນພາສາຕ່າງໆໃນອາຊຽນຕາຕາເວັນອອກສຽງໃຕ້ |

| | | | |
|---|---|---|---|
| | 2.3 ຕະກຸນໄຕ-ກະໄດ<br>2.4 ຕະກຸນອິດສະໂຕເອເຊຍຕິກ<br>2.5 ຕະກຸນອິນໂດ-ເອີຣົບ<br>2.6 ຕະກຸນດຣາວິດຽນ<br>3. ຕະກຸນພາສາຕ່າງໆໃນອາຊຽນຕາເວັນອອກສຽງໃຕ້<br>3.1 ຕະກຸນໄຕ-ກະໄດ<br>3.2 ຕະກຸນຈີນ- ຕິເບດ<br>3.3 ຕະກຸນມົ້ງ-ອິວມຽນ<br>3.4 ຕະກຸນມອນ -ຂະແມ<br>3.5 ຕະກຸນອິດສະໂຕຣເນຊຽນ<br>4. ຕະກຸນພາສາຕ່າງໆໃນລາວ<br>4.1 ຕະກຸນພາສາລາວ-ໄທ(ໄຕ)<br>4.2 ຕະກຸນມອນ -ຂະແມ<br>4.3 ຕະກຸນຈີນ-ຕິເບດ<br>4.4 ຕະກຸນມົ້ງ-ອິວມຽນ | ກ່ຽວຂ້ອງ.<br>- ບອກຕະກຸນພາສາຕ່າງໆໃນລາວ ໂດຍສະເພາະຕະກຸນພາສາລາວ-ໄຕ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບຕະກຸນພາສາຕ່າງໆໃນລາວ. | ແລະ ຕະກຸນພາສາຕ່າງໆໃນລາວໄດ້.<br>- ບອກພາສາຕ່າງໆ ຢູ່ໃນຕະກຸນພາ ສາລາວ-ໄຕໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ບົດທີ 11 ຄຳຢືມໃນພາສາລາວ** | 1. ຄວາມໝາຍຂອງການຢືມຄຳ<br>2. ສາເຫດຂອງການຢືມຄຳ<br>2.1 ສາເຫດທາງດ້ານພູມສາດ<br>2.2 ສາເຫດທາງດ້ານການຕິດຕໍ່ຊື້ຂາຍ<br>2.3 ສາເຫດທາງດ້ານວັດ | - ເຂົ້າໃຈຄວາມໝາຍ, ສາເຫດ, ລັກ ສະນະຂອງການຢືມຄຳ ແລະ ຄຳຢືມຈາກພາສາຕ່າງໆ ແລ້ວຕອບ ຄຳຖາມທີ່ກ່ຽວຂ້ອງ.<br>- ຮູ້ຄຳຢືມມາຈາກພາສາອື່ນໆທີ່ໃຊ້ໃນຊີວິດປະຈຳວັນ.<br>- ຕອບບົດຝຶກຫັດໃນບົດຮຽນ | - ອະທິບາຍຄວາມໝາຍຂອງການຢືມຄຳໄດ້.<br>- ບອກສາເຫດ, ລັກສະນະຂອງການຢືມຄຳໄດ້.<br>- ບອກຄຳຢືມຈາກພາສາຕ່າງໆໄດ້.<br>- ສະແດງການເຮັດວຽກ |

| | | | |
|---|---|---|---|
| | ທະ ນະທຳ ແລະ ສາສະໜາ<br>2.4 ສາເຫດທາງດ້ານການສຶກສາ<br>3. ລັກສະນະການຢືມຄຳ<br>3.1 ການທັບສັບ<br>3.2 ການແປສັບຄຳຢືມ<br>3.3 ການຢືມຄວາມໝາຍ<br>4. ຄຳຢືມຈາກພາສາຕ່າງໆ<br>4.1 ການຢືມຈາກພາສາຈີນ<br>4.2 ການຢືມຈາກພາສາມອນ<br>4.3 ການຢືມຈາກພາສາຂະແມ<br>4.4 ການຢືມຈາກພາສາປາລີ<br>4.5 ການຢືມຈາກພາສາສັນສະກິດ<br>4.6 ການຢືມຈາກພາສາຝຣັ່ງ<br>4.7 ການຢືມຈາກພາສາອັງກິດ<br>4.8 ການຢືມຈາກພາສາຫວຽດນາມ<br>4.9 ການຢືມຈາກພາສາໄທ | ເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບຄຳຢືມໃນພາສາລາວ. | ເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ບົດທີ 12 ວັດຈະນານຸກົມວິທະຍາ** | 1. ຄວາມໝາຍ ແລະ ຄວາມສຳຄັນຂອງວັດຈະນານຸກົມ<br>1.1 ຄວາມໝາຍຂອງວັດຈະນານຸກົມ<br>1.2 ຄວາມສຳຄັນຂອງວັດຈະນານຸກົມ | - ເຂົ້າໃຈຄວາມໝາຍ, ຄວາມສຳຄັນ, ລັກສະນະ ແລະ ຮູບແບບຂອງວັດ ຈະນານຸກົມ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>- ເຂົ້າໃຈຄຸນລັກສະນະ ແລະ ວິທີຊອກຫາຄຳໃນ | - ອະທິບາຍຄວາມໝາຍ ແລະຄວາມ ສຳຄັນຂອງວັດຈະນານຸກົມໄດ້.<br>- ບອກລັກສະນະ ແລະ ຮູບແບບຂອງວັດຈະນານຸກົມໄດ້. |

| | | | |
|---|---|---|---|
| | 2. ລັກສະນະຂອງວັດຈະນານຸກົມ<br>2.1 ສາລານຸກົມ<br>2.2 ວັດຈະນານຸກົມ<br>3. ຮູບແບບຂອງວັດຈະນານຸກົມ<br>3.1 ວັດຈະນານຸກົມພາສາດຽວ<br>3.2 ວັດຈະນານຸກົມສອງພາສາ<br>3.3 ວັດຈະນານຸກົມຫຼາຍພາສາ<br>3.4 ວັດຈະນານຸກົມວິຊາສະເພາະໃດໜຶ່ງ<br>4. ຄຸນລັກສະນະຂອງວັດຈະນານຸກົມ<br>4.1 ການສະກົດຄຳ<br>4.2 ຄວາມໝາຍ<br>4.3 ຄຸນສົມບັດທາງໄວຍາກອນ<br>4.4 ຕົວຢ່າງປະໂຫຍກ<br>4.5 ການອອກສຽງ<br>4.6 ທີ່ມາຂອງຄຳ<br>5. ວິທີຊອກຫາຄຳໃນວັດຈະນານຸກົມແບບຕ່າງໆ<br>5.1 ການຮຽງລຳດັບຄຳ<br>5.2 ປະຫວັດຄຳ<br>5.3 ອັກສອນຫຍໍ້ທີ່ໃຊ້ໃນວັດຈະນານຸກົມ | ວັດຈະນານຸກົມແບບຕ່າງໆ ແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>- ຊອກຫາຄວາມໝາຍຂອງຄຳສັບຢູ່ບົດຝຶກຫັດໃນປຶ້ມແບບຮຽນ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບຄຳຢືມໃນພາສາລາວ. | - ບອກຄຸນລັກສະນະຂອງວັດຈະນາ ນຸກົມໄດ້.<br>- ຊອກຫາຄຳໃນວັດຈະນານຸກົມແບບຕ່າງໆໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງ ສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ບົດທີ 13 ພາກສ່ວນຕ່າງໆຂອງປະໂຫຍກ** | 1. ຄວາມໝາຍຂອງປະໂຫຍກ<br>2. ໂຄງປະກອບຂອງປະໂຫຍກ<br>2.1 ປະໂຫຍກສອງ | - ເຂົ້າໃຈຄວາມໝາຍໂຄງ, ປະກອບ ແລະ ພາກສ່ວນຕ່າງໆຂອງປະ ໂຫຍກ ແລ້ວຕອບຄຳຖາມທີ່ກ່ຽວ ຂ້ອງ.<br>- ແຕ່ງປະໂຫຍກສອງພາກສ່ວນ | - ອະທິບາຍຄວາມໝາຍ, ໂຄງປະ ກອບ ແລະ ພາກ ສ່ວນຕ່າງໆຂອງປະໂຫຍກໄດ້.<br>- ແຕ່ງປະໂຫຍກສອງ |

| | | | |
|---|---|---|---|
| | ພາກສ່ວນ<br>2.2 ປະໂຫຍກສາມພາກສ່ວນ<br>3. ພາກສ່ວນຕ່າງໆຂອງປະໂຫຍກ<br>3.1 ພາກສ່ວນຄຳຕົວຕັ້ງ<br>3.2 ພາກສ່ວນຄຳກຳມະ<br>3.3 ພາກສ່ວນຄຳປະກອບ<br>3.4 ພາກສ່ວນຄຳຂະຫຍາຍ | ແລະ ສາມພາກສ່ວນ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບພາກສ່ວນຕ່ງໆຂອງປະໂຫຍກ | ພາກສ່ວນ ສາມພາກສ່ວນໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງໄດ້. |
| **ບົດທີ 14 ໃຈຄວາມຂອງປະໂຫຍກ** | 1. ຄວາມໝາຍໃຈຄວາມຂອງປະໂຫຍກ<br>2. ປະໂຫຍກໃຈຄວາມດຽວ<br>2.1 ປະໂຫຍກສາມັນສອງພາກ ສ່ວນ<br>2.2 ປະໂຫຍກສາມັນສາມພາກ ສ່ວນ<br>2.3 ປະໂຫຍກຕົ້ນປະສົມກັບຄຳນາມ<br>2.4 ປະໂຫຍກຕົ້ນປະສົມກັບອະ ລິ<br>3. ປະໂຫຍກຫຼາຍໃຈຄວາມ<br>3.1 ປະໂຫຍກຕົ້ນປະສົມກັບປະໂຫຍກອື່ນ<br>3.2 ຫຼາຍປະໂຫຍກປະສົມກັນ | - ເຂົ້າໃຈຄວາມໝາຍໃຈຄວາມຂອງປະໂຫຍກ, ປະໂຫຍກໃຈຄວາມດຽວ ແລະ ປະໂຫຍກຫຼາຍໃຈ ຄວາມແລ້ວຕອບຄຳຖາມທີ່ກ່ຽວຂ້ອງ.<br>- ແຕ່ງປະໂຫຍກປະສົມກັບຄຳນາມ, ອະລິ ແລະ ປະໂຫຍກອື່ນ.<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດ ກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບໃຈຄວາມຂອງປະໂຫຍກ. | - ອະທິບາຍຄວາມໝາຍໃຈຄວາມຂອງປະໂຫຍກໄດ້.<br>- ບອກປະໂຫຍກໃຈຄວາມດຽວ ແລະ ຫຼາຍໃຈຄວາມໄດ້.<br>- ແຕ່ງປະໂຫຍກປະສົມກັບຄຳນາມ, ອະລິ ແລະ ປະ ໂຫຍກອື່ນໄດ້.<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງ ສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະ ການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດ ສິນໃຈໃນຕົວຈິງ |

| | | | |
|---|---|---|---|
| | | | ໄດ້. |
| **ບົດທີ 15 ຫຼັກການ ແລະ ວິທີແຕ່ງກອນລຳ** | 1. ຄວາມໝາຍຂອງກອນລຳ<br>2. ລຳຕັດ<br>3. ລຳເຍີ້ນ<br>4. ລຳລ່ອງ<br>5. ລຳເຕີ້ຍ | - ເຂົ້າໃຈຄວາມໝາຍຂອງກອນລຳ ແລ້ວຕອບຄຳຖາມ.<br>- ເຂົ້າໃຈຄວາມໝາຍຂອງກອນລຳຕັດ, ລຳເຍີ້ນລຳລ່ອງ ແລະ , ລຳເຕີ້ຍ ແລ້ວຕອບຄຳຖາມທີ່ .ກ່ຽວຂ້ອງ<br>- ແຕ່ງກອນລຳຕັດລຳເຍີ້ນ , .ຖືກຕາມໂຄງຮ່າງ<br>- ຕອບບົດຝຶກຫັດໃນບົດຮຽນເພື່ອກວດກາ ແລະ ຕິດຕາມການຮຽນຮູ້ກ່ຽວກັບຫຼັກການ ແລະ ວິທີແຕ່ງກອນ. | - ອະທິບາຍຄວາມໝາຍຂອງກອນລຳໄດ້.<br>- ອະທິບາຍຄວາມໝາຍຂອງລຳຕັດ ,ລຳເຍີ້ນ , ລຳລ່ອງ ແລະລຳເຕີ້ຍ .ໄດ້<br>- ແຕ່ງກອນລຳຕັດລຳ , .ເຍີ້ນຕາມໂຄງຮ່າງໄດ້<br>- ສະແດງການເຮັດວຽກເປັນກຸ່ມ ແລະ ມີແນວຄິດສ້າງສັນ ໂດຍຜ່ານການເຮັດກິດຈະກຳຂອງກຸ່ມໄດ້.<br>- ຈັດແນວຄວາມຄິດຂອງຕົນ ແລະ ພັດທະນາທັກສະການວິເຄາະ ແລະ ການຄົ້ນຄິດທີ່ສຳຄັນຂອງການຕັດສິນໃຈໃນຕົວຈິງໄດ້. |

# ບົດທີ3

# ແຜນການສອນ

## 1. ຄວາມໝາຍຂອງການວາງແຜນການສອນ

ການວາງແຜນການສອນແມ່ນກິດຈະກຳໃນການຄິດ ແລະ ປະຕິບັດຂອງຄູກ່ອນຈະດຳເນີນການສອນວິຊາໃດໜຶ່ງ ຊຶ່ງຕ້ອງກຳນົດຈຸດປະສົງ, ຄັດເລືອກເນື້ອໃນ, ການກຳນົດກິດຈະກຳການຮຽນ – ການສອນ, ການເລືອກຕຳລາ, ເອກະສານ, ອຸປະກອນການສອນ ແລະ ປະເມີນຜົນ.

- ແຜນການສອນກຳນົດຂັ້ນຕອນການສອນທີ່ຄູແນໃສ່ໃຫ້ນັກຮຽນເກີດພຶດຕິກຳການຮຽນຮູ້ຕາມຈຸດປະສົງ.
- ຊ່ວຍໃຫ້ຄູໄດ້ຈັດກິດຈະກຳໂດຍຖືເອົາເນື້ອໃນຈຸດປະສົງການຮຽນຮູ້, ຄວາມຮູ້ພື້ນຖານໃນຫຼັກສູດ, ແຜນການສອນໄປຕາມຈຸດປະສົງ ແລະ ປະເມີນຜົນການສອນ,

ດັ່ງນັ້ນ, ການວາງແຜນການສອນເປັນການກຽມການສອນທີ່ຂຽນໄວ້ລ່ວງໜ້າເພື່ອເປັນແນວທາງໃນການສອນສຳລັບຄູເຊິ່ງຈະເຮັດໃຫ້ການຮຽນ - ການສອນບັນລຸຈຸດປະສົງທີ່ກຳນົດໄວ້ຢ່າງມີປະສິດທິພາບ.

## 2.ຄວາມສຳຄັນຂອງການວາງແຜນການສອນ

ການວາງແຜນການສອນເປັນວຽກສຳຄັນຂອງຄູ ແລະ ມີຄວາມສຳຄັນດັ່ງນີ້:

1). ເຮັດໃຫ້ຄູສອນດ້ວຍຄວາມໝັ້ນໃຈສອນໄປຕາມລາດັບຂັ້ນຕອນ ແລະ ດຳເນີນໄປເຖິງຈຸດໝາຍຢ່າງສົມບູນ,

2). ເຮັດໃຫ້ຄູສອນຢ່າງມີຄຸນຄ່າຄຸ້ມກັບເວລາທີ່ຜ່ານໄປເພາະຄູສອນຢ່າງມີແຜນການມີຈຸດປະສົງ ແລະ ມີທິດທາງໃນການສອນນັກຮຽນກໍ່ຈະໄດ້ຮັບຄວາມຮູ້, ຄວາມຄິດ, ມີເຈດຄະຕິທີ່ດີມີທັກສະ ແລະ ມີປະສົບປະການໃໝ່ຕາມຄວາງແຜນການສອນໄວ້

3). ເຮັດໃຫ້ການສອນຖືກຕາມຫຼັກສູດຄູຕ້ອງສຶກສາຫຼັກສູດເຊັ່ນ: ການກຳນົດຈຸດປະສົ່ງ, ເນື້ອໃນ, ການຈັດກິດຈະກຳການຮຽນ - ການສອນ, ການໃຊ້ສື່ການສອນ ແລະ ການວັດປະເມີນຜົນຫຼັງຈາກນີ້ຈຶ່ງວາງແຜນການສອນຈະໄດ້ດີກວ່າການສອນທີ່ບໍ່ມີການວາງແຜນການສອນ.

4). ເຮັດໃຫ້ຄູສອນມີເອກະສານສາມາດນາມາເປັນແນວທາງໃນການສອນຕໍ່ໄປເພື່ອບໍ່ໃຫ້ເກີດຄວາມສັບສົນ ແລະ ເປັນແນວທາງໃນການທວນຄືນ ຫຼື ການອອກຂໍ້ສອບເສັງນອກຈາກນີ້ຍັງເປັນເອກະສານເພື່ອອຳນວຍຄວາມສະດວກໃຫ້ຜູ້ອື່ນທີ່ມາສອນແທນ, ເມື່ອຄູສອນຕາມແຜນການສອນກໍ່ຈະເຮັດໃຫ້ການສອນຖືກກັບທິດທາງຂອງຫຼັກສູດ.

5). ເຮັດໃຫ້ການສອນມີປະສິດທິພາບດີເມື່ອມີການວາງແຜນການສອນທີ່ຮອບຄອບ ແລະ ປະຕິບັດຕາມແຜນການສອນທີ່ວາງໄວ້ເມື່ອຄູສອນບໍ່ສາມາດສອນເອງໄດ້, ໃຫ້ຄູອື່ນສອນແທນນັກຮຽນຈຶ່ງໄດ້ຮັບຄວາມຮູ້ທີ່ຕໍ່ເນື່ອງກັນ.

6). ເຮັດໃຫ້ນັກຮຽນມີເຈດຄະຕິທີ່ດີຕໍ່ຄູ ແລະ ວິຊາທີ່ຮຽນເພາະຄູສອນສອນດ້ວຍຄວາມພ້ອມເຊິ່ງເປັນຄວາມພ້ອມທາງດ້ານຈິດໃຈ ແລະ ຄວາມພ້ອມທາງດ້ານວັດຖຸຄວາມພ້ອມທາງດ້ານຈິດໃຈແມ່ນຄວາມໝັ້ນໃຈໃນການສອນເພາະຄູສອນໄດ້ກຽມການສອນມາຢ່າງດີສ່ວນຄວາມພ້ອມທາງດ້ານວັດຖຸ ເປັນການສອນທີ່ກຽມເອກະສານ ຫຼື ສື່ການສອນໄວ້ຢ່າງຄົບຖ້ວນ

ດັ່ງນັ້ນ, ການສອນທີ່ກຽມພ້ອມທຸກຢ່າງຈຶ່ງເຮັດໃຫ້ການສອນມີຄວາມຊັດເຈນກະຈ່າງແຈ້ງເຮັດໃຫ້ຜູ້ຮຽນມີຄວາມເຂົ້າໃຈບົດຮຽນໄດ້ດີ.

## 3.ລັກສະນະຂອງການວາງແຜນການສອນ

ການວາງແຜນການສອນເປັນການກຳນົດການສອນໄວ້ລ່ວງໜ້າມີດັ່ງນີ້:

1). ສອນຫຍັງ?

2). ສອນແນວໃດ?

3). ຈະສອນໃຜ?

4). ເນື້ອໃນສອນແນວໃດ?

5). ໃຊ້ເວລາສອນເທົ່າໃດ?

6). ໃຊ້ອຸປະກອນການສອນແນວໃດ?

7). ຄູຕ້ອງກຽມລ່ວງໜ້າຢ່າງລະອຽດຮອບຄອບເພື່ອດຳເນີນການສອນໄປຕາມຈຸດປະ

### 3.1 ການວາງແຜນການສອນ

ການວາງແຜນການສອນມີທັງແຜນການສອນໄລຍະຍາວແລະໄລຍະສັ້ນບາງຄັ້ງອາດ ແລະ ກຽມການສອນຈະວາງແຜນການສອນໃນເລື່ອງດຽວ ຫຼື ວາງແຜນເອົາຫຼາຍໆເລື່ອງການວາງແຜນການສອນແຕ່ລະວິຊາຈະກຳນົດແຕກຕ່າງກັນວາງວິຊາຕ້ອງສອນ 2 ຊົ່ວໂມງຕໍ່ອາທິດ, ວາງວິຊາຕ້ອງສອນທຸກມື້ຜູ້ສອນຕ້ອງໄດ້ເອົາຫຼັກສູດແຕ່ລະວິຊາມາເປັນບ່ອນອີງເພື່ອສ້າງແຜນການໃຫ້ຊັດເຈນຕາມຈຸດປະສົງທີ່ໄດ້ກຳນົດໄວ້ເຊັ່ນ:

1). ຈະສອນເນື້ອໃນໃດ?

2). ແນໃສ່ໃຫ້ຜູ້ຮຽນໄດ້ຮຽນຮູ້ຫຍັງ?

3). ຈະດຳເນີນການສອນແນວໃດ? ( ວິທີ ແລະ ກິດຈະກຳ ).

4). ໃຊ້ສື່ການສອນແນວໃດ?

5). ມີວິທີລັດ ແລະ ປະເມີນຜົນແນວໃດ?

ການວາງແຜນການສອນແມ່ນມີຄວາມຈຳເປັນສຳລັບຄູທຸກຄົນຄູທີ່ມີປະສົບການຈະວາງແຜນການສອນໄດ້ດີ ແລະ ຮອບຄອບສຳລັບຄູໃໝ່ຕ້ອງໄດ້ຂຽນແຜນການສອນໃຫ້ລະອຽດ, ສົມບູນແບບ ແລະ ກຽມກິດຈະກຳການຮຽນ – ການສອນໃຫ້ເໝາະສົມ.

### 3.2 ຄຸນປະໂຫຍດຂອງການວາງແຜນການສອນ

- ຊ່ວຍສ້າງຄວາມໝັ້ນໃຈໃຫ້ຄູໃນເວລາສອນ. ມີການປັບປຸງການຮຽນ - ການສອນ, ສາມາດວິເຄາະຫາຄວາມບົກພ່ອງ ຫຼື ບັນຫາຕ່າງໆຜ່ານມາໄດ້
- ຊ່ວຍໃຫ້ຄູມີຄວາມຮອບຄອບໃນການເລືອກຈຸດປະສົງ ແລະ ພຶດຕິກຳການຮຽນ -ການສອນ
- ຊ່ວຍແກ້ບັນຫາ, ຂໍ້ຂ້ອງໃຈ, ຕອບສະໜອງຄວາມຕ້ອງການ ແລະ ຄວາມສົນໃຈຂອງນັກຮຽນ
- ຊ່ວຍໃຫ້ການສອນຕໍ່ເນື່ອງ, ຄູໄດ້ກຽມເນື້ອໃນ ແລະ ສື່ການສອນໄວ້ລ່ວງໜ້າ
- ຊ່ວຍໃຫ້ການປະເມີນຜົນຖືກຕາມຈຸດປະສົງ.
- ຊ່ວຍໃຫ້ຄູສາມາດດຳເນີນງານໃນການຮຽນ - ການສອນໄດ້ຖືກຕາມຫຼັກສູດ
- ຊ່ວຍໃຫ້ຄູສາມາດສິດສອນໄດ້ດີມີປະສິດທິພາບສູງ, ມີຄວາມຊຳນານໃນການສອນ.
- ຊ່ວຍໃຫ້ຄູມີເວລາໃນການຈັດຫາ ແລະ ຈັດສື່ສານການຮຽນ - ການສອນໄວ້ໃຫ້ຜູ້ຮຽນຢ່າງຄົບຖ້ວນ.
- ຊ່ວຍໃຫ້ຄູສາມາດປັບປຸງປ່ຽນແປງກິດຈະກຳໃຫ້ເໝາະສົມກັບນັກຮຽນ.

ແຜນການສອນມີທັງແຜນການໄລຍະສັ້ນ ແລະ ໄລຍະຍາວແຜນການທັງສອງປະເພດມີຄວາມຈຳເປັນທີ່ຢູ່ຕ້ອງຮູ້ປະຕິບັດການວາງແຜນການສອນທີ່ດີຕ້ອງສຶກສາຫຼັກສູດໃຫ້ລະອຽດມີການວາງແຜນການໄລຍະຍາວ (ກຳນົດໃນການສອນ) ການວາງແຜນການໄລຍະສັ້ນເອີ້ນວ່າແຜນການສອນ.

**3.3 ຂໍ້ມູນທີ່ຕ້ອງໃຊ້ໃນການວາງແຜນການສອນ.**

1). ກຳນົດຈຸດປະສົງຕ້ອງມີທັງຈຸດປະສົງປ່ຽນແປງພຶດຕິກຳນັກຮຽນໝາຍຄວາມວ່າຕ້ອງການົດຈຸດປະສົງທົ່ວໄປ ແລະ ຈຸດປະສົງສະເພາະ

2). ການຄັດເລືອກເນື້ອໃນ, ການວິເຄາະຂໍ້ມູນ ເປັນຂໍ້ມູນສຳຄັນ ແລະ ຈຳເປັນທີ່ສຸດເພື່ອກຳນົດເນື້ອໃນສອນເປັນພາກ, ເປັນບົດ ແລະ ເປັນຫົວຂໍ້

3). ວິເຄາະຜູ້ຮຽນກຳນົດລະດັບການຮຽນຂອງນັກຮຽນເພື່ອໃຫ້ຄູສອນແທດເໝາະກັບຈຸດພິເສດຂອງຜູ້ຮຽນເຊັ່ນ: ໄວອາຍຸ, ຄວາມພ້ອມ ແລະ ຄວາມຮູ້ພື້ນຖານໃຫ້ນັກຮຽນ

4). ການກຳນົດກິດຈະກຳການຮຽນ - ການສອນແມ່ນສິ່ງທີ່ຄູຄວນກຽມໄວ້ລ່ວງໜ້າໂດຍຄຳນຶງເຖິງການຈັດເປັນກຸ່ມໃຫ່ຍ, ກຸ່ມນ້ອຍ ແລະ ກິດຈະກຳບຸກຄົນໂດຍໃຫ້ສອດຄ່ອງກັບຈຸດປະສົ່ງທີ່ໄດ້ກຳນົດໄວ້.

5). ຕ້ອງກຳແໜ້ນເນື້ອໃນຂອງບົດສອນໃຫ້ລະອຽດຊັດເຈນ ແລະ ສະຫຼຸບຄວາມຮູ້ພື້ນຖານໃຫ້ນັກຮຽນກຳໄດ້ໃນແຕ່ລະຊົ່ວໂມງ

6). ມີການວັດປະເມີນຜົນການສອນຂອງຄູ ແລະ ການຮຽນຂອງນັກຮຽນຢ່າງຊັດເຈນ

7). ອີງໃສ່ສະພາບການຕົວຈິງເຊັ່ນ: ຈານວນພົນ, ອຸປະກອນ, ງົບປະມານ ແລະ ວິທີ ຂໍ້ມູນເຫຼົ່ານີ້ເຮັດໃຫ້ຄູຮູ້ວາງແຜນການສອນ, ກຳນົດຮູບແບບການສອນ ແລະ ກິດຈະກຳການ, ການຮຽນ - ການສອນໄດ້ຢ່າງຊັດເຈນ.

**3.4 ຂໍ້ຄວນເອົາໃຈໃສ່ໃນການວາງແຜນການສອນທີ່ດີ**

- ຄູຕ້ອງຄົ້ນຄວ້າຫຼັກສູດໃຫ້ລະອຽດ, ເລີ່ມຈາກຈຸດປະສົງການຮຽນຮູ້, ຄວາມຮູ້ພື້ນຖານຫຼັກການ ແລະ ກິດຈະກຳ ແລະ ເນື້ອໃນຈຸດປະສົງການສຶກສາຫຼັກສູດຈະຊ່ວຍໃຫ້ຄູເຂົ້າໃຈຂອບເຂດການໃຊ້ປະສົບການຕ່າງໆທີ່ຄູຕ້ອງຈັດໃຫ້ນັກຮຽນ, ເປັນການຮັບຮູ້ ກຽມຕົວລ່ວງໜ້າວ່າ ຈະສອນແນວໃດ? ຈະເຝິກແອບຕົນເອງຕໍ່ຄວາມຮູ້ໃໝ່ແນວໃດ? ເພື່ອສອນໃຫ້ນັກຮຽນເຂົ້າໃຈ
- ຄູຕ້ອງອ່ານ ແລະ ຄົ້ນຄວ້າບົດຮຽນທີ່ຈະສອນໃຫ້ລະອຽດ, ໃຫ້ຮູ້ວ່າສິ່ງໃດຕົນເອງຈະສອນແຕ່ບໍ່ເຂົ້າໃຈເພື່ອຊອກຮູ້ເພີ່ມເຕີມ, ຕ້ອງຮູ້ຕັດ, ຮູ້ຕື່ມເອກະສານເພື່ອໃຫ້ເນື້ອໃນບົດສອນອຸດົມສົມບູນ, ດູດດື່ມ ແລະ ເຂົ້າໃຈງ່າຍ, ໃຫ້ຮູ້ວ່າສິ່ງໃດມີແລ້ວ ສິ່ງໃດຕ້ອງຊອກຕື່ມ.
- ຕ້ອງສຳຫຼວດເບິ່ງວ່າເນື້ອໃນ ແລະ ກິດຈະກຳກັບເວລາຈະດຳເນີນເໝາະສົມ ຫຼື ບໍ່ ?
- ຄົ້ນຄວ້າ ແລະ ສ້າງແບບຟອມການປະເມີນແບບຕ່າງໆເຊັ່ນ: ແບບສາພາດ ຫຼື ແບບສອບຖາມນຳໃຊ້ແບບຟອມໃຫ້ຖືກຕ້ອງ.

**3.5. ຫຼັກການການກຳນົດການສອນ**

ແມ່ນການກຳນົດເນື້ອໃນຕ່າງໆເພື່ອດຳເນີນການສອນໝົດປີ, ພາກຮຽນ, ເດືອນ, ອາທິດ ແລະ ເປັນແຕ່ລະວັນ, ການສອນຕ້ອງຮູ້ວັນປິດ - ວັນປິດຮຽນ, ພັກບຸນຕ່າງໆກຳນົດເນື້ອໃນຈະສອນກ່ອນ, ຈະສອນຫຼັງ, ຈະໃຊ້ເວລາຫຼາຍ ຫຼື ໜ້ອຍໃຫ້ຈັດຕາມຄວາມເໝາະ ສົມເພື່ອປະສິດທິພາບການສອນຂອງຄູເປັນຫຼັກການທີ່ສຳຄັນໃນການກຳນົດການສອນມີດັ່ງນີ້:

- ຕ້ອງແມ່ນຄູສອນລະດັບດຽວກັນກຳນົດການຂອນຮ່ວມກັນ
- ສຳຫຼວດຈຳນວນຄັ້ງທີ່ຈະສອນ.

- ນຳແຜນການຮຽນ- ການສອນ, ແຜນການ, ກິດຈະກຳ ແລະ ການວັດຜົນມາກຳນົດໃຫ້ຖືກກັບເວລາທີ່ຫຼັກສູດໄດ້ວາງໄວ້.

- ຈານວນຄາບສອນແຕ່ລະອາທິດຂອງແຕ່ລະກຸ່ມວິຊາຕ້ອງເປັນໄປຕາມອັດຕາສ່ວນທີ່ກຳນົດໃນຫຼັກສູດ

- ຊ່ວຍໃຫ້ຄູເຫັນວຽກງານຂອງຕົນລ່ວງໜ້າ ໄດ້ຊັດເຈນທັງເປັນການວາງແຜນໄວ້ລ່ວງ ໜ້າເຮັດໃຫ້ການຮຽນ – ການສອນມີປະສິດທິພາບ.

- ຊ່ວຍໃຫ້ຄູສອນໄປຕາມຫຼັກສູດ, ເໝາະສົມກັບນັກຮຽນ ແລະ ສອດຄ່ອງກັບສະພາບແວດລ້ອມ ແລະ ຊຸມຊົນຢູ່ສະເໝີ.

- ຊ່ວຍອຳນວຍຄວາມສະດວກໃຫ້ຄູທີ່ມາສອນແທນໃນເວລາຈຳເປັນເພື່ອບໍ່ໃຫ້ກະທົບກະເທືອນຕໍ່ນັກຮຽນເກີນໄປ

- ຊ່ວຍໃຫ້ມີຄູ່ມືການສອນທີ່ຂຽນຂຶ້ນດ້ວຍຕົນເອງ ເພື່ອສະດວກໃນການຈັດການຮຽນ- ການສອນ, ເຮັດໃຫ້ຄູສອນໄດ້ຄົບຖ້ວນຕາມຫຼັກສູດ ແລະ ທັນເວລາ.

- ຊ່ວຍໃຫ້ການປະເມີນຜົນສະດວກ, ເປັນໄປຕາມຈຸດໝາຍທີ່ກຳນົດໄວ້

## 4.ວິທີແຕ່ງບົດສອນ ແລະ ການສອນທົດລອງ

ວິທີການສອນເປັນຂະບວນການໜຶ່ງທີ່ເຮັດໃຫ້ເກີດໝາກຜົນຕາມຈຸດປະສົງທີ່ກຳນົດໄວ້. ໝາຍຄວາມວ່າຜູ້ເປັນຄູສອນຕ້ອງໄດ້ຮຽນຮູ້ວິທີ, ເຕັກນິກດຳເນີນການສອນ. ເຖິງວ່າຜູ້ນັ້ນຈະມີຄວາມຮູ້ກວ້າງຂວາງ ຫຼື ສູງປານໃດກໍຕາມຖ້າບໍ່ມີເຕັກນິກ ແລະ ຫຼັກການສອນທີ່ດີແມ່ນບໍ່ສາມາດຖ່າຍທອດຄວາມຮູ້ໃຫ້ແກ່ນັກຮຽນໄດ້ຢ່າງເປັນລະບົບ ດັ່ງນັ້ນ, ຜູ້ທີ່ເປັນຄູສອນຈະຕ້ອງໄດ້ເອົາໃຈໃສ່ສຶກສາ, ຄົ້ນຄວ້າ, ຊອກຫາແຫຼ່ງຂໍ້ມູນ, ເຕັກນິກ, ວິທີການຕ່າງໆເພື່ອນຳໃຊ້ເຂົ້າໃນການສິດສອນໃຫ້ແທດເໝາະ ແລະ ສອດຄ່ອງກັບເນື້ອໃນຕົວຈິງຂອງບົດສອນເວົ້າລວມ, ເວົ້າສະເພາະ ວິຊາພາສາລາວກໍເປັນວິຊາໜຶ່ງ ທີ່ນຳໃຊ້ພາສາເປັນເຄື່ອງມືສື່ສານລະຫວ່າງຄົນກັບຄົນເພື່ອໃຫ້ ເຂົ້າໃຈກັນ

### 4.1. ຄວາມສຳຄັນຂອງການແຕ່ງບົດສອນວິຊາພາສາລາວ

ການແຕ່ງບົດສອນເປັນວຽກງານໜຶ່ງທີ່ສຳຄັນສຳລັບຄູສອນທຸກຄົນ. ການແຕ່ງບົດສອນດີຖືກຕ້ອງຄົບຖ້ວນຕາມອົງປະກອບ ແລະ ຂັ້ນຕອນຕ່າງໆຈະເຮັດໃຫ້ຄູດຳເນີນການສອນສະດວກ, ສາມາດເຮັດກິດຈະກຳໄດ້ຢ່າງຄົບຖ້ວນ ແລະ ບັນລຸຈຸດປະສົງທີ່ກຳນົດໄວ້.

ສະເພາະວິຊາພາສາລາວກໍເປັນວິຊາໜຶ່ງສຳຄັນທີ່ນຳໃຊ້ເຂົ້າໃນຊີວິດປະຈຳວັນ. ນອກຈາກນັ້ນ, ວິຊາພາສາລາວກໍມີການພົວພັນກັບວິຊາອື່ນໆດັ່ງນັ້ນ, ການແຕ່ງບົດສອນຈິ່ງມີຄວາມຈຳເປັນຫຼາຍສຳລັບຜູ້ທີ່ເປັນຄູສອນ, ຄູຕ້ອງເລືອກເອົາວິທີສອນທີ່ມີຜົນປະໂຫຍດຫຼາຍທີ່ສຸດໃຫ້ແກ່ນັກຮຽນເຊິ່ງສະແດງອອກດັ່ງນີ້:

- ການແຕ່ງບົດສອນສະແດງໃຫ້ເຫັນເຖິງຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຄູ
- ເຮັດໃຫ້ການສອນຂອງຄູມີຄວາມຄ່ອງແຄ້ວ
- ຊ່ວຍໃຫ້ຄູຜູ້ສອນ ມີຄວາມເຊື່ອໝັ້ນຕົນເອງ
- ຊ່ວຍໃຫ້ການປະຕິບັດກິດຈະກຳໃນແຕ່ລະຂັ້ນຕອນ ການສອນຖືກຕ້ອງແທດເໝາະກັບລະດັບຄວາມຮັບຮູ້ຂອງນັກຮຽນ ແລະ ບັນລຸຕາມຈຸດປະສົງ
- ຊ່ວຍໃຫ້ຄູຜູ້ສອນປານເທນເວລາຕິດສັດທີ່ຈຳເປັນໃຫ້ມີຄວາມເຂົ້າໃຈ ແລະ ສາມາດສອນໄດ້ຕາມຈຸດປະສົງໃນບົດສອນ

- ເຮັດໃຫ້ການປະເມີນການສອນຂອງຄູໄດ້ສະດວກ ແລະ ຖືກຕ້ອງ. ພ້ອມກັນນັ້ນກໍເປັນການປະເມີນຕົນເອງວ່າໃນຊົ່ວໂມງຂຶ້ນຫ້ອງສອນໜຶ່ງຕົນສາມາດປະຕິບັດການສອນໄດ້ດີ ແລະ ອ່ອນແນວໃດເພື່ອຈະມີທິດທາງໃນການພັດທະນາການສອນໃນຊົ່ວໂມງໃໝ່ ຫຼື ບົດໃໝ່ໃຫ້ໄດ້ດີຂຶ້ນໄປເລື້ອຍໆ.

**4.2.ວິທີແຕ່ງບົດສອນຕາມລະດັບບົດຮຽນ**

ໃນຊີວິດປະຈໍາວັນການປະຕິບັດວຽກງານຂອງບຸກຄົນ ຫຼື ລວມໝູ່ທີ່ມີປະສິດທິຜົນດີນັ້ນແມ່ນໄດ້ມາຈາກການວາງແຜນຢ່າງລະອຽດໄວ້ລ່ວງໜ້າຈຶ່ງຈະເຮັດໃຫ້ວຽກງານນັ້ນບັນລຸຕາມຈຸດປະສົງຄາດໝາຍເວົ້າລວມ, ເວົ້າສະເພາະແມ່ນຜູ້ທີ່ເປັນຄູສອນໃນທຸກໆຄັ້ງກ່ອນຈະຂຶ້ນຫ້ອງສອນຕ້ອງມີການກະກຽມແຕ່ງແຜນການສອນ (ບົດສອນ) ລະອຽດໄວ້ກ່ອນຂຶ້ນຫ້ອງສອນ 24 ຊົ່ວໂມງ. ການແຕ່ງບົດສອນນີ້ ແມ່ນມັນຊ່ວຍໃຫ້ການປະຕິບັດກິດຈະກໍາການຮຽນ-ການສອນຂອງຄູບັນລຸຕາມຫຼັກສູດທີ່ໄດ້ກໍານົດໄວ້. ຢູ່ໃນນີ້ນັກຮຽນຄູຈະໄດ້ຮຽນຮູ້ກ່ຽວກັບວິທີການແຕ່ງບົດສອນຕາມລະດັບບົດຮຽນຢ່າງລະອຽດຈະແຈ້ງເຊິ່ງມີ 7 ອົງປະກອບ ແລະ ຂັ້ນຕອນດັ່ງນີ້:

**4.3 ອົງປະກອບຂອງບົດສອນ**

ກ. ຈຸດປະສົງຂອງບົດສອນ ແມ່ນຂໍ້ຄວາມທີ່ມີຄວາມຊັດເຈນທີ່ສຸດທີ່ພັນລະນາອອກມາວ່າໃນຂອບເຂດຂອງການຮຽນແຕ່ລະຫົວເລື່ອງສະເພາະນັ້ນຄູຕ້ອງການໃຫ້ນັກຮຽນໄດ້ຫຍັງ. ຈຸດປະສົງນີ້ຊ່ວຍໃຫ້ຄູສາມາດຕິດຕາມໄດ້ຈາກການສະແດງອອກຂອງນັກຮຽນວ່າການສອນຂອງຕົນເອງບັນລຸຕາມຈຸດປະສົງເຊິ່ງປະກອບ

- ດ້ານຄວາມຮູ້

ດ້ານຄວາມຮູ້ໃນບົດນັ້ນເຮົາຕ້ອງການໃຫ້ນັກຮຽນຮູ້ ແລະ ເຂົ້າໃຈຫຍັງແດ່?.

- ດ້ານທັດສະນະຄະຕິ

ໃນບົດນັ້ນຕ້ອງການສຶກສາແນວຄິດໃຫ້ນັກຮຽນເປັນຄົນແນວໃດເພື່ອໃຫ້ຖືກຕ້ອງກັບສະພາບຄວາມເປັນຈິງຂອງສັງຄົມແນວໃດ?

- ດ້ານທັກສະ

ໃຫ້ນັກຮຽນມີຄວາມຊໍານານດ້ານໃດ? ເຮັດຫຍັງໄດ້ເຊັ່ນ ມີຄວາມສາມາດເວົ້າໄດ້ຢ່າງລ່ຽນໄຫຼດີ, ມີເຫດ ມີຜົນເປັນໜ້າເຊື່ອຖືຈາກຜູ້ຟັງ, ສາມາດຟັງບັນຫາຈາກພາກສ່ວນຕ່າງໆຢ່າງພິຈາລະນາ, ວິເຄາະ ຫຼື ໄຈ້ແຍກໃຫ້ເຫັນສິ່ງທີ່ມີປະໂຫຍດ ແລະ ສິ່ງທີ່ບໍ່ເປັນຜົນດີໃນການນໍາໃຊ້ໃນວຽກງານຂອງຕົນ, ສາມາດອ່ານໜັງສືທຸກປະເພດໄດ້ຢ່າງຖືກຕ້ອງຄ່ອງແຄ້ວ ເຊັ່ນ ບົດຂຽນປະເພດຄໍາຮ້ອຍແກ້ວ, ບົດປະເພດຄໍາຮ້ອຍກອງ ແລະ ສາມາດນໍາໃຊ້ຫຼັກໄວຍາກອນເຂົ້າໃນການຂຽນບົດປະເພດຕ່າງໆໄດ້ຢ່າງເໝາະສົມ. ເຮັດໃຫ້ຄົນອື່ນສາມາດເຂົ້າໃຈຕາມຈຸດປະສົງຂອງຜູ້ຂຽນ.

ຕົວຢ່າງ 1 ການວາງຈຸດປະສົງຂອງບົດສອນ

ຫົວຂໍ້ ພາສາແມ່ນຫຍັງ?

- ດ້ານຄວາມຮູ້

ໃຫ້ນັກຮຽນສາມາດສະແດງຄວາມຮູ້ສຶກຂອງຕົນອອກມາໃຫ້ຄົນອື່ນເຂົ້າໃຈດ້ວຍພາສາຄໍາເວົ້າ, ການຂຽນ ແລະ ເຄື່ອງສັນຍານອື່ນໆ.

- ດ້ານທັດສະນະຄະຕິ

ໃຫ້ນັກຮຽນມີແນວຄິດຮັກຫອມປະເທດຊາດ, ຮັກບ້ານເກີດເມືອງນອນ, ເຄົາລົບນັບຖືຮີດຄອງປະເພນີ-ວັດທະນາທໍາອັນດີງາມຂອງຊາດເຊິ່ງສະແດງອອກໃນການປາກເວົ້າ, ຂີດຂຽນຈົບງາມ, ຖືກຕ້ອງຕາມຫຼັກໄວຍາກອນຂອງພາສາລາວ ດັ່ງຄໍາເວົ້າທີ່ກ່າວໄວ້ວ່າ "ພາສາບອກຊາດມາລະຍາດ ບອກຕະກຸນ".

• ດ້ານທັກສະ

ໃຫ້ນັກຮຽນມີຄວາມສາມາດນໍາໃຊ້ພາສາຄໍາເວົ້າ ແລະ ກັບຜູ້ອື່ນໄດ້ເປັນຢ່າງດີ, ນໍາໃຊ້ພາສາສັນຍານ (ພາສາກາຍ) ໄດ້ບາງຢ່າງ

ຂ. ເນື້ອໃນ

ແມ່ນສິ່ງທີ່ນັກຮຽນຈະຕ້ອງຮຽນຮູ້ໂດຍຈັດຕາມລໍາດັບຈາກງ່າຍໄປຫາຍາກ ແລະ ຈັດໃຫ້ເໝາະສົມກັບເວລາ. ລະດັບຄວາມຮູ້ ໄວອາຍຸ, ສິ່ງແວດລ້ອມ ແລະ ໃກ້ຊິດກັບຊີວິດປະຈໍາວັນຂອງ

ຄ. ກິດຈະກໍາການຮຽນ-ການສອນ

ແມ່ນວິທີດໍາເນີນການສອນຂອງຄູທີ່ຈະດໍາເນີນຂັ້ນຕອນຕ່າງໆໃນການດໍາເນີນການສອນການກໍານົດກິດຈະກໍາການຮຽນ-ການສອນຂອງຄູ ເພື່ອໃຫ້ນັກຮຽນໄດ້ເຮັດກິດຈະກໍາບັນລຸຕາມຈຸດປະສົງບັນຫາ. ສະນັ້ນ, ຈຶ່ງຈໍາເປັນທີ່ຄູທຸກຄົນຈະຕ້ອງສອນໃຫ້ນັກຮຽນມີວິທີການຄິດ, ວິທີການທໍາ, ວິທີການແກ້ໄຂບັນຫາ, ເຮັດວຽກຢ່າງມີພິບໄຫວ ແລະ ຮູ້ຂັ້ນຕອນຂອງການດໍາເນີນປະຕິບັດໄດ້ຢ່າງຄ່ອງແຄ້ວເພື່ອເຮັດໃຫ້ຜູ້ຮຽນຈະຕ້ອງພັດທະນາຕົນເອງຢ່າງຮອບດ້ານ.

ການກໍານົດກິດຈະກໍາການຮຽນ-ການສອນນັ້ນຄູຕ້ອງເຂົ້າໃຈສະເໝີວ່າຄວນແມ່ນກິດກໍາຂອງນັກຮຽນເປັນສ່ວນຫຼາຍ, ການກໍານົດກິດຈະກໍາລົງໄປຄູຕ້ອງພິຈາລະນາໃຫ້ດີ, ການເຮັດກິດຈະກໍາຕ້ອງເລີ່ມຈາກນັກຮຽນເປັນຜູ້ປະຕິບັດເພື່ອໃຫ້ນັກຮຽນມີການຮຽນຮູ້, ເຂົ້າໃຈ, ສາມາດນໍາໃຊ້ເຂົ້າໃນຊີວິດປະຈໍາວັນໄດ້. ກິດຈະກໍາການຮຽນ-ການສອນນີ້ແມ່ນຄູອີງໃສ່ເນື້ອໃນແຕ່ລະຫົວຂໍ້ ເພື່ອລົງໃນຫ້ອງກິດຈະກໍາການຮຽນ-ການສອນຂອງບົດສອນນັ້ນໆ.

ງ. ເວລາ

ໃນບົດຮຽນໜຶ່ງຈະໃຊ້ເວລາໜ້ອຍ ຫຼື ຫຼາຍແມ່ນຂຶ້ນກັບບົດຮຽນນັ້ນສ່ວນເວລາໃນຊົ່ວໂມງສອນໜຶ່ງມີພຽງແຕ່ 50 ນາທີ ເວລາຄູແຕ່ງບົດສອນຄູຕ້ອງສັງເກດແລ້ວແບ່ງປັນເວລາໃສ່ໃຫ້ເໝາະສົມໃນບົດສອນນັ້ນໂດຍລວມ, ໃນນັ້ນແບ່ງເວລາຍ່ອຍໃສ່ແຕ່ລະກິດຈະກ ໍາຂອງບົດໃຫ້ເໝາະ ສົມກັບຄວາມເປັນຈິງ.

ຈ. ສື່ການສອນ

ສື່ການສອນທີ່ຈະຕ້ອງນໍາໃຊ້ແມ່ນຮູບພາບ, ຮູບແຕ້ມ, ວັດຖຸຈິງ ເຊິ່ງຈະຕ້ອງເລືອກມາໃຊ້ໃຫ້ເໝາະສົມກັບເນື້ອໃນວິຊາ ຫຼື ເນື້ອໃນຂອງບົດການ, ຈະໃຊ້ຫຍັງຄູກໍ່ຕ້ອງກະກຽມໃຫ້ພ້ອມ ແລະ ທົດລອງໃຊ້ກ່ອນ ເພາະການສອນມັນຈະຊ່ວຍໃຫ້ການສອນຂອງຄູບັນລຸຜົນຢ່າງມີປະສິດທິພາບ.

ດັ່ງນັ້ນ, ເວລາກຽມບົດກອນຄູ່ຕ້ອງຂຽນສື່ທີ່ຈະໃຊ້ແຕ່ລະກິດຈະກໍາໃນຫ້ອງສື່ຢ່າງເໝາສົມ ແລະ ລະບຸຊື່ຂອງສືທີ່ຈະໃຊ້ໃຫ້ຊັດເຈນ ເຊັ່ນ ຕາຕະລາງ, ແຜນພູມ, ບັດຄໍາ, ຮູບພາບ, ເທັບ, ວິທະຍຸ, ວາລະສານ, ໜັງສືພິມ, ຫຸ່ນຈໍາລອງ, ວັດຖຸຈິງ ແລະ ອື່ນໆ.

ບັນດາປະເພດສື່ດັ່ງກ່າວ ມັນສາມາດຊ່ວຍໃຫ້ນັກຮຽນເກີດຄວາມສົນໃຈໃນການຮຽນຫຼາຍຂຶ້ນເພາະຜູ້ຮຽນຈະໃຊ້ປະສາດສໍາຜັດ, ໄດ້ເຄື່ອນໄຫວຈັບບາຍເຫດການ ຫຼື ການຟັງສຽງ. ຊ່ວຍໃຫ້ນັກຮຽນເຂົ້າໃຈເນື້ອໃນເລື່ອງທີ່ຄູສອນໄດ້ງ່າຍ ແລະ ໄວຂຶ້ນ, ຮູ້ເນື້ອໃນຫຼາຍຂຶ້ນພ້ອມທັງໃຊ້ ຄວາມຄິດພິຈາລະນາຢ່າງມີເຫດຜົນ.

ສື່ການສອນມີສ່ວນຊ່ວຍກະຕຸກຊຸກຍູ້ ຫຼື ດຶງດູດຄວາມສົນໃຈຂອງນັກຮຽນໃຫ້ຢາກຮຽນ, ຢາກເຂົ້າຮ່ວມກິດຈະກໍາ ຫຼື ເຮັດໃຫ້ນັກຮຽນບໍ່ມີຄວາມເບື່ອໜ່າຍ. ບໍ່ວ່າການສອນຢູ່ໃນໄລຍະໃດໆກໍ່ຕາມ ຜູ້ສອນຄວນເຫັນຄວາມສໍາຄັນໃນການໃຊ້ສື່, ສື່ການສອນບໍ່ຈໍາເປັນແມ່ນວັດສະດຸທີ່ມີລາຄາແພງແຕ່ເປັນວັດຖຸທີ່ຫາໄດ້ງ່າຍໃນທ້ອງຖິ່ນກໍ່ໄດ້.

ສ. ການວັດ ແລະ ປະເມີນຜົນ

ຜ່ານການສອນຂອງຄູໃນບົດໜຶ່ງໆ, ຂໍ້ໜຶ່ງໆ ຫຼື ກິດຈະກໍາໜຶ່ງໆແມ່ນມີຄວາມຈໍາເປັນຕ້ອງວັດ ແລະ ປະເມີນຜົນເພາະຈະໄດ້ຮູ້ວ່າ ການສອນສໍາເລັດຜົນຕາມຈຸດປະສົງທີ່ວາງໄວ້ ຫຼື ບໍ່. ດັ່ງນັ້ນ, ການກໍານົດວິທີການວັດ ແລະ ປະເມີນ

ຜົນຕ້ອງຊັດເຈນ ແລະ ສິ່ງສຳຄັນຈະຕ້ອງຕິດພັນກັບຈຸດປະສົງ ແລະ ກິດຈະກຳການຮຽນ-ການສອນອີກດ້ວຍ.ໝາຍຄວາມວ່າການຈັດກິດຈະກຳການຮຽນ-ການສອນບັນລຸຈຸດປະສົງຄົບຖ້ວນ ຫຼື ບໍ່ຕ້ອງອາໄສວິທີການວັດຜົນເພື່ອນຳໄປສູ່ການປະເມີນຜົນທີ່ໄດ້ຮັບນັ້ນເອງ. ການວັດໃນວິຊາພາສາລາວຈະເນັ້ນເລື່ອງເນື້ອໃນ ແລະ ຫຼັກການ, ສ່ວນການວັດຜົນໃນ ວິຊາພາສາລາວ-ວັນນະຄະດີຈະເນັ້ນທາງດ້ານທັກສະ ແລະ ເນື້ອໃນ, ວິທີວັດ ແລະ ປະເມີນຜົນທີ່ໄດ້ຮັບຜົນດີໂດຍທົ່ວໄປແລ້ວຈະມີຢູ່ 4 ວິທີຄື ການສັງເກດ, ການຊັກຖາມ, ການທົດສອບ, ການເຮັ ບົດບັນທຶກ ຫຼື ການເຮັດບົດລາຍງານ

ຊ.ເອກະສານອ້າງອີງ

ເອກະສານອ້າງອີງ ໝາຍເຖິງເອກະສານທີ່ຄູເອົາມາປະກອບໃນການຮຽນ ຫຼື ແຕ່ງບົດສອນ

**4.4 ຂັ້ນຕອນການຈັດກິດຈະກຳການສອນ**

ນອກຈາກອົງປະກອບຂອງແຜນການສອນລະດັບບົດຮຽນແລ້ວສິ່ງທີ່ຄູຈະຕ້ອງໄດ້ເອົາໃຈ ໃສ່ ແລະ ຮັບຮູ້ກຳແໜ້ນຕື່ມອີກຢູ່ໃນແຜນການສອນ ຫຼື ເອີ້ນວ່າບົດສອນນັ້ນເພິ່ນຍັງຈັດແບ່ງອອກເປັນແຕ່ລະຂັ້ນຕອນເຂົ້າໃສ່ຕາມຮ່າງແຜນການສອນ ຂັ້ນຕອນຂອງແຜນການສອນລະດັບບົດຮຽນມີ 4 ຂັ້ນຕອນດັ່ງລຸ່ມນີ້

ກ.ຂັ້ນນຳເຂົ້າສູ່ບົດຮຽນ

ຂັ້ນນີ້ເປັນຂັ້ນເລີ່ມຕົ້ນເຂົ້າສູ່ການຮຽນ-ການສອນໃນຊົ່ວໂມງສອນໜຶ່ງໆ. ສະນັ້ນ, ຄູສອນ ໄດ້ນຳເອົາບັນຫາຕ່າງໆເພື່ອມາສ້າງຄວາມຈູງໃຈໃຫ້ແກ່ນັກຮຽນ, ເຮັດໃຫ້ນັກຮຽນມີຄວາມເບີກບານມ່ວນຊື່ນ, ມີຄວາມສົນໃຈ ແລະ ມີຄວາມຕັ້ງໃຈຕິດຕາມການສອນຂອງຄູ ແລະ ກຽມພ້ອມເຮັດກິດຈະກຳໃນຂັ້ນຕອນຕໍ່ໄປ. ໃນຂັ້ນຕອນນີ້ໂດຍທົ່ວໄປແລ້ວເພິ່ນເຄີຍໃຊ້ມີດັ່ງນີ້ :

- ຄູ ແລະ ນັກຮຽນທຳຄວາມເຄົາລົບເຊິ່ງກັນ ແລະ ກັນ.
- ກວດກາຈຳນວນພົນ
- ຄູສະເໜີຈຸດພິເສດຖ້າເປັນຊົ່ວໂມງທຳອິດຂອງການສອນວິຊານັ້ນ.
- ກວດຄວາມເປັນລະບຽບ ແລະ ຄວາມພ້ອມຂອງນັກຮຽນ.
- ຕັ້ງຄຳຖາມທົບທວນຄືນບົດຮຽນໃນຊົ່ວໂມງກ່ອນ ( ຖ້າມີ )
- ຄູນຳເອົາເລື່ອງຕ່າງໆມາເລົ່າສູ່ນັກຮຽນຟັງ ຫຼື ນຳພານັກຮຽນຫຼິ້ນເກມຕາມຄວາມເໝາະສົມກັບເນື້ອໃນບົດຮຽນ.

ຂ. ຂັ້ນຕອນການສອນ

ໃນຂັ້ນຕອນນີ້ ຄູສອນຈະໄດ້ວາງເນື້ອໃນບົດຮຽນແຕ່ລະຂໍ້ລົງໃສ່ ໂດຍມີການສັບຊ້ອນລະອຽດບໍ່ໃຫ້ເນື້ອໃນສັບສົນ, ເຮັດແນວນັ້ນ ໃນເວລາສອນຈະເຮັດໃຫ້ຄູສອນນຳເອົາເນື້ອໃນໄປສະເໜີຕໍ່ນັກຮຽນໄດ້ຢ່າງເປັນລະບົບ ແລະ ຕໍ່ເນື່ອງກັນດີ ເມື່ອຄູສອນວາງເນື້ອໃນແຕ່ລະຫົວຂໍ້ລົງແລ້ວ ຄູຍັງອີງໃສ່ເນື້ອໃນແຕ່ລະຂໍ້ບົດຮຽນເພື່ອວາງກິດຈະກຳ ແລະ ສື່ການສອນລົງໃສ່ຫ້ອງກິດຈະກຳການຮຽນ-ການສອນ ແລະ ຫ້ອງອຸປະກອນການສອນ (ຫ້ອງສື່) ຂຽນຈັດວາງໄວ້ໃຫ້ຖືກແຕ່ລະຂໍ້ຕາມລຳດັບຈົນຈົບບົດ.

ເວລາສອນຕົວຈິງຢູ່ໃນຫ້ອງ ຄູສອນຕ້ອງອີງໃສ່ເນື້ອໃນບົດຮຽນແຕ່ລະຂໍ້, ອີງໃສ່ກິດຈະກາ ແລະ ສື່ການສອນທີ່ໄດ້ວາງໄວ້ ເພື່ອໃຫ້ນັກຮຽນໄດ້ປະກອບສ່ວນເຮັດວຽກນຳຄູໃນຊົ່ວໂມງນັ້ນໆ.

ຄ. ຂັ້ນສະຫຼຸບ

ໃນນີ້ພາຍຫຼັງຄູສະເໜີບົດຮຽນແຕ່ລະຂໍ້ໝົດແລ້ວ ເພື່ອຢາກໃຫ້ນັກຮຽນຈື່ຈຳກຳແໜ້ນເນື້ອໃນສຳຄັນຕົ້ນຕໍຂອງບົດຮຽນນັ້ນ ຄູສອນຕ້ອງໄດ້ສະຫຼຸບຄືນບົດຮຽນທີ່ສອນມາໂດຍຫຍໍ້ ແນ່ໃສ່ໃຫ້ ນັກຮຽນເກັບກຳບົດຮຽນໄດ້ຍາວນານ.

ການສະຫຼຸບບົດຮຽນຄູສອນ ລຕ້ອງອີງໃສ່ຈຸດປະສົງລະດັບຄາດໝາຍທີ່ຄູວາງໄວ້ໃນບົດສອນ ເພື່ອມາສະຫຼຸບບົດຮຽນມີ 2 ວິທີດັ່ງນີ້ :

ວິທີທີ 1 ຄູສະຫຼຸບເນັ້ນໜັກບົດຮຽນຄືນໃຫ້ນັກຮຽນຟັງ

ວິທີທີ 2 ນັກຮຽນ ແລະ ຄູພ້ອມກັນສະຫຼຸບເນື້ອໃນທີ່ໄດ້ຮຽນ-ສອນໂດຍເນັ້ນໜັກເພີ່ມເຕີມຈຸດທີ່ສຳຄັນອີກ

ງ. ຂັ້ນວັດຜົນ

ຂັ້ນວັດຜົນການຮຽນ-ການສອນ ໃນຊົ່ວໂມງໜຶ່ງໆນັ້ນໃນທ້າຍຊົ່ວໂມງຮຽນຄູສອນຈະຕ້ອງເຮັດການວັດເບິ່ງຄວາມຮັບຮູ້, ຄວາມເຂົ້າໃຈຂອງນັກຮຽນຕໍ່ກັບເນື້ອໃນບົດຮຽນ, ເຊິ່ງຄູຕ້ອງມີການກຳນົດເງື່ອນໄຂໃຫ້ຄະແນນຕາມເນື້ອໃນຂອງຂໍ້ທົດສອບແລ້ວແຈ້ງໃຫ້ນັກຮຽນຮູ້ລ່ວງໜ້າ.

ການວັດ ຄູສອນຕ້ອງວາງຄຳຖາມໃດໜຶ່ງ ທີ່ມີລັກສະນະກວມລວມເອົາເນື້ອໃນທີ່ເປັນໃຈກາງຂອງບົດຮຽນເພື່ອມາຖາມນັກຮຽນແລ້ວໃຫ້ນັກຮຽນຕອບຄຳຖາມທີ່ຄູຕັ້ງຂຶ້ນ, ຈາກນັ້ນຄູສະຫຼຸບການຕອບຄຳຖາມຂອງນັກຮຽນ, ໃຫ້ຄະແນນຕາມຄວາມເໝາະສົມ.

ຫຼັງຈາກນັ້ນແລ້ວ ຄູຈະຕ້ອງໄດ້ມອບວຽກໃດໜຶ່ງໃຫ້ນັກຮຽນໄປເຮັດຢູ່ເຮືອນ.ໃນຊົ່ວໂມງໜ້າຄູສອນຈະໄດ້ກວດກາຄືນບົດຮຽນທີ່ຮຽນໃນຊົ່ວໂມງກ່ອນ ແລະ ເປັນວຽກທີ່ກຽມຮັບໃຊ້ການຮຽນ-ການສອນໃນບົດຮຽນຕໍ່ໄປ. ການວັດຜົນມັນມີຄວາມສຳຄັນຢ່າງຍິ່ງເພາະວ່າຄູສອນຈະໄດ້ຮັບຮູ້ໄດ້ຜົນຂອງການ ຮຽນ-ການສອນໃນຊົ່ວໂມງຕໍ່ໄປ.

ວິທີຂຽນແຜນການລະດັບບົດຮຽນບໍ່ມີຮູບແບບຕາຍຕົວຂຶ້ນຢູ່ກັບໜ່ວຍງານ ຫຼື ສະຖານທີ່ເຝິກຫັດແຕ່ລະແຫ່ງຈະຄິດດັດແປງຕາມຄວາມເໝາະສົມ. ໂດຍທົ່ວໄປແລ້ວແຜນການສອນຈະຄ້າຍຄືກັນໃນທົ່ວປະເທດ ແລະ ເປັນເອກະພາບຈາກກົມສ້າງຄູເຊິ່ງປັດຈຸບັນນີ້ຮູບແບບຂອງແຜນການມີດັ່ງນີ້:

ໂຄງຮ່າງບົດສອນແບບລຽງຫົວຂໍ້

| | |
|---|---|
| ວິຊາ:.............................. | ຊັ້ນຮຽນ......... |
| ບົດທີ:........................ | ເວລາ................. |
| ຫົວບົດ:........................ | ວັນທີສອນ.............. |

I.ຈຸດປະສົງ

..................................................................................................................................

..................................................................................................................................

................................................................................................................................

II.ເນື້ອໃນ

1..............................................................

2..............................................................

3............................................................

III. ສື່ການສອນ

................................................................................................................................

..................................................................................................................................

IV.ປະເມີນຜົນ

................................................................................................................................

..............................................................................................................................

V.ກິດຈະກໍາການຮຽນ-ການສອນ

- ຂັ້ນນໍາ
- ຂັ້ນສອນ
- ຂັ້ນສະຫຼຸບ
- ຂັ້ນວັດຜົນ
- ຂັ້ນມອບວຽກບ້ານ ແລະ ຕັກເຕືອນ

| | | |
|---|---|---|
| ວັນທີ........................... | ວັນທີ............................... | ວັນທີ...................... |
| ຜູ້ອໍານວຍການໂຮງຮຽນ | ຄູປະຈໍາວິຊາ | ຜູ້ສອນ |

ໂຄງຮ່າງບົດສອນUBD

| | |
|---|---|
| ວິຊາ:............................. | ຊັ້ນຮຽນ......... |
| ບົດທີ:........................ | ເວລາ................. |
| ຫົວບົດ:........................ | ວັນທີສອນ.............. |

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ** | |
| ສ້າງເປົ້າໝາຍ G (Goal) | |
| ຄວາມເຂົ້າໃຈ: U (Understand)<br>ນັກຮຽນຈະເຂົ້າໃຈວ່າ… | ຄໍາຖາມຫຼັກ: Q (Question) |
| ຄວາມຮູ້: K (Knowledge) | ທັກສະ: S (Skill) |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| ໜ້າວຽກສິດສອນ T (Task) | ຫຼັກຖານອື່ນໆ OE (Other Evidence) |
| **ຂັ້ນຕອນ 3 - ແຜນການຮຽນ** | |
| ກິດຈະກໍາການຮຽນ L (Learning Activities) | |

ບົດສອນຕົວຢ່າງ (UbD)

ແນວຄິດຫຼັກຂອງ UBD: ໃຫ້ການຮຽນຮູ້ເກີດຂຶ້ນກັບຜູ້ຮຽນ

ຄໍາຖາມຕົ້ນຕໍທີ່ເຈົ້າ: ຄູຝຶກ/ຄູອາຈານຕ້ອງຕອບກ່ອນຈະນໍາໄປໃຊ້ UBD

| | |
|---|---|
| ຂັ້ນຕອນທີ1 : ຜົນໄດ້ຮັບທີ່ຕ້ອງການ (Desired Results) | |
| ເປົ້າໝາຍລວມ: (Goal)<br>ເປັນຫຍັງເຈົ້າຈຶ່ງສອນວິຊານີ້ ? ວິຊານີ້ແທດເໝາະກັບຊີວິດປະຈໍາວັນຂອງນັກຮຽນຄືແນວໃດ? | |
| ຄວາມເຂົ້າໃຈ: (Understanding)<br>ຈຸດປະສົງຂອງບົດນີ້ມີຫຍັງແດ່? | ຄໍາຖາມຫຼັກ (Question)<br>- ຄໍາຖາມຫຼັກທີ່ຈະຖາມນັກຮຽນນັ້ນຈະເຮັດໃຫ້ |

| | |
|---|---|
| | ນັກຮຽນຫັນມາສົນໃຈໃນຂະບວນການຮຽນຫຼືບໍ່ເພື່ອຮັບປະກັນວ່າເຂົາເຈົ້າໄດ້ຮຽນຮູ້.<br>- ທ່ານສາມາດໃຊ້ SCAMPER ເພື່ອຖາມຄຳຖາມຫຼັກ. |
| ຄວາມຮູ້ (Knowledge)<br>ເຈົ້າໃຫ້ນັກຮຽນຮູ້ຫຍັງ? ຄາດໝາຍສະເພາະດ້ານຄວາມຮູ້? ແນວຄວາມຄິດຫຼັກຂອງບົດນີ້ແມ່ນຫຍັງ? | ທັກສະ (Skills)<br>ຄາດໝາຍສະເພາະດ້ານທັກສະ? ເຈົ້າຢາກໃຫ້ນັກຮຽນເຮັດຫຍັງ? ຍາມໃດກໍໃຫ້ຄ◌ິດເຖິງທັກສະດ້ານການວິໄຈ, ປະເມີນ ແລະ ການປະດິດສ້າງ. |

| | |
|---|---|
| ຂັ້ນຕອນທີ 2 (Stage 2) ຫຼັກຖານການປະເມີນ (Evidence). | |
| ໜ້າວຽກ/ກິດຈະກຳ (Task)<br>- ອີງຕາມຄາດໝາຍດ້ານທັກສະຂອງເຂົາເຈົ້າ, ເຈົ້າຈະໃຫ້ນັກຮຽນເຮັດໜ້າວຽກ/ກິດຈະກຳຫຍັງ(ໃນເວລາກຳລັງຮຽນ) ຊຶ່ງເຈົ້າສາມາດຮູ້ໄດ້ວ່າທັກສະທີ່ເຈົ້າຕັ້ງໄວ້ນັ້ນແມ່ນໄດ້ບັນລຸ?<br>- ເຈົ້າສາມາດ GRASPS ເພື່ອສ້າງສະພາບການຮຽນຮູ້ຊຶ່ງເຈົ້າສາມາດປະເມີນໄດ້ວ່າຜູ້ຮຽນໄດ້ຮຽນຫຼືບໍ່? ເຈົ້າສາມາດໃຫ້ນັກຮຽນໃຊ້ແຜນວາດຊ່ວຍຈື່ (mindmaps). ໃນກິດຈະກຳເປັນກຸ່ມ. | ຫຼັກຖານອື່ນໆ (Other Evidence)<br>- ອີງຕາມຄາດໝາຍດ້ານທັກສະຂອງເຈົ້າ, ຍັງມີຫຼັກຖານອື່ນໆ/ຫຼືກິດຈະກຳຫຍັງອີກທີ່ເຈົ້າຈະໃຫ້ນັກຮຽນສະແດງອອກ/ເພື່ອຢັ້ງຢືນວ່າເຂົາເຈົ້າໄດ້ຮຽນຮູ້? ຕົວຢ່າງໃຫ້ວຽກບ້ານ, ຕັ້ງຄຳຖາມ, ແຕ່ງບົດສອນ. |
| **ຂັ້ນຕອນທີ 3 (Stage 3) ແຜນການສອນ** | |

**ແຜນການຮຽນ-ການສອນ**

ເຈົ້າຈະອອກແບບການສອນບົດຮຽນຂອງເຈົ້າແບບໃດທີ່ຈະຮັດໃຫ້ການຮຽນຮູ້ເກີດຂຶ້ນ?

ນັກຮຽນຈະຕ້ອງເຮັດກິດຈະກຳໃດເພື່ອຮັບປະກັນໃຫ້ນັກຮຽນໄດ້ຄວາມຮູ້ທີ່ພຽງພໍເພື່ອບັນລຸ ທັກສະທີ່ຄາດໄວ້

| | | |
|---|---|---|
| ວັນທີ............................ | ວັນທີ................................ | ວັນທີ....................... |
| ຜູ້ອຳນວຍການໂຮງຮຽນ | ຄູປະຈຳວິຊາ | ຜູ້ສອນ |

ຮ່າງບົດສອນແບບຕາຕະລາງ

ວິຊາ:............................... ຊັ້ນຮຽນ.........
ບົດທີ:........................ ເວລາ.................
ຫົວບົດ:........................ ວັນທີສອນ...............

| ຈຸດປະສົງ | ເນື້ອໃນ | ກິດຈະກຳການຮຽນ-ການສອນ | | ເວລາ | ສື່ການສອນ | ປະເມີນຜົນ |
|---|---|---|---|---|---|---|
| | | ກິດຈະກຳຄູ | ກິດຈະກຳນັກຮຽນ | | | |
| | | - ຂັ້ນນຳ<br><br>- ຂັ້ນສອນ<br><br>- ຂັ້ນສະຫຼຸບ<br><br>- ຂັ້ນວັດຜົນ<br><br>- ຂັ້ນມອບວຽກບ້ານ-ຕົກເຕືອນ | | | | |

ວັນທີ............................ ວັນທີ................................ ວັນທີ.......................
ຜູ້ອຳນວຍການໂຮງຮຽນ ຄູປະຈຳວິຊາ ຜູ້ສອນ

ໂຄງຮ່າງແຜນການສອນໄລຍະຍາວ

ວິຊາ............................

ຈຳນວນບົດ....................

ຈຳນວນຊົ່ວໂມງທັງໝົດ.........................ຕໍ່ພາກຮຽນ..........ມີ..............ອາທິດ

ຊັ້ນຮຽນ ມ.......................

| ພາກຮຽນ | ເດືອນ | ອາທິດ | ວັນທີ | ພາກ / ບົດ | ຈຳນວນຊົ່ວໂມງ | | ໝາຍເຫດ |
|---|---|---|---|---|---|---|---|
| | | | | | ອາທິດ | ບົດ | |
| | | | | | | | |

ວັນທີ............................ ວັນທີ...............................

ຜູ້ອຳນວຍການໂຮງຮຽນ ຄູປະຈຳວິຊາ

ບົດສອນ

ວິຊາ ພາສາລາວ ຊັ້ນມ1

ບົດທີ: 1 ການອ່ານ ແລະ ປະເພດຂອງການອ່ານ ເວລາ 50 ນາທີ

1.ຈຸດປະສົງ

- ເພື່ອໃຫ້ນັກຮຽນອ່ານອອກສຽງໄດ້ຖືກຕ້ອງ
- ເພື່ອໃຫ້ນັກຮຽນອ່ານຄໍາຮ້ອຍແກ້ວ ແລະ ຮ້ອຍກອງໄດ້ຊັດເຈນ ແລະ ປົກສຽງຖືກຕ້ອງຕາມວັກຕອນ

2.ເນື້ອໃນ

3.2 ການອ່ານອອກສຽງ

3.ສື່ການສອນ

- ໜັງສືພິມ, ບົດກອນ, ຈົດໝາຍ

4.ກິດຈະກໍາການຮຽນ-ການສອນ

- ຂັ້ນນໍາເຂົ້າສູ່ບົດຮຽນ ( 5 ນາທີ )

- ຄູສະເໜີ ແລະ ສົນທະນາກັບນັກຮຽນວ່າຊົ່ວໂມງຜ່ານມາເຮົາໄດ້ຮຽນກ່ຽວກັບການອ່ານໃນໃຈ

-ຕໍ່ໄປນີ້ເຮົາຈະໄດ້ຮຽນກ່ຽວກັບການອ່ານອອກສຽງ

- ຂັ້ນສອນ

- ຄູຂຽນຫົວບົດໃສ່ກະດານ

ກິດຈະກໍາທີ 1. ນໍາໃຊ້ວິທີສອນແບບລະດົມສະໝອງ (ເວລາ 45 ນາທີ)

ຂັ້ນຕອນ1 ນໍາພາການສົນທະນາ ( 5 ນາທີ)

- ຄູຕັ້ງຄໍາຖາມ
  1. ຜ່ານມາເຄີຍຜ່ານອ່ານຫຍັງແດ່? ແລະ ອ່ານແນວໃດ?
- ນັກຮຽນຕອບ
- ຄູສະຫຼຸບຄືນກ່ຽວກັບຄໍາຕອບຂອງນັກຮຽນ
- ຄູແນະນໍານັກຮຽນອ່ານເນື້ອໃນບົດຮຽນ
  2. ການອ່ານອອກສຽງແມ່ນຫຍັງ?
- ຄູແນະນໍານັກຮຽນອອກມາໃສ່ແຜນວາດທີ່ຄູກະກຽມ
- ຄູສະຫຼຸບຄືນ
  3. ການອ່ານສຽງທໍາມະດາແມ່ນອ່ານແນວໃດ?

- ຄູແນະນຳນັກຮຽນອອກມາໃສ່ແຜນວາດທີ່ຄູກະກຽມ
- ຄູສະຫຼຸບຄືນ
- ຄູແນະນຳໃຫ້ນັກຮຽນບັນທຶກໃສ່ປຶ້ມຕົນ

ກິດຈະກຳທີ2 ( 25 ນາທີ )

- ຄູແບ່ງນັກຮຽນອອກເປັນ 4 ກຸ່ມ, ກຸ່ມລະ 5 ຄົນໂດຍໃຫ້ນັກຮຽນເລືອກເອົາຮູບດອກໄມ້ທີ່ຄູກຽມມາແລ້ວເຂົ້າກຸ່ມຕາມທີ່ຕົນເລືອກ
- ຄູແນະນຳໃຫ້ແຕ່ລະກຸ່ມເລືອກຫົວໜ້າກຸ່ມ, ເລືອກຜູ້ບັນທຶກ, ເລືອກຜູ້ລາຍງານ
- ຄູຢາຍກິດຈະກຳໃຫ້ແຕ່ລະກຸ່ມ
- ຄູແນະນຳກິດຈະກຳແຕ່ລະກຸ່ມ

ກຸ່ມທີ1: ຈົດໝາຍພົວພັນວຽກງານ

- ຄຳຖາມ:1 ຈົດໝາຍພົວພັນວຽກງານສະບັບນີ້ເວົ້າເຖິງຫຍັງ?
- ຄູແນະນຳໃຫ້ແຕ່ລະກຸ່ມສະຫຼຸບດ້ວຍການນຳໃຊ້ແຜນວາດຊ່ວຍຈື່
- ໃຫ້ຕ່າງໜ້າກຸ່ມອອກມາອ່ານຈົດໝາຍໃຫ້ກຸ່ມອື່ນຟັງ

ກຸ່ມທີ2: ບົດກອນເມືອງລາວສວຍງາມຮັ່ງມີ

ຄຳຖາມ: 1. ບົດກອນ 1 ບາດນີ້ມີເນື້ອໃນເວົ້າເຖິງຫຍັງ?

- ຄູແນະນຳໃຫ້ແຕ່ລະກຸ່ມສະຫຼຸບດ້ວຍການນຳໃຊ້ແຜນວາດຊ່ວຍຈື່
- ໃຫ້ຕ່າງໜ້າກຸ່ມອອກມາອ່ານບົດກອນໃຫ້ກຸ່ມອື່ນຟັງ

ກຸ່ມທີ3: ໜັງສືສະເໜີ

- ຄູແນະນຳໃຫ້ແຕ່ລະກຸ່ມສະຫຼຸບດ້ວຍການນຳໃຊ້ແຜນວາດຊ່ວຍຈື່
- ໃຫ້ຕ່າງໜ້າກຸ່ມອອກມາອ່ານໜັງສືສະເໜີໃຫ້ກຸ່ມອື່ນຟັງ

+ ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມຕາງໜ້າອອກມາລາຍງານ

- ຄູແນະນຳກຸ່ມອື່ນຕິດຕາມ ແລະ ປະກອບຄຳເຫັນ
- ຄູສະຫຼຸບຄືນການລາຍງານຂອງແຕ່ລະກຸ່ມວ່າການອ່ານອອກສຽງຊັດເຈນ ແລະ ຖືກຕ້ອງຕາມວັກຕອນ

+ ຂັ້ນສະຫຼຸບ ( 5 ນາທີ )

- ຄູສະຫຼຸບຄືນກ່ຽວກັບຄວາມແຕກຕ່າງລະຫວ່າງການອ່ານອອກສຽງລະຫວ່າງຄຳຮ້ອຍແກ້ວ ແລະ ຮ້ອຍກອງ

+ ຂັ້ນວັດຜົນ: ( 5 ນາທີ )

ຄູຕັ້ງຄຳຖາມ:1. ຄູໃຫ້ນັກຮຽນ1 ຄົນອອກມາອ່ານຈົດໝາຍ?

| | | |
|---|---|---|
| ວັນທີ............................ | ວັນທີ................................ | ວັນທີ....................... |
| ຜູ້ອຳນວຍການໂຮງຮຽນ | ຄູປະຈຳວິຊາ | ຜູ້ສອນ |

## ບົດສອນ

**ວິຊາ: ພາສາລາວ** ຊັ້ນ ມ5

**ບົດທີ 14 ການສຶກສາຄຳສັບ** ເວລາ 2 ຊົ່ວໂມງ

<table>
<tr><td colspan="2">ຂັ້ນຕອນທີ I: ຜົນຮັບທີ່ຕ້ອງການ</td></tr>
<tr><td colspan="2">❖ ເປົ້າໝາຍລວມ<br>- ເພື່ອໃຫ້ນັກຮຽນເກີດມີຄວາມຮັກຮັກໃນພາສາລາວ<br>- ເພື່ອໃຫ້ນັກຮຽນມີຄວາມເຂົ້າໃຈ ແລະ ອະທິບາຍຄວາມໝາຍຂອງການສຶກສາຄຳສັບ, ຄວາມສຳຄັນຂອງການສຶກສາຄຳລັກຊະນະສະເພາະຂອງຄຳ, ປະເພດຄວາມໝາຍຂອງຄຳ, ຄວາມໝາຍຂອງຄຳ, ກ່ຽວກັບຂອງການກະຈາຍ, ຄຳທີ່ມີຄວາມໝາຍ, ຄຳທີ່ມີຄວາມໝາຍກົງກັນຂ້າມ, ຄຳທີ່ມີຫຼາຍຄວາມ ໝາຍໃກ້ກັນ ແລະ ວັດຈະນານຸກົມ<br>- ເພື່ອພັດທະນາຄວາມຮູ້ ແລະ ນຳໃຊ້ເຂົ້າໃນຊີວິດປະຈາວັນ.</td></tr>
<tr><td>❖ ຄວາມເຂົ້າໃຈ<br>- ນັກຮຽນບອກຄວາມໝາຍຂອງການສຶກສາຄຳສັບ<br>- ນັກຮຽນບອກຄວາມສຳຄັນຂອງການສຶກສາຄຳສັບ<br>- ນັກຮຽນອະທິບາຍລັກຊະນະສະເພາະຂອງຄຳ<br>- ນັກຮຽນອະທິບາຍປະເພດຄວາມໝາຍຂອງຄຳ<br>- ນັກຮຽນອະທິບາຍການກະຈາຍຄວາມໝາຍຂອງຄຳ<br>- ນັກຮຽນອະທິບາຍຄຳທີ່ມີຫຼາຍຄວາມໝາຍ<br>- ນັກຮຽນອະທິບາຍຄຳທີ່ມີຄວາມໝາຍກົງກັນຂ້າມ<br>- ນັກຮຽນອະທິບາຍຄຳທີ່ມີຄວາມໝາຍໃກ້ກັນ<br>- ນັກຮຽນນຳໃຊ້ວັດຈະນານຸກົມ</td><td>ຄຳຖາມຫຼັກ<br>1. ການສຶກສາຄຳສັບມີຄວາມໝາຍແນວໃດ?<br>2. ການສຶກສາຄຳສັບມີຄວາມສຳຄັນຄືແນວໃດ?<br>3. ລັກຊະນະສະເພາະຂອງຄຳມີຄືແນວໃດ?<br>4. ປະເພດຄວາມໝາຍຂອງຄຳມີຄືແນວໃດ?<br>5. ການກະຈາຍຄວາມໝາຍຂອງຄຳມີແນວໃດ?<br>6. ຄຳທີ່ມີຫຼາຍຄວາມໝາຍແມ່ນຄຳແນວໃດ?<br>7. ຄຳທີ່ມີຄວາມໝາຍກົງກັນຂ້າມແມ່ນຄຳແນວໃດ?<br>8. ຄຳທີ່ມີຄວາມໝາຍໃກ້ກັນແມ່ນຄຳແນວໃດ?<br>9. ວັດຈະນານຸກົມມີຄວາມໝາຍແນວໃດ ?</td></tr>
<tr><td>❖ ດ້ານຄວາມຮູ້<br>• ນັກຮຽນຮູ້<br>- ຄວາມໝາຍຂອງການສຶກສາຄຳສັບ<br>- ຄວາມສຳຄັນຂອງການສຶກສາຄຳສັບ<br>- ລັກຊະນະສະເພາະຂອງຄຳ</td><td>❖ ທັກສະ<br>• ນັກຮຽນສາມາດ<br>- ອະທິບາຍຄວາມໝາຍຂອງການສຶກສາຄຳສັບໄດ້.<br>- ອະທິບາຍຄວາມສຳຄັນຂອງການສຶກສາຄຳສັບໄດ້.<br>- ອະທິບາຍລັກຊະນະສະເພາະຂອງຄຳໄດ້.</td></tr>
</table>

| | |
|---|---|
| - ປະເພດຄວາມໝາຍຂອງຄຳ<br>- ການກະຈາຍຄວາມໝາຍຂອງຄຳ<br>- ຄຳທີ່ມີຫຼາຍຄວາມໝາຍ<br>- ຄຳທີ່ມີຄວາມໝາຍກົງກັນຂ້າມ<br>- ຄຳທີ່ມີຄວາມໝາຍໃກ້ກັນ<br>- ວັດຈະນານຸກົມ | - ອະທິບາຍປະເພດຄວາມໝາຍຂອງຄຳໄດ້.<br>- ອະທິບາຍກ່ຽວກັບຂອງການກະຈາຍຄວາມໝາຍຂອງຄຳໄດ.<br>- ອະທິບາຍຄຳທີ່ມີຫຼາຍຄວາມໝາຍໄດ້.<br>- ອະທິບາຍຄຳທີ່ມີຄວາມໝາຍກົງກັນຂ້າມໄດ້.<br>- ອະທິບາຍຄຳທີ່ມີຫຼາຍຄວາມໝາຍໃກ້ກັນໄດ້.<br>- ອະທິບາຍຄວາມໝາຍຂອງວັດຈະນານຸກົມໄດ້. |
| **ຂັ້ນຕອນທີ II: ຫຼັກຖານໃນການປະເມີນ** | |
| ❖ **ໜ້າວຽກທີ່ປະຕິບັດ**<br>- ນັກຮຽນສຶກສາຕາມປຶ້ມຕຳລາ<br>- ສົນທະນາຖາມ - ຕອບ<br>- ຈັດກິດຈະກຳກຸ່ມ<br>- ນັກຮຽນສະຫຼຸບບົດຮຽນຮ່ວມກັບຄູ<br>- ປະກອບແຜນວາດຊ່ວຍຈື່ | ❖ **ຫຼັກຖານອື່ນໆ**<br>- ຜົນຈາກການການຕອບຄຳຖາມ<br>- ສັງເກດການມີສ່ວນຮ່ວມຂອງນັກ<br>- ສັງເກດພຶດຕິກຳຂອງນັກຮຽນ<br>- ຜົນຈາກການຄົ້ນຄວ້າບົດຮຽນ |

**ຂັ້ນຕອນທີ III: ກິດຈະກຳການຮຽນ-ການສອນ**

**ຂັ້ນນຳ (ເວລາ 10 ນາທີ)**

- ຄູ ແລະ ນັກຮຽນທຳຄວາມເຄົາລົບກັນໃນຫ້ອງ
- ກວດກາຄວາມເປັນລະບຽບພາຍໃນຫ້ອງ
- ນັກຮຽນລາຍງານຈຳນວນຄົນຂາດໃນຫ້ອງ........ຄົນ, ຍິງ......ຄົນ, ຂາດ......ຄົນ
- ຄູສະເໜີຊື່ ແລະ ຈຸດພິເສດ (ຖ້າເປັນຄູໃໝ່)
- ຄູສະເໜີແຂກເຂົ້າຮ່ວມ (ຖ້າມີ)

❖ **ທວນຄືນບົດຮຽນເກົ່າ**

**ຄຳຖາມ1:** ຄຳ ມີຄວາມໝາຍແນວໃດ?

- ຄູໃຫ້ນັກຮຽນຕອບ 2-3 ນ້ອງ
- ຄູໃຫ້ນັກຮຽນຕົບມືຊົມເຊີຍໝູ່ເພື່ອນທີ່ຕອບ
- ຄູສະຫຼຸບ ແລະ ອະທິບາຍບົດຮຽນຄືນສູ່ນັກຮຽນຟັງ

**ຄຳຕອບ:** ຄຳ ຫຼື ຄຳສັບ ແມ່ນສຽງທີ່ຄົນເຮົາເປັ່ງອອກຈາກປາກທີ່ມີຄວາມໝາຍຢ່າງໃດຢ່າງໜຶ່ງຖ້າສຽງຄົນເຮົາເປັ່ງອອກແຕ່ບໍ່ມີຄວາມໝາຍນັ້ນບໍເອີ້ນວ່າຄຳສັບໄດ້ຄຳໜຶ່ງອາດມີໜຶ່ງພະຍາງ ຫຼື ຫຼາຍພະຍາງ.

❖ **ການນລົ່ງວເຂົ້າສູ່ບົດຮຽນໃໝ່**

**ຄຳຖາມ:** ພວກນ້ອງເຄີຍອ່ານອະທິບາຍສັບ ຫຼື ຄຳສັບບໍ່?

- ຄູໃຫ້ນັກຮຽນຕອບ 2-3 ຄົນ
- ຫຼັງຈາກນັກຮຽນຕອບແລ້ວຄູຍ້ອງຍໍຊົມເຊີຍພ້ອມສະຫຼຸບຄຳຕອບ

**ຕອບ:** ເຄີຍ, ສະນັ້ນມື້ນີ້ຄູຈະພາພວກເຮົາມາຮຽນກ່ຽວກັບການສຶກສາຄຳສັບ.

**ຂັ້ນສອນ  (ເວລາ 165 ນາທີ)**

- ຄູແບ່ງກະດານອອກເປັນ 2 ສ່ວນ
- ຄູຂຽນຫົວບົດໃສ່ກະດານ

**ວິຊາ: ພາສາລາວ**

**ບົດທີ 14 ຄວາມໝາຍຂອງການສຶກສາຄຳສັບ**

**1.ຄວາມໝາຍຂອງການສຶກສາຄຳສັບ**

***ກິດຈະກຳທີ1:*** ສົນທະນາຖາມຕອບ

**ຄຳຖາມ1:** ການສຶກສາຄຳສັບມີຄວາມໝາຍແນວໃດ?

- ຄູໃຫ້ນັກຮຽນຄົ້ນຄວ້າບົດຮຽນຕາມປຶ້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕອບ 2-3 ຄົນ,
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

**ຕອບ:** ຄຳແມ່ນຫົວໜ່ວຍຄວາຄິດໜຶ່ງທີ່ບົ່ງບອກສິ່ງຂອງ, ປະກົດການ, ສະພາບ, ລັກສະນະ ຫຼື ການເຄື່ອນໄຫວໃດໜຶ່ງເຊິ່ງສະແດງອອກດ້ວຍສຽງເວົ້າຂອງມະນຸດ, ມະນຸດໃຊ້ສຽງທີ່ເປັນຄຳມີຄວາມໝາຍສຳລັບຕິດຕໍ່ສື່ສານກັນ.

**2.ຄວາມສຳຄັນຂອງການສຶກສາຄຳສັບ**

***ກິດຈະກຳທີ1:*** ສົນທະນາຖາມຕອບ

**ຄຳຖາມ1:** ການສຶກສາຄຳສັບມີຄວາມໝາຍແນວໃດ?

- ຄູໃຫ້ນັກຮຽນຄົ້ນຄວ້າບົດຮຽນຕາມປຶ້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕອບ 2-3 ຄົນ,
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

**ຕອບ:** ຄຳເປັນສິ່ງປະກອບທີ່ສຳຄັນຂອງພາສາສຳລັບໃຊ້ເພື່ອຕິດຕໍ່ສື່ສານຄວາມນຶກຄິດສະແດງຄວາມຮູ້ສຶກ, ບອກຈຸດປະສົງລະຫວ່າງຄົນກັບຄົນ ຄຳ ແມ່ນຫົວໜ່ວຍຄວາມຄິດໜຶ່ງທີ່ມີຄວາມໝາຍເຊິ່ງໃຊ້ສຳລັບຕິດຕໍ່ສື່ສານເພື່ອບອກ, ສັ່ງ, ຂໍຮ້ອງ, ຫຼື ສະແດງຄວາມຄິດໃດໜຶ່ງ.

**3.ລັກສະນະສະເພາະຂອງຄຳ**

***ກິດຈະກຳທີ1:*** ສົນທະນາຖາມຕອບ

**ຄຳຖາມ3:** ລັກສະນະຂອງຄຳມີຄືແນວໃດ?

- ຄູໃຫ້ນັກຮຽນຄົ້ນຄວ້າບົດຮຽນຕາມປຶ້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕອບ 2-3 ຄົນ,
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

**ຕອບ:** ມີລັກສະນະດັ່ງນີ້:

**1)** ຄຳຕ້ອງມີສຽງ ແລະ ມີຄວາມໝາຍສະເພາະໃດໜຶ່ງກຳນົດໃຫ້ການປັບສຽງບໍ່ມີຄວາມໝາຍຈະບໍ່ຖືເປັນຄຳໜຶ່ງໄດ້.

2) ສຽງຂອງຄຳໜຶ່ງໆມີລັກສະນະຄົງທີ່ ຫຼື ບໍ່ໃຫ້ປ່ຽນແປງ, ຫາກໃຫ້ເກີດມີການປ່ຽນແປງຈະກາຍເປັນຄຳອື່ນ ຫຼື ບໍ່ມີຄວາມໝາຍກໍ່ໄດ້

3) ຄຳແຕ່ລະຄຳຕ້ອງມີໜ້າທີ່ສະເພາະຄື: ອາດມີໜ້າທີ່ເປັນຄຳນາມ, ຄຳກຳມະ, ຄຳແທນນາມ, ຄຳບຸບພະບົດ, ຄຳຄຸນນາມ, ຄຳຊີ້ບອກ, ຄຳຊ່ວຍກຳມະຢ່າງໃດຢ່າງໜຶ່ງເຊັ່ນ: ໄປ, ມາ, ກິນ, ນອນ, ເຮັດໜ້າທີ່ເປັນຄຳກຳມະ; ກາ, ນາ, ນົກ,ເດືອນ, ດາວ. ເຮັດໜ້າທີ່ເປັນຄຳນາມ; ເທິງ, ລຸ່ມ, ຂ້າງ, ກ້ອງ ເຮັດໜ້າທີ່ກປັນຄຳບຸບພະບົດ

**4.ປະເພດຄວາມໝາຍຂອງຄຳ**

**ກິດຈະກາທີ1:** ສົນທະນາຖາມຕອບ

**ຄຳຖາມ**: ປະເພດຂອງຄຳມີແວໃດແດ່?

- ຄູໃຫ້ນັກຮຽນຈັດກຸ່ມເປັນ 2 ກຸ່ມ ຄົ້ນຄວ້າບົດຮຽນຕາມປື້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕາງໜ້າກຸ່ມລາຍງານ
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

**4.1 ຄວາມໝາຍທີ່ເປັນຮູບປະທຳ**

ແມ່ນກ່ຽວກັບສິ່ງທີ່ປະຈັກຕາ, ຈັບບາຍສຳຜັດໄດ້ເຊັ່ນ: ດິນ, ນໍ້າ, ລົມ, ໄຟ, ເດືອນ, ດາວ......

**4.2 ຄວາມໝາຍທີ່ເປັນນາມມະທຳ**

ແມ່ນຄວາມໝາຍທີ່ກຳນົດເອົາສຳລັບເອີ້ນໃຫ້ອາການ, ປະກົດການ, ຄວາມຮູ້ສຶກ, ຄວາມນຶກຄິດທີ່ເປັນອັນບໍ່ເປັນຕົນໂຕບໍ່ສາມາດເຫັນ, ສຳຜັດ ຫຼື ຈັບບາຍໄດ້ເຊັ່ນ: ມ່ວນ, ອອນຊອນ, ງາມ, ດີ, ຢາກ, ເດັ່ນ....

**5.ການກະຈາຍຄວາມໝາຍຂອງຄຳ**

**ກິດຈະກຳທີ1:** ສົນທະນາຖາມຕອບ

**ຄຳຖາມ:** ການກະຈາຍຄວາມໝາຍຂອງຄຳມີຄືແນວໃດ?

- ຄູໃຫ້ນັກຮຽນຈັດກຸ່ມເປັນ 2 ກຸ່ມ ຄົ້ນຄວ້າບົດຮຽນຕາມປື້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕາງໜ້າກຸ່ມລາຍງານ
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

ການກະຈາຍຄວາມໝາຍຂອງຄຳ ແມ່ນການນຳໃຊ້ຄວາມໝາຍພື້ນຖານຂອງຄຳໜຶ່ງໆໄປໃຊ້ໃຫ້ສິ່ງອື່ນພາໃຫ້ເກີດຄວາມໝາຍໃໝ່ ຫຼື ໄດ້ຄຳໃໝ່ຫຼາຍຂຶ້ນ

ຕົງຢ່າງ: ຕີນໂຕະ, ຕີນຕັ່ງ, ຕີນພູ, ຕີນບ້ານ, ຕີນຜົມ...

**5.ຄຳທີ່ມີຫຼາຍຄວາມໝາຍ**

**ກິດຈະກຳ** ສົນທະນາຖາມຕອບ

**ຄາຖາມ:** ຄຳມີຫຼາຍຄວາມໝາຍແມ່ນຄຳແນວໃດ?

- ຄູໃຫ້ນັກຮຽນຈັດກຸ່ມເປັນ 2 ກຸ່ມ ຄົ້ນຄວ້າບົດຮຽນຕາມປື້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕາງໜ້າກຸ່ມລາຍງານ
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

**ຕອບ:** ແມ່ນຄຳທີ່ມີນັບແຕ່ສອງຄວາມໝາຍຂຶ້ນໄປເຊິ່ງບາງຄວາມໝາຍອາດເປັນຊະນິດດຽວກັນ ຫຼື ບາງຄວາມໝາຍອາດເປັນຊະນິດຕ່າງກັນ

ຕົວຢ່າງ: ຄຳວ່າງາ ມີຄວາມໝາຍຄື ງາຊ້າງ, ງາໄຊ, ງາສ້ອມ.

**6.ຄຳທີ່ມີຄວາມໝາຍກົງກັນຂ້າມ**

**ກິດຈະກຳ** ສົນທະນາຖາມຕອບ

**ຄາຖາມ:** ຄຳມີຫຼາຍຄວາມໝາຍແມ່ນຄຳແນວໃດ?

- ຄູໃຫ້ນັກຮຽນຈັດກຸ່ມເປັນ 2 ກຸ່ມ ຄົ້ນຄວ້າບົດຮຽນຕາມປື້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕາງໜ້າກຸ່ມລາຍງານ
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

ແມ່ນຄຳທີ່ມີຄວາມໝາຍປີ້ນກັນຫາກເບິ່ງແບບໜຶ່ງຄຳປະເພດນີ້ຖືເປັນຄຳຄູ່ກັນ ແຕ່ຄວາມໝາຍກົງກັນຂ້າມກັນເຊັ່ນ: ຍາວ ແລະ ສັ້ນ, ຮ້ອນ ແລະ ເຢັນ, ຂີ້ລ້າຍ ແລະ ງາມ, ສູງ ແລະ ຕ່ຳ, ນ້ອຍ ແລະ ໃຫຍ່

**7.ຄຳທີ່ມີຄວາມໝາຍໃກ້ກັນ**

**ກິດຈະກຳ** ສົນທະນາຖາມຕອບ

**ຄາຖາມ:** ຄຳທີ່ມີຄາວມໝາຍໃກ້ກັນແມ່ນຄຳແນວໃດ?

- ຄູໃຫ້ນັກຮຽນຈັດກຸ່ມເປັນ 2 ກຸ່ມ ຄົ້ນຄວ້າບົດຮຽນຕາມປື້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕາງໜ້າກຸ່ມລາຍງານ
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

**ຕອບ:** ແມ່ນຄຳທີ່ມີອາການ ລັກສະນະສະພາບບາງຢ່າງ ຫຼື ຫຼາຍຢ່າງຄ້າຍກັນເຊັ່ນ: ເທົ່າ ແລະ ທຽບ, ຮີບ ແລະ ໂຮມ, ກວາດ ແລະ ແຜ້ວ, ຊະນິດ ແລະ ປະເພດ, ປີ້ງ ແລະ ຈີ່, ຢຸດ ແລະ ນິ້ງ...

ຕົວຢ່າງ: ລົດຄັນນີ້ຄັບມາດົນຈົນລິ້ງມືເຮົາກໍຄີຍເຫັນຊາຍຄົນນັ້ນທຽວຜ່ານໜ້າເຮືອນນີ້ເລື້ອຍໆຈົນລິ້ງໜ້າ ການໃຊ້ຄຳວ່າ ແກ່ວນ ແມ່ນໃນກໍລະນີໄດ້ຢູ່, ໄດ້ຕິດພັນຈົນເກີດການສະນິດ ແລະ ຖືກໃຈ

**ວັດຈະນານຸກົມ**

**ກິດຈະກຳ** ສົນທະນາຖາມຕອບ

**ຄຳຖາມ:** ຄຳທີ່ມີຄາວມໝາຍໃກ້ກັນແມ່ນຄຳແນວໃດ?

- ຄູໃຫ້ນັກຮຽນຈັດກຸ່ມເປັນ 2 ກຸ່ມ ຄົ້ນຄວ້າບົດຮຽນຕາມປື້ມແບບຮຽນວິຊາ: ພາສາລາວ
- ຄູໃຫ້ນັກຮຽນຕາງໜ້າກຸ່ມລາຍງານ
- ຄູຍ້ອງຍໍຊົມເຊີຍ.
- ຄູສັງລວມຄຳຕອບຂອງນັກຮຽນພ້ອມທັງສະຫຼຸບບົດຮຽນຄືນ, ຫຼັງຈາກນັ້ນຄູໃຫ້ນັກຮຽນຈົດເອົາບົດຮຽນ.

**a. ຄວາມໝາຍວັດຈະນານຸກົມ**

ວັດຈະນານຸກົມໝາຍເຖິງ ການນຳຄຳຕ່າງໆໃນພາສາໜຶ່ງມາຮວບຮວມ ໂດຍມີການກຳນົດຊະນິດຄຳ, ກຳກັບການສະກົດໃຫ້ຖືກຕ້ອງ ແລະ ສ້າງຄຳນິຍາມ, ຄວາມໝາຍ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

**b. ການປະກອບຄຳຫຼັກໃນວັດຈະນານຸກົມ**

ຄຳຫຼັກໃນວັດຈະນານຸກົມ ແມ່ນຄຳທີ່ເອົາມາເປັນຫຼັກສຳລັບໃຫ້ເອົາມາອະທິບາຍ ຫຼື ຊີ້ແຈງຄວາມໝາຍ

**c. ການຈັດໝວດຂອງຄຳ, ລຳດັບອັກສອ ແລະ ລຳດັບຄຳ**

1. ການຈັດໝວດຄຳ: ແມ່ນການນຳເອົາຄຳທີ່ມີພະຍັນຊະນະຕົ້ນຄືກັນມາລວມໄວເປັນໝວດໂດຍອີງຕາມຕົວພະຍັນຊະນະທີ່ມີໃນພາສາລາວເຊັ່ນ: ກ, ຂ, ຄ ຮອດ ຮ ຕາມລຳດັບ
2. ການຈັດລຳດັບ: ແມ່ນການຈັດລຳດັບຕົວອັກຂອງພາສາລາແຕ້ງ ຝຣັ່ງ, ອັງກິດ, ຫວຽດນາມ ແມ່ນເລີ່ມດ້ວຍອັກສອນ A ຕໍ່ໄປແມ່ນ B, C, D ສຸດທ້າຍແມ່ນ Z
3. ການຈັດລຳດັບຕົວອັກສອນໃນວັດຈະນານຸກົມພາສາລາວຜ່ານມາ
   - ການຮຽງລຳດັບ
   1. ພະຍັນຊະນະ

   ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ລ ຮ ວ ຫ ຫງ ຫຍ ໜ ໝ ຫຼ ຫວ ອ ຮ

   2. ລຳດັບຂອງສະຫຼະ
   3. ລຳດັບຂອງສະຫຼະມີ ກ ງ ຍ ດ ນ ບ ມ ວ

**ຂັ້ນສະຫຼຸບ (ເວລາ 10 ນາທີ)**

- ຄູສະຫຼຸບບົດຮຽນຄືນ
- ຄູ ແລະ ນັກຮຽນສະຫຼຸບບົດຮຽນຮ່ວມກັນດ້ວຍການແຕ້ມແຜນວາດຊ່ວຍຈື່ໃສ່ກະດານ

**ການວັດຜົນ (ເວລາ 10 ນາທີ)**

**ຄູຕັ້ງຄຳຖາມ:** ອະລິມີຄວາມໝາຍແນວໃດ?

- ໃຫ້ນັກຮຽນຕອບ 2-3 ຄົນ
- ຄູຍ້ອງຍໍຊົມເຊີຍ ພ້ອມທັງສະຫຼຸບບົດຮຽນຄືນ.

**ຕອບ:** ອະລິແມ່ນໝວດຄຳ ຫຼື ໝູ່ຄຳເວົ້າຕິດຕໍ່ກັນຕັ້ງແຕ່ສອງຄຳຂຶ້ນໄປ, ຄຳທີ່ເອົາມາເວົ້າຕິດຕໍ່ກັນນີ້ມີຄວາມໝາຍຄົນລະຢ່າງແຕ່ເມື່ອເອົາມາຕິດຕໍ່ກັນແລ້ວພັດມີຄວາມໝາຍກ່ຽວເນື່ອງຜູກພັນກັນ. ເຖິງວ່າມັນຈະມີຄວາມໝາຍຜູກພັນກັນແຕ່ກໍ່ຍັງບໍ່ທັນຄົບຖ້ວນຄືປະໂຫຍກ.

**ຂັ້ນຕັກເຕືອນ-ມອບວຽກບ້ານ (ເວລາ 5 ນາທີ)**

**ຂັ້ນມອບວຽກບ້ານ**

- ໃຫ້ນັກຮຽນສ້າງຕົວຢ່າງຂອງອະລິ ແຕ່ລະປະເພດມາຢ່າງລະ 3 ຕົວຢ່າງ.

**ຂັ້ນຕັກເຕືອນ**

- ແນະນຳນັກຮຽນໃຫ້ຈົດບົດຮຽນ
- ແນະນຳນັກຮຽນໃຫ້ເບິ່ງບົດຮຽນ
- ແນະນຳນັກຮຽນເຮັດວຽກບ້ານ
- ແນະນຳນັກຮຽນໃຫ້ຊ່ວຍວຽກພໍ່ແມ່ໃນເວລາກັບເຮືອນ

ວັນທີ...../...../............ ວັນທີ...../...../..........

ຄູປະຈຳວິຊາ ຊື່ແລະນາມສະກຸນຜູ້ແຕ່ງບົດສອນ

ບົດສອນ

ວິຊາ: ວິທີສອນພາສາລາວ1 ລະບົບ 12 + 4 ປີທີ3

ບົດທີ1 : ແນວຄິດພື້ນຖານກ່ຽວກັບການຮຽນ-ການສອນພາສາລາວ ເວລາ 3 ຊົ່ວໂມງ

<table>
<tr><td colspan="2" align="center">ຂັ້ນຕອນທີ 1 ຜົນໄດ້ຮັບທີ່ຕ້ອງການ (Desired Results)</td></tr>
<tr><td colspan="2">ເປົ້າໝາຍລວມ (Goal)<br>- ເພື່ອໃຫ້ຜູ້ຮຽນເກີດມີຄວາມມັກໃນການຟັງ<br>- ເພື່ອໃຫ້ຜູ້ຮຽນມີຄວາມຮູ້ຄວາມເຂົ້າໃຈໃນການສອນທັກສະການຟັງ<br>- ເພື່ອໃຫ້ຜູ້ຮຽນທີ່ຮຽນຈົບສາມາດນຳໃຊ້ໄດ້ເຂົ້າໃນການສອນໃນອະນາຄົດ</td></tr>
<tr><td>ຄວາມເຂົ້າໃຈ(Understanding)<br>ເພື່ອໃຫ້ນັກຮຽນສາມາດ:<br>- ອະທິບາຍຫຼັກການສອນພາສາລາວໃນຊັ້ນມັດທະຍົມໄດ້<br>- ອະທິບາຍທັກສະສຳຄັນຂອງຄູໃນການສອນພາສາລາວ<br>- ຈຳແນກໄດ້ການສອນພາສາລາວແບບເດີມກັບການສອນພາສາລາວແບບໃຫ້ຮູ້ຄວາມໝາຍ</td><td>ຄຳຖາມຫຼັກ (Question)<br>1:ຫຼັກການສອນພາສາລາວຊັ້ນມັດທະຍົມມີຫຼັກການໃດແດ່?ອະທິບາຍ<br>2.ຈົ່ງອະທິບາຍທັກສະທີ່ສຳຄັນຂອງຄູໃນການສອນພາສາລາວ?<br>3.ການຈັດການຮຽນ-ການສອນພາສາລາວມີຄວາມສຳຄັນແນວໃດ?<br>4.ໃນການຈັດການຮຽນ-ການສອນພາສາລາວແມ່ນເນັ້ນໃສ່ບັນຫາໃດເປັນຕົ້ນຕໍ? ອະທິບາຍ<br>5.ວິທີການສອນພາສາລາວແບບເດີມກັບການສອນພາສາລາວແບບໃຫ້ຮູ້ຄວາມໝາຍຕ່າງກັນແນວໃດ?</td></tr>
<tr><td>ຄວາມຮູ້(Knowledge)<br>ນັກຮຽນຮູ້:<br>- ຫຼັກການສອນພາສາລາວຊັ້ນມັດທະຍົມ<br>- ທັກສະທີ່ສຳຄັນຂອງຄູໃນການສອນພາສາລາວ<br>- ຄວາມສາຄັນໃນການຈັດການຮຽນ-ການສອນພາສາລາວ<br>- ປຽບທຽບວິທີການສອນພາສາລາວແບບເດີມກັບການສອນພາສາລາວແບບໃຫ້ຮູ້ຄວາມໝາຍ</td><td>ທັກສະ(Skills)<br>ນັກຮຽນ<br>- ອະທິບາຍໄດ້ຫຼັກການສອນພາສາລາວຊັ້ນມັດທະຍົມ<br>- ອະທິບາຍໄດ້ທັກສະທີ່ສຳຄັນຂອງຄູໃນການສອນພາສາລາວ<br>- ອະທິບາຍ ແລະ ເຂົ້າໃຈໄດ້ຄວາມສາຄັນໃນການຈັດການຮຽນ-ການສອນພາສາລາວ<br>- ຈຳແນກໄດ້ວິທີການສອນພາສາລາວແບບເດີມກັບການສອນພາສາລາວແບບໃຫ້ຮູ້ຄວາມໝາຍ</td></tr>
<tr><td colspan="2" align="center">ຂັ້ນຕອນທີ 2 (ຫຼັກຖານການປະເມີນ(Evidence).</td></tr>
</table>

| ➢ **ໜ້າວຽກ / ກິດຈະກຳ(Task)** | ➢ **ຫຼັກຖານອື່ນໆ (Other Evidence)** |
|---|---|
| - ຄູຖາມຄືນປະສົບການທີ່ຮຽນຜ່ານມາ<br>- ຈັດແບ່ງກຸ່ມ<br>- ຄູໃຫ້ນັກຮຽນສ້າງແຜນວາດຊ່ວຍຈື່ | - ບົດສອນ<br>- ຜົນຈາກການຖາມ-ຕອບ<br>- ລາຍງານກຸ່ມ<br>- ຈາກການທົດສອບ |
| ຂັ້ນຕອນທີ 3 ແຜນການສອນ | |

**I. ຂັ້ນນຳ** ເວລາ 5 ນາທີ

- ຄູແລະນັກຮຽນທຳຄວາມເຄົາລົບເຊິ່ງກັນ ແລະ ກັນ.
- ກວດກາຄວາມເປັນລະບຽບພາຍໃນຫ້ອງ.
- ກວດກາຈຳນວນພົນ ເຕັມ....ຄົນ,ຍິງ....ຄົນ,ຂາດ....ຄົນ.
- ຄູສະເໜີແຂກເຂົ້າຮ່ວມ ( ຖ້າມີ )
- ທວນຄືນບົດຮຽນເກົ່າເພື່ອລ້ຽວເຂົ້າສູ່ບົດຮຽນໃໝ່
- ຄຳຖາມ
  1. ຜ່ານມາທຸກຄົນເຄີຍເຫັນປຶ້ມແບບຮຽນ ແລະ ປຶ້ມຄູ່ມືຄູບໍ?
- ຄູໃຫ້ນັກຮຽນຕອບ 1-2 ຄົນ.
- ຄູສັງລວມຄຳຕອບຂອງນັກຮຽນແລ້ວສະຫຼຸບບົດຮຽນໃຫ້ນັກຮຽນຟັງ
- ລ້ຽວເຂົ້າບົດໃໝ່ ໂດຍຄູຕັ້ງຄຳຖາມ
- ໃນເວລາຄູອະທິບາຍເລື່ອງໃດເລື່ອງໜຶ່ງຕໍ່ໜ້າຜູ້ຮຽນເອີ້ນວ່າຫຍັງ?

**II.ຂັ້ນສອນ** (ເວລາ 30 ນາທີ )

-ຄູແບ່ງກະດານອອກເປັນ 2 ສ່ວນ:

-ຄູຂຽນຫົວບົດໃສ່ກະດານ

ວິຊາ: ວິທີສອນພາສາລາວ1

ບົດທີ1 : ແນວຄິດພື້ນຖານກ່ຽວກັບການຮຽນ-ການສອນພາສາລາວ

- **ຂັ້ນຕອນທີ1**: ປະກອບເປັນກຸ່ມນ້ອຍໆ ( ເວລາ 5 ນາທີ)
- ຄູແບ່ງນັກຮຽນອອກເປັນ 5 ກຸ່ມ.
- ກຸ່ມລະ 5 ຄົນ. ໂດຍໃຫ້ນັກຮຽນຈົກສະຫຼາກເອົາຕົວເລກ 1-5.
- ນັກຮຽນຈົກສະຫຼາກແລ້ວຄູແນະນຳເຂົ້າກຸ່ມ.
- **ຂັ້ນຕອນທີ 2**: ເລືອກຜູ້ບັນທຶກ ( 3 ນາທີ )

- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມເລືອກຜູ້ບັນທຶກກຸ່ມໃຜລາວກຸ່ມລະ 1 ຄົນ.
- **ຂັ້ນຕອນທີ 3:** ເຮັດກິດຈະກຳໃຫ້ສຳເລັດ (20 ນາທີ )
- ຄູມອບຄຳຖາມໃຫ້ແຕ່ລະກຸ່ມ.

ກຸ່ມທີ 1:ຫຼັກການສອນພາສາລາວຊັ້ນມັດທະຍົມມີຫຼັກການໃດແດ່?ອະທິບາຍ

ໃຫ້ສະຫຼູບດ້ວຍການນຳໃຊ້ແຜນວາດຊ່ວຍຈື່

ກຸ່ມທີ 2:

2.ຈົ່ງອະທິບາຍທັກສະທີ່ສຳຄັນຂອງຄູໃນການສອນພາສາລາວ?

- ໃຫ້ສະຫຼູບດ້ວຍການນຳໃຊ້ແຜນວາດຊ່ວຍຈື່

ກຸ່ມທີ 3:

3.ໃຫ້ພາສາລາວມີຄວາມສຳຄັນແນວໃດ?

- ສະຫຼູບດ້ວຍແຜນວາດຊ່ວຍຈື່

ກຸ່ມທີ4

4.ໃນການຈັດການຮຽນ-ການສອນພາສາລາວແມ່ນເນັ້ນໃສ່ບັນຫາໃດເປັນຕົ້ນຕໍ? ອະທິບາຍ

- ສະຫຼູບດ້ວຍແຜນວາດຊ່ວຍຈື່

ກຸ່ມທີ5

5.ວິທີການສອນພາສາລາວແບບເດີມກັບການສອນພາສາລາວແບບໃຫ້ຮູ້ຄວາມໝາຍຕ່າງກັນແນວໃດ?

- ສະຫຼູບດ້ວຍແຜນວາດຊ່ວຍຈື່
- ຂັ້ນຕອນທີ 4: ເລືອກຜູ້ນຳສະເໜີຄົນໜຶ່ງ ຫຼື ຫຼາຍກວ່ານັ້ນ. (30 ນາທີ)
- ໃຫ້ແຕ່ລະກຸ່ມນຳເອົາຜົນງານຂອງຕົນອອກໄປວາງສະແດງ
- ຄູແນະນຳແຕ່ລະກຸ່ມເລາະເບິ່ງກິດຈະກຳຂອງແຕ່ລະກຸ່ມທີ່ປະຕິບັດ
- ຄູແນະນຳນັກຮຽນກຸ່ມລະ1 ຄົນປະຈຳຢູ່ກຸ່ມຂອງຕົນເພື່ອອະທິບາຍໃຫ້ກຸ່ມອື່ນເຂົ້າໃຈ
- ຄູຕິດຕາມການລາຍຂອງນັກຮຽນແຕ່ລະກຸ່ມ.
- ຄູເປີດໂອກາດໃຫ້ແຕ່ລະກຸ່ມແລກປ່ຽນຄຳເຫັນກ່ຽວກັບຂໍ້ຂ້ອງໃຈເພື່ອແລກປ່ຽນຄວາມຮູ້.

ຂັ້ນຕອນທີ 5: ລາຍງານໃຫ້ກຸ່ມໃຫ່ຍ.

- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມຂຽນຄຳເຫັນໃສ່ແຕ່ລະກຸ່ມ ຫຼື ຂຽນໃສ່ເຈ້ຍແລ້ວຕິດໃສ່ກິດຈະກຳກຸ່ມ
- ຄູເປັນຜູ້ບັນທຶກ
- ຕ່າງໜ້າກຸ່ມລາຍງານຕໍ່ໜົດຫ້ອງ
- **ຂັ້ນຕອນທີ 6**: ຊ້ອງເວລາຕັ້ງຄຳຖາມ.
- ຄູສົນທະນາກ່ຽວກັບຈຸດສຳຄັນຂອງເນື້ອນບົດຮຽນ.
- ຄູສະຫຼູບຄືນຈຸດສຳຄັນຂອງເນື້ອໃນບົດຮຽນ.

**III.ຂັ້ນສະຫຼຸບ** ( 5ນາທີ)

- ຄູສະຫຼຸບບົດຮຽນຄືນເນື້ອໃນບົດຮຽນທີ່ຮຽນມາ.

**IV. ຂັ້ນວັດ ຜົນ** ( 5ນາທີ)

- ຄູຕັ້ງຄຳຖາມ

  1.ຈົ່ງອະທິບາຍທັກສະທີ່ສຳຄັນຂອງຄູໃນການສອນພາສາລາວ?ນັກຮຽນ 1 – 2 ຄົນຕອບ

**V.ມອບວຽກບ້ານ ແລະ ຕັກເຕືອນ**

- ໃຫ້ນັກຮຽນສຶກສາອ່ານເນື້ອໃນບົດຮຽນຄືນ

**ຜົນໄດ້ຮັບ**

ນັກຮຽນ:

- ອະທິບາຍໄດ້ຫຼັກການສອນພາສາລາວຊັ້ນມັດທະຍົມ
- ອະທິບາຍທັກສະທີ່ສຳຄັນຂອງຄູໃນການສອນພາສາລາວ
- ອະທິບາຍ ແລະ ເຂົ້າໃຈໄດ້ຄວາມສາຄັນໃນການຈັດການຮຽນ-ການສອນພາສາລາວ
- ຈຳແນກໄດ້ວິທີການສອນພາສາລາວແບບເດີມກັບການສອນພາສາລາວແບບໃຫ້ຮູ້ຄວາມໝາຍ

ວັນທີ......................... ວັນທີ.....................

ຄູປະຈຳວິຊາ ຜູ້ສອນ

ບົດສອນທີ1

ວິຊາ: ວັນນະຄະດີ ຊັ້ນ ມ5

ພາກທີII: ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍກອງ ເວລາ 2 ຊົ່ວໂມງ

ບົດທີ9: ຄຳຜະຫຍາ

<table>
<tr><td colspan="2" align="center">ຂັ້ນຕອນທີ 1 ຜົນໄດ້ຮັບທີ່ຕ້ອງການ</td></tr>
<tr><td colspan="2">➢ ເປົ້າໝາຍລວມ<br>- ເພື່ອໃຫ້ນັກຮຽນເກີດມີແນວຄິດມັກໃນຄຳຜະຫຍາ<br>- ເພື່ອໃຫ້ນັກຮຽນ ອະທິບາຍເນື້ອໃນຂອງຄຳຜະຫຍາໄດ້<br>- ເພື່ອໃຫ້ນັກຮຽນນຳໃຊ້ໃນຊີວິດປະຈຳວັນໄດ້</td></tr>
<tr><td>➢ ຄວາມເຂົ້າໃຈ<br>• ນັກຮຽນ<br>- ໃຫ້ນັກຮຽນບອກໄດ້ກ່ຽວກັບຄວາມໝາຍ ແລະຈຸດພິເສດຂອງຄຳຜະຫຍາ<br>- ໃຫ້ນັກຮຽນອະທິບາຍກ່າໄດ້ກ່ຽວກັບເນື້ອໃນຂອງຄຳຜະຫຍາ</td><td>➢ ຄຳຖາມຫຼັກ<br>1. ຄຳຜະຫຍາແມ່ນຫຫຍັງ ? ຈົ່ງອະທິບາຍໃຫ້ແຈ້ງ.<br>2. ຄຳຜະຫຍາມີຈຸດພິເສດແນວໃດ? ຈົ່ງອະທິບາຍໃຫ້ລະອຽດ.<br>3. ຄຳຜະຫຍາມີເນື້ອໃນເວົ້າເຖິງຫຍັງແດ່ ?</td></tr>
<tr><td>➢ ຄວາມຮູ້<br>• ນັກຮຽນຮູ້:<br>- ຮູ້ຄວາມໝາຍ ແລະ ຈຸດພິເສດຂອງຄຳຜະຫຍາ<br>- ຮູ້ເນື້ອໃນຂອງຄຳຜະຫຍາ</td><td>➢ ທັກສະ<br>• ນັກຮຽນສາມາດອະທິບາຍ:<br>- ອະທິບາຍຄວາມໝາຍ ແລະ ຈຸດພິເສດຂອງຄຳຜະຫຍາ<br>- ອະທິບາຍເນື້ອໃນຂອງຄຳຜະຫຍາ</td></tr>
<tr><td colspan="2" align="center">ຂັ້ນຕອນທີ 2 ຫຼັກຖານການປະເມີນ</td></tr>
<tr><td>➢ ໜ້າວຽກທີ່ປະຕິບັດ<br>- ທວນຄືນບົດຮຽນເກົ່າ<br>- ຄູສົນທະນາຖາມ-ຕອບກັບນັກຮຽນ<br>- ຄູອ່ານຄຳຜະຍາໃຫ້ນັກຮຽນຟັງ<br>- ຈັດແບ່ງກຸ່ມ<br>- ຄູໃຫ້ນັກຮຽນແຕ້ມແຜນວາດຊ່ວຍຈື່</td><td>➢ ຫຼັກຖານອື່ນໆ<br>- ບົດສອນ<br>- ປຶ້ມຄູ່ມືຄູ ແລະ ປຶ້ມແບບຮຽນ<br>- ຜົນຈາກການຖາມ-ຕອບ<br>- ນັກຮຽນຈົດບົດຮຽນ<br>- ຈາກການທົດສອບ</td></tr>
<tr><td colspan="2" align="center">ຂັ້ນຕອນທີ 3 ແຜນການສອນ</td></tr>
</table>

I. **ຂັ້ນນຳ** ເວລາ 5 ນາທີ

- ຄູແລະນັກຮຽນທຳຄວາມເຄົາລົບເຊິ່ງກັນ ແລະ ກັນ.
- ກວດກາຄວາມເປັນລະບຽບພາຍໃນຫ້ອງ.
- ກວດກາຈຳນວນພົນ ເຕັມ....ຄົນ,ຍິງ....ຄົນ,ຂາດ....ຄົນ.

- ຄູສະເໜີຊື່ ແລະ ຈຸດພິເສດ ( ຖ້າເປັນຄູໃໝ່ )
- ຄູສະເໜີແຂກເຂົ້າຮ່ວມ ( ຖ້າມີ )
- ທວນຄືນບົດຮຽນເກົ່າເພື່ອລ້ຽວເຂົ້າສູ່ບົດຮຽນໃໝ່
- ຄຳຖາມ
    1. ຄຳສຸພາສິດມີຄວາມໝາຍແນວໃດ?
- ຄູໃຫ້ນັກຮຽນຕອບ 1-2 ຄົນ.
- ຄູສັງລວມຄຳຕອບຂອງນັກຮຽນແລ້ວສະຫຼູບບົດຮຽນໃຫ້ນັກຮຽນຟັງ

ຄຳຕອບ: ຄຳສຸພາສິດແມ່ນຄຳເວົ້າທີ່ຈີບງາມ ແລະ ຖືກຕ້ອງເປັນຄຳເວົ້າທີ່ສັ້ນ,ກະທັດຮັດ ແຕ່ມີຄວາມໝາຍເລິກເຊິ່ງ ໂດຍແມ່ນປະຊາຊົນຊາວຜູ້ອອກແຮງງານບັນດາເຜົ່າເປັນຜູ້ປະດິດແຕ່ງຂຶ້ນາແຕ່ບູຮານນະການ ເພື່ອເປັນຄຳສັ່ງສອນ ແລະ ເປັນຄະຕິເຕືອນໃຈໃຫ້ແກ່ຊາວຜູ້ອອກແຮງໃຊ້ໃນການດຳລົງຊີວິດປະຈຳວັນ ຢ່າງຖືກ້ອງແລະເໝາະສົມ.

II. **ຂັ້ນສອນ** (ເວລາ 80 ນາທີ )

-ຄູແບ່ງກະດານອອກເປັນ 2 ສ່ວນ:

-ຄູຂຽນຫົວບົດໃສ່ກະດານ

ພາກທີII ວັນນະຄະດີພື້ນເມືອງລາວປະເພດຄຳຮ້ອຍກອງ

ບົດທີ 9: ຄາຜະຫຍາ

- **ຂັ້ນຕອນທີ1**: ປະກອບເປັນກຸ່ມນ້ອຍໆ ( ເວລາ 5 ນາທີ)
- ຄູແບ່ງນັກຮຽນອອກເປັນ 3 ກຸ່ມ.
- ກຸ່ມລະ 5 ຄົນ. ໂດຍໃຫ້ນັກຮຽນເລືອກເອົາຮູບດອກໄມ້ຕາມທີ່ຕົນມັກ.
- ນັກຮຽນເລືອກດອກໄມ້ຕາມຄູແນະນຳ ແລ້ວ ແນະນຳເຂົາເຂົ້າກຸ່ມ.
- **ຂັ້ນຕອນທີ 2**: ເລືອກຜູ້ບັນທຶກ ( 3 ນາທີ )
- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມເລືອກຜູ້ບັນທຶກກຸ່ມໃຜລາວກຸ່ມລະ 1 ຄົນ.
- **ຂັ້ນຕອນທີ 3:** ເຮັດກິດຈະກຳໃຫ້ສຳເລັດ (20 ນາທີ )
- ຄູມອບຄຳຖາມໃຫ້ແຕ່ລະກຸ່ມ.

❖ ກຸ່ມທີ 1:

1. ຄຳຜະຫຍາແມ່ນຫຫຍັງ ? ຈົ່ງອະທິບາຍໃຫ້ແຈ້ງ.
2. ຄຳຜະຫຍາມີຈຸດພິເສດແນວໃດ? ຈົ່ງອະທິບາຍໃຫ້ລະອຽດ.
3. ຄຳຜະຫຍາມີເນື້ອໃນເວົ້າເຖິງຫຍັງແດ່ ?

- ໃຫ້ສະຫຼູບດ້ວຍການນຳໃຊ້ແຜນວາດຊ່ວຍຈື່

❖ ກຸ່ມທີ 2:

1. ຄຳຜະຫຍາແມ່ນຫຫຍັງ ? ຈົ່ງອະທິບາຍໃຫ້ແຈ້ງ.
2. ຄຳຜະຫຍາມີຈຸດພິເສດແນວໃດ? ຈົ່ງອະທິບາຍໃຫ້ລະອຽດ.
3. ຄຳຜະຫຍາມີເນື້ອໃນເວົ້າເຖິງຫຍັງແດ່ ?

- ໃຫ້ສະຫຼູບດ້ວຍການນຳໃຊ້ແຜນວາດຊ່ວຍຈື່

❖ ກຸ່ມທີ 2:

1. ຄຳພະຫຍາແມ່ນຫຫຍັງ ? ຈົ່ງອະທິບາຍໃຫ້ແຈ້ງ.
2. ຄຳພະຫຍາມີຈຸດພິເສດແນວໃດ? ຈົ່ງອະທິບາຍໃຫ້ລະອຽດ.
3. ຄຳພະຫຍາມີເນື້ອໃນເວົ້າເຖິງຫຍັງແດ່ ?

- ໃຫ້ສະຫຼຸບດ້ວຍແຜນວາດຊ່ວຍຈື່

❖ ກຸ່ມທີ 3:

1. ຄຳພະຫຍາແມ່ນຫຫຍັງ ? ຈົ່ງອະທິບາຍໃຫ້ແຈ້ງ.
2. ຄຳພະຫຍາມີຈຸດພິເສດແນວໃດ? ຈົ່ງອະທິບາຍໃຫ້ລະອຽດ.
3. ຄຳພະຫຍາມີເນື້ອໃນເວົ້າເຖິງຫຍັງແດ່ ?

- ໃຫ້ສະຫຼຸບດ້ວຍການນຳໃຊ້ແຜນວາດຊ່ວຍຈື່

- **ຂັ້ນຕອນທີ 4**: ເລືອກຜູ້ນຳສະເໜີຄົນໜຶ່ງ ( 2 ນາທີ)
- ຄູແນະນຳແຕ່ລະກຸ່ມເລືອກຜູ້ນຳສະເໜີກຸ່ມລະ 1 – 2 ຄົນ
- **ຂັ້ນຕອນທີ 5**: ລາຍງານໃຫ້ກຸ່ມໃຫ່ຍ. ( 30 ນາທີ )
- ໃຫ້ແຕ່ລະກຸ່ມອອກມາລາຍກິດຈະກຳທີ່ປະຕິບັດ
- ຄູແນະນຳນັກຮຽນກຸ່ມອື່ນຕິດການລາຍງານຂອງກຸ່ມອື່ນ
- ຄູຕິດຕາມການລາຍຂອງນັກຮຽນແຕ່ລະກຸ່ມ.
- ຄູເປີດໂອກາດໃຫ້ແຕ່ລະກຸ່ມແລກປ່ຽນຄຳເຫັນກ່ຽວກັບຂໍ້ຂ້ອງໃຈເພື່ອແລກປ່ຽນຄວາມຮູ້.
- **ຂັ້ນຕອນທີ 6**: ຊ້ວງເວລາຕັ້ງຄຳຖາມ.
- ຄູສົນທະນາກ່ຽວກັບຈຸດສຳຄັນຂອງເນື້ອນບົດຮຽນ.
- ຄູສະຫຼູບຄືນຈຸດສຳຄັນຂອງເນື້ອໃນບົດຮຽນ.
- ເນື້ອໃນຂອງຄຳພະຫຍາ.

**III.ຂັ້ນສະຫຼູບ** ( 5 ນາທີ)

- ຄູສະຫຼຸບບົດຮຽນຄືນເນື້ອໃນບົດຮຽນທີ່ຮຽນມາ.

**IV.ຂັ້ນວັດຜົນ** ( 5 ນາທີ)

- **ທົດສອບ**

**V.ມອບວຽກບ້ານ ແລະ ຕັກເຕືອນ** (5 ນາທີ)

- **ມອບວຽກບ້ານ**
- ໃຫ້ນັກຮຽນແຕ່ງຄຳພະຫຍາຄົນລະ 2 ວັກ
- ຕັກເຕືອນ
- ໃຫ້ນັກຮຽນລະມັດລະວັງໃນການຂັບຂີ່ລົດ ,ມາໂຮງຮຽນໃຫ້ທັນມງທັນເວລາ.

ບົດສອນ

ວິຊາ ພາສາລາວ ຊັ້ນມ1

ບົດທີ: 1 ການອ່ານ ແລະ ປະເພດຂອງການອ່ານ ເວລາ 50 ນາທີ

1.ຈຸດປະສົງ

- ໃຫ້ນັກຮຽນສາມາດອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍ ແລະ ຄວາມສຳຄັນຂອງການອ່ານໄດ້

2.ເນື້ອໃນ

- ຄວາມໝາຍ ແລະ ຄວາມສຳຄັນຂອງການອ່ານ

3.ສື່ການສອນ

- ປື້ມແບບຮຽນພາສາລາວ ແລະ ຄູ່ມືຄູພາສາລາວ
- ເຈ້ຍບັດຄຳຖາມ

4.ກິດຈະກຳການຮຽນ-ການສອນ

- ຂັ້ນນຳເຂົ້າສູ່ບົດຮຽນ ( 5 ນາທີ )
- ທວນຄືນບົດຮຽນເກົ່າ

- ມື້ນີ້ແມ່ນຊົ່ວໂມງທຳອິດຂອງການຮຽນພາສາລາວຂັ້ນມ1 ນັກຮຽນຈຳນວນຫຼາຍເຄີຍຫ້ອງດຽວກັນຢູ່ຊັ້ນປະຖົມ ແລະ ອີກຈຳນວນໜຶ່ງອາດມາຈາກປະຖົມແຫ່ງອື່ນໆ. ສະນັ້ນ, ຄູຢາກວ່າ:ຄູຕັ້ງຄຳຖາມ: 1. ຜ່ານມາພວກນ້ອງໄດ້ຮຽນຮູ້ຫຍັງແດ່ກ່ຽວກັບພາສາລາວ?

- ນັກຮຽນ 3 – 4 ຄົນຕອບຕາມຄວາມເຂົ້າໃຈ

ຄຳຖາມ2: ນັກຮຽນເຄີຍໄດ້ຍິນຄຳວ່າທັກສະການຮຽນຮູ້ພາສາລາວ ຫຼື ບໍ່? ມີທັກສະໃດແດ່?

- ນັກຮຽນ 3 – 4 ຄົນຕອບຕາມຄວາມເຂົ້າໃຈ
- ຄູສະຫຼຸບຄືນ

- ຂັ້ນສອນ ( 35 ນາທີ )

**❖ ຂັ້ນຕອນທີ1 ໃຫ້ຄຳບັນຍາຍ**

ຄູສະເໜີກ່ຽວກັບຄວາມສຳຄັນຂອງວິຊາພາສາລາວ(ວິຊາພາສາລາວເປັນວິຊາໜຶ່ງທີ່ມີຄວາມສຳຄັນທີ່ສຸດຈັດເຂົ້າໃນຫຼັກສູດການຮຽນການສອນບໍ່ວ່າຢູ່ໃນຊັ້ນປະຖົມສຶກສາຈົນເຖິງຂັ້ນມະຫາວິທະຍາໄລ ແລະ ພາສາລາວຍັງເປັນພາສາປະຈຳຊາດ, ເປັນພາສາທາງການທີ່ມີຄວາມສຳຄັນເພາະເຮົານຳໃຊ້ພາສາລາວເພື່ອເປັນເຄື່ອງມືໃນການຕິດຕໍ່ສື່ສານໃນການພົວພັນສັງຄົມລະຫວ່າງປະຊາຊົນບັນດາເຜົ່າຕ່າງໆງນທົ່ວປະເທດລາວ. ນອກນັ້ນ, ຍັງນຳໃຊ້ເຂົ້າໃນປື້ມຂຽນຕຳລາວິຊາການ, ຖ່າຍທອດຄວາມຮູ້, ປະສົບການ, ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດມາສູ່ລູກຫຼານໃນປັດຈຸບັນ ແລະ ອະນາຄົດ. ການຮຽນພາສາລາວແມ່ນການຮຽນເອົາຄວາມຮູ້ດ້ານພາສາໂດຍຜ່ານການຟັງ, ການເວົ້າ, ການອ່ານ ແລະ ການຂຽນ ເພື່ອໃຫ້ເດັກທຸກຄົນອ່ານອອກຂຽນໄດ້ ແລະ ນຳໃຊ້ພາສາລາວໄດ້ຢ່າງຄ່ອງແຄ້ວເພື່ອຄວາມກ້າວໜ້າທາງດ້ານການຮຽນ, ການເຮັດວຽກງານ ແລະ ການດຳລົງຊີວິດທີ່ດີໃນອະນາຄົດ)

- ຄູສະເໜີກ່ຽວກັບຈຸດປະສົງຂອງການຮຽນໃນຊົ່ວໂມງນີ້(ໃຫ້ນັກຮຽນສາມາດອະທິບາຍ ແລະ ສະແດງໃຫ້ເຫັນຄວາມໝາຍ ແລະ ຄວາມສຳຄັນຂອງການອ່ານໄດ້ )

**❖ ຂັ້ນຕອນທີ2 ມອບກິດຈະກຳ**

- ຄູແບ່ງນັກຮຽນອອກເປັນ 3 ກຸ່ມ, ກຸ່ມລະ 5 ຄົນ

- ຄູໃຫ້ນັກຮຽນເລືອກເອົາຮູບດອກໄມ້ທີ່ຄູກຽມມາແລ້ວໃຫ້ນັກຮຽນເຂົ້າກຸ່ມຕາມທີ່ຕົນເລືອກໄດ້
- ນັກຮຽນເຂົ້າກຸ່ມແລ້ວຄູແນະນໍາກ່ຽວກັບກິດຈະກໍາທີ່ແຕ່ລະກຸ່ມຈະປະຕິບັດ

❖ **ຂັ້ນຕອນທີ3 ນັກຮຽນປະຕິບັດກິດຈະກໍາ**

- ຄູມອບກິດຈະກໍາໃຫ້ແຕ່ລະກຸ່ມ

  ກຸ່ມທີ1:

  ຄໍາຖາມ 1. ຄວາມໝາຍຂອງການອ່ານແມ່ນຫຍັງ?

  ກຸ່ມທີ2:

  ຄໍາຖາມ2. ການອ່ານມີຄວາມສໍາຄັນແນວໃດ?

  ກຸ່ມທີ3:

  ຄໍາຖາມ3. ການອ່ານມີຄວາມສໍາຄັນຕໍ່ຜູ້ອ່ານແນວໃດ?

- ໃຫ້ແຕ່ລະກຸ່ມຂຽນຄໍາຕອບໃສ່ເຈ້ຍຕາມຄວາມເຂົ້າໃຈທີ່ຕົນສົນທະນາກັນ

❖ **ຂັ້ນຕອນທີ4 ນໍາສະເໜີ**

- ເມື່ອແຕ່ລະກຸ່ມປະຕິບັດກິດຈະກໍາສໍາເລັດແລ້ວໃຫ້ແຕ່ລະກຸ່ມແຂ່ງຂັນກັນອອກມາຕິດຜົນງານຂອງຕົນ
- ຄູສະເໜີໃຫ້ຕ່າງໜ້າໃຫ້ແຕ່ລະກຸ່ມຂຶ້ນນໍາສະເໜີໜ້າວຽກທີ່ປະຕິບັດ
- ຄູແນະນໍາໃຫ້ແຕ່ລະກຸ່ມຕິດຕາມການລາຍງານ ແລະ ຖາມ ຫຼື ປະກອບຄໍາເຫັນໃສ່
- ຂັ້ນຕອນທີ5 ສົນທະນາ ແລະ ສະທ້ອນແລກປ່ຽນຄໍາເຫັນ
- ຄູສົນທະນາກັບນັກຮຽນໂດຍອີງໃສ່ການນໍາສະເໜີຂອງແຕ່ລະກຸ່ມ
- ແນະນໍານັກຮຽນແລກປ່ຽນກັນຕອບ

✚ ຂັ້ນສະຫຼຸບ ( 5ນາທີ )

- ຄູສະຫຼຸບຄືນກ່ຽວກັບຄວາມໝາຍຂອງການອ່ານ ແລະ ຄວາມສໍາຄັນຂອງການອ່ານ
- ແນະນໍານັກຮຽນບັນທຶກຄໍາຕອບໃສ່ປຶ້ມຂຽນຂອງຕົນ

✚ ຂັ້ນວັດຜົນ ( 5 ນາທີ )

  ຄູຖາມຄືນ:

  1. ການອ່ານມີຄວາມສໍາຄັນແນວໃດຕໍ່ກັບຜູ້ອ່ານ?

- ນັກຮຽນຕອບ
- ຄູສະຫຼຸບຄໍາຕອບຂອງນັກຮຽນ

✚ ມອບວຽກບ້ານ ແລະ ຕັກເຕືອນ

## ເອກະສານອ້າງອີງ

1. ແບບຮຽນວັດ ແລະ ປະເມີນຜົນ ສໍາລັບໂຮງຮຽນສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ກະຊວງສຶກສາທິການກົມສ້າງຄູ, ສູນພັດທະນາຄູ 2009.

2. ແບບຮຽນພາສາລາວຊັ້ນມັດທະຍົມສຶກສາ ປີທີ 5, 6,7 ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ 2016.
3. ແບບຮຽນຫຼັກການມັດທະຍົມ ສຳລັບໂຮງຮຽນສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ກະ ຊວງສຶກສາທິການກົມສ້າງຄູ, ສູນພັດທະນາຄູ 2009.

| | |
|---|---|
| ລະບົບ/ພາກຮຽນ | ລະບົບ 4 ປີ (12+4) ພາກຮຽນທີ 1 ປີ 3 |
| ຈຳນວນຊົ່ວໂມງ | 80 ຊົ່ວໂມງ |
| ຄ່າໜ່ວຍກິດ | 3(1-4-2) |
| ອະທິບາຍໜ່ວຍກິດ | ວິຊານີ້ມີ 3 ໜ່ວຍກິດ. ມີຊົ່ວໂມງບັນຍາຍ 1 ຊົ່ວໂມງ/ ອາທິດ ແລະ ຊົ່ວໂມງປະຕິບັດຕົວຈິງ 4 ຊົ່ວໂມງ/ ອາທິດ. ລວມຊົ່ວຖມງທັງໝົດ 16 ອາທິດ ເທົ່າກັບ 80 ຊົ່ວໂມງ. |
| ຈຸດປະສົງ | ເມື່ອຮຽນວິຊານີ້ແລ້ວ ນັກຮຽນຄູສາມາດ:<br>- ຈຳແນກໂຄງປະກອບສ້າງຂອງຫຼັກສູດພາສາລາວ ຊັ້ນມັດທະຍົມໄດ້.<br>- ອະທິບາຍບັນດາເນື້ອໃນຂອງຫຼັກສູດພາສາລາວ ຊັ້ນມັດທະຍົມໄດ້.<br>- ວາງແຜນການ, ແນວທາງໃນການຈັດກິດຈະກຳການຮຽນ - ການສອນ ແລະ ວັດປະເມີນຜົນໄດ້ຢ່າງຖືກຕ້ອງ. |
| ເນື້ອໃນຫຍໍ້ | ວິຊານີ້ ສຶກສາກ່ຽວກັບຫຼັກການ, ວິທີການວິເຄາະຫຼັກສູດ ແລະ ດຳເນີນການວິເຄາະຫຼັກສູດພາສາລາວ - ວັນນະຄະດີຊັ້ນມັດທະຍົມແຕ່ມ 5 ຫາ ມ7 ເພື່ອເປັນພື້ນຖານໃຫ້ແກ່ການວາງແຜນ ການ, ແນວທາງໃນການຈັດກິດຈະກຳການຮຽນ - ການສອນ ແລະ ວັດປະເມີນຜົນໄດ້ຢ່າງຖືກຕ້ອງ. |
| ການດຳເນີນການສອນ | ວິຊານີ້ ມີ 4 ບົດ ເຊິ່ງດຳເນີນການສອນແມ່ນສົມທົບຫຼາຍວິທີປະສົມປະສານກັນ ເປັນຕົ້ນແມ່ນການອະທິບາຍ, ການສົນທະນາ, ການບັນຍາຍ, ກິດຈະກຳກຸ່ມ ເພື່ອວິເຄາະຫຼັກສູດພາສາລາວ-ວັນນະຄະດີຊັ້ນມັດທະຍົມ. |
| ອຸປະກອນ /ສື່ການສອນ | ຄອມພິວເຕີ, ເຄື່ອງສາຍ LCD, ບົດສອນ ແລະ ສື່ການສອນ |
| ວິທີປະເມີນ/ຮູບແບບການປະເມີນ | - ສັງເກດການມີສ່ວນຮ່ວມ<br>- ຖາມ-ຕອບ<br>- ການເຮັດວຽກກຸ່ມ<br>- ການລາຍງານກິດຈະກຳ |
| ອາທິດທີ 1 | **ບົດທີ 1 ຄວາມຮູ້ພື້ນຖານກ່ຽວກັບການວິເຄາະຫຼັກສູດ**<br>1. ຄວາມໝາຍຂອງຫຼັກສູດ<br>2. ຄວາມສຳຄັນຂອງຫຼັກສູດ<br>3. ໂຄງປະກອບຂອງຫຼັກສູດ<br>4. ລັກສະນະຫຼັກສູດທີ່ດີ<br>5. ຂະບວນການພັດທະນາຫຼັກສູດ |

| | |
|---|---|
| ອາທິດທີ 2 | **ບົດທີ 1 ( ຕໍ່ ) ຄວາມຮູ້ພື້ນຖານກ່ຽວກັບການວິເຄາະຫຼັກສູດ**<br>6. ຄວາມໝາຍຂອງການວິເຄາະຫຼັກສູດ<br>7. ຈຸດປະສົງຂອງການວິເຄາະຫຼັກສູດ<br>8. ຂັ້ນຕອນຂອງການວິເຄາະຫຼັກສູດ |
| ອາທິດທີ 3 | **ບົດທີ 1 ( ຕໍ່ ) ຄວາມຮູ້ພື້ນຖານກ່ຽວກັບການວິເຄາະຫຼັກສູດ**<br>9. ຜົນປະໂຫຍດຂອງການວິເຄາະຫຼັກສູດ<br>10. ວິທີວິເຄາະຫຼັກສູດ |
| ອາທິດທີ 4 | **ບົດທີ 2 ມາດຕະຖານການສອນ**<br>1. ຄວາມໝາຍຂອງມາດຕະຖານການສອນ<br>2. ຈຸດປະສົງຂອງມາດຕະຖານການສອນ |
| ອາທິດທີ 5 | **ບົດທີ 2 ( ຕໍ່) ມາດຕະຖານການສອນ**<br>3. ສາຍພົວພັນລະຫວ່າງມາດຕະຖານການສອນ ແລະ ສະມັດຖະພາບ |
| ອາທິດທີ 6 | **ບົດທີ 2 ( ຕໍ່)ມາດຕະຖານການສອນ**<br>4. ການນຳໃຊ້ມາດຕະຖານການສອນເພື່ອເປັນທິດທາງໃນການປັບປຸງການປະຕິບັດການສອນຂອງຄູ |
| ອາທິດທີ 7 | ບົດທີ 3 ວິເຄາະຫຼັກສູດພາສາລາວ - ວັນນະຄະດີ ຊັ້ນມັດທະຍົມ ປີທີ 5<br>1.ວິເຄາະຫຼັກສູດພາສາລາວ<br>2.ວິເຄາະຫຼັກສູດວັນນະຄະດີ |
| ອາທິດທີ8 | **ບົດທີ 2 (ຕໍ່)ວິເຄາະຫຼັກສູດພາສາລາວ - ວັນນະຄະດີ ຊັ້ນມັດທະຍົມ ປີທີ 5**<br>2.ລາຍງານຜົນການວິເຄາະຫຼັກສູດ |
| ອາທິດທີ9 | **ບົດທີ 2 ວິເຄາະຫຼັກສູດພາສາລາວ - ວັນນະຄະດີ ຊັ້ນມັດທະຍົມ ປີທີ 6**<br>1. ວິເຄາະຫຼັກສູດພາສາລາວ<br>2. ວິເຄາະຫຼັກສູດວັນນະຄະດີ |
| ອາທິດທີ10 | **ບົດທີ2 (ຕໍ່)ວິເຄາະຫຼັກສູດພາສາລາວ - ວັນນະຄະດີ ຊັ້ນມັດທະຍົມ ປີທີ 6**<br>2.ລາຍງານຜົນການວິເຄາະຫຼັກສູດ |
| ອາທິດທີ11 | **ບົດທີ 2 ວິເຄາະຫຼັກສູດພາສາລາວ - ວັນນຄະດີ ຊັ້ນມັດທະຍົມ ປີທີ 7**<br>1.ວິເຄາະຫຼັກສູດພາສາລາວ<br>2.ວິເຄາະຫຼັກສູດວັນນະຄະດີ |
| ອາທິດທີ12 | **ບົດທີ 2 (ຕໍ່)ວິເຄາະຫຼັກສູດພາສາລາວ - ວັນນະຄະດີ ຊັ້ນມັດທະຍົມ ປີທີ 7**<br>2.ລາຍງານຜົນການວິເຄາະຫຼັກສູດ |

| | |
|---|---|
| ອາທິດທີ 13 | **ບົດທີ3 ແຜນການສອນ**<br>1. ຄວາມໝາຍຂອງການວາງແຜນການສອນ<br>2. ຄວາມສຳຄັນຂອງການວາງແຜນການສອນ<br>3. ລັກສະນະຂອງການວາງແຜນການສອນ |
| ອາທິດທີ14 | **ບົດທີ3 ( ຕໍ່)ການວາງແຜນການສອນ**<br>4. ວິທີແຕ່ງບົດສອນ ແລະ ການສອນທົດລອງ |
| ອາທິດທີ15 | **ບົດທີ3 ( ຕໍ່)ການວາງແຜນການສອນ**<br>1.ແຕ່ງບົດສອນ<br>2.ສອນທດົລອງ |
| ອາທິດທີ 16 | ***ນຳພານັກສຶກສາທວນຄືນ*** |
| ການຕີລາຄາ ຜົນການຮຽນ | 1. ເຂົ້າຮ່ວມຮຽນ 10%<br>2. ລາຍງານບຸກຄົນ 20%<br>3. ລາຍງານກຸ່ມ 10%<br>4. ກວດກາກາງພາກ 20%<br>5. ສອບເສັງຈົບລາຍວິຊາ 40% |
| ເອກະສານອ້າງອີງ | 4. ແບບຮຽນວັດ ແລະ ປະເມີນຜົນ ສຳລັບໂຮງຮຽນສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ກະຊວງສຶກສາທິການກົມສ້າງຄູ, ສູນພັດທະນາຄູ 2009.<br>5. ແບບຮຽນພາສາລາວ ຊັ້ນມັດທະຍົມສຶກສາ ປີທີ 5, 6, 7 ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ 2008.<br>6. ແບບຮຽນຫຼັກການມັດທະຍົມ ສາລັບໂຮງຮຽນສ້າງຄູມັດທະຍົມຕົ້ນ ລະບົບ 3 ປີ, ກະ ຊວງສຶກສາທິການກົມສ້າງຄູ, ສູນພັດທະນາຄູ 2009. |